# ການສຶກສາການຈັດການຮຽນ-ການສອນ
# ແບບເຊິ່ງໜ້າ ແລະ ແບບອອນລາຍ
# ໃນວິທະຍາໄລຄູສາລະວັນ

ຜູ້ວິໄຈ: ນາງ ຫອມເພັດ ວໍລະສານ

ປອ ສຸພັນ ເທບພະວົງສາ

ວິທະຍາໄລຄູສາລະວັນ

**2023**

# ການສຶກສາການຈັດການຮຽນ-ການສອນ
# ແບບເຊີ່ງໜ້າ ແລະ ແບບອອນລາຍ
# ໃນວິທະຍາໄລຄູສາລະວັນ

ຜູ້ວິໄຈ: ນາງ ຫອມເພັດ ວໍລະສານ

ປອ ສຸພັນ ເທບພະວົງສາ

ທີ່ປຶກສາ: ອຈ ປທ ນາງ ສີງອຳໄພ ພິມພາພອນ

ວິທະຍາໄລຄູສາລະວັນ

**2023**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໑໑໑໑໑໑໑໑

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ...47.....ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າວິໃຈ

- ອີງຕາມ: ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.
- ອີງຕາມ: ແຜນປັບປຸງຄຸນນະພາບ QA ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ຂອງວິທະຍາໄລຄູສາລະວັນ.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຄົ້ນຄ້ວາການວິໃຈ ຫົວຂໍ້: ສຶກສາສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບທາງໄກ ຢູ່ວິທະຍາໄລຄູສາລະວັນ. ເຫັນວ່າ ທິດສະດີ ແລະ ເນື້ອໃນແທດເໝາະ, ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປື້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| ທ່ານ ອຈ ປທ ນາງ ສົງອຳໄພ ພົມພາພອນ | ................................................ |
| ທ່ານ ຊອ ປອ ໂພທອງ ພົງສົງຄາມ | ................................................ |
| ທ່ານ ຊອ ມອນໄຊ ຂັນທະຈັກ | ................................................ |

ທີ່, ສາລະວັນ, ວັນທີ 10 MAR 2023

ປະທານສະພາວິທະຍາສາດ

ອ.ຈ ນ. ສົມປອງ ແສນທະວິສາ

สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

# ໃບຮັບຮອງການກວດແກ້ການຄົ້ນຄວ້າວິໄຈ

## ຫົວຂໍ້: ຄົ້ນຄວ້າການວິໄຈ ສຶກສາສະພາບການຮຽນ-ການສອນແບບທາງໄກ ທີ່ວິທະຍາໄລຄູສາລະວັນ.

**ຊື່ຫົວຂໍ້: ສຶກສາສະພາບການຮຽນ-ການສອນແບບທາງໄກ ທີ່ວິທະຍາໄລຄູສາລະວັນ.**

**ຜູ້ຮຽບຮຽງປື້ມ**

ທ່ານ ປອ ສຸພັນ ເທບພະວົງສາ

ທ່ານ ນາງ ຫອມເພັດ ວໍລະສານ

**ຄະນະກຳມະການກວດແກ້ບົດ** **ລາຍເຊັນ**

ທ່ານ ອຈ ປທ ນາງ ສິງອຳໄພ ພິມພາພອນ .............................................

ທ່ານ ຊອ ປອ ໂພທອງ ພົງສີງຄາມ .............................................

ທ່ານ ຊອ ມອນໄຊ ຂັນທະຈັກ .............................................

10 MAR 2023

**ທີ່, ສາລະວັນ, ວັນທີ .........................**

**ຫົວໜ້າຫ້ອງການວິຊາການ**

สแกนด้วย CamScanner

# ໃບກຽດຕິຄຸນ

ການສຶກສາວິໄຈໃນຄັ້ງນີ້ສຳເລັດໄປດ້ວຍດີ ໃນນາມທີມງານວິໄຈ ຂໍຮູ້ບຸນຄຸນ ແລະ ຂອບໃຈຢ່າງສູງມາຍັງ ການຈັດຕັ້ງທີ່ໄດ້ສະໜັບສະໜູນ, ໃຫ້ການກະຕຸກຊຸກຍູ້ ແລະ ແນວທາງໃນການຄົ້ນຄວ້າ. ພິເສດກໍຮູ້ບຸນຄຸນ ແລະ ຂອບໃຈມາຍັງ ອຈ ປທ ນາງ ສີງອຳໄພ ພິມພາພອນ ເປັນອາຈານທີ່ປຶກສາ ທີ່ໄດ້ໃຫ້ຄຳປຶກສາ, ຊ່ວຍເຫຼືອ, ແນະນຳ ຕະຫຼອດທຸກໆເນື້ອໃນຂອງບົດທັງເຄື່ອງມື, ວິທີການຄົ້ນຄວ້າ, ການວິເຄາະ ແລະ ການສະຫຼູບຜົນການຄົ້ນຄວ້າ. ຂໍຂອບໃຈມາຍັງຄະນະກຳມະການທຸກໆທ່ານທີ່ໃຫ້ຂໍ້ສະເໜີແນະໃນການປັບປຸງແກ້ໄຂ ແລະ ຊີ້ທິດທາງດ້ວຍຄວາມເອົາໃຈໃສ່ ກໍ່ໃຫ້ເກີດປະໂຫຍດສູງສຸດສຳລັບບົດວິໄຈຄັ້ງນີ້, ບົດຄົ້ນຄວ້າເຫຼັ້ມນີ້ເປັນສ່ວນໜຶ່ງຂອງວຽກງານການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານກໍ່ສ້າງ ແລະ ພັດທະນາຄູໃຫ້ມີຄວາມເຂັ້ມແຂງຮອບດ້ານ ໂດຍສະເພາະແມ່ນດ້ານການຄົ້ນຄວ້າວິໄຈ ເຊິ່ງເປັນເສົາຫຼັກໃຫ້ແກ່ວຽກງານການປະຄຸນຄຸນນະພາບວຽກງານສ້າງຄູ ໃນວິທະຍາໄລຄູສາລະວັນ.

ທ້າຍສຸດນີ້, ທີມງານວິໄຈ ຈິ່ງຂໍອວຍພອນໄຊໃຫ້ພອນມາຍັງທຸກໆທ່ານ ຈົ່ງມີພະລະນາໄມທີ່ແຂງແຮງ ສົມບູນມີຄວາມສຸກສົມຫວັງໃນຊີວິດ ແລະ ປະສົບຜົນສຳເລັດໃນທຸກໜ້າທີ່ວຽກງານດ້ວຍເຖີດ.

ຫົວຂໍ້ວິໄຈ: **ສຶກສາສະພາບການຈັດຕັ້ງການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ຮູບແບບອອນໄລນ໌ ທີ່ ວິທະຍາໄລ ຄູສາລະວັນ**

ຜູ້ວິໄຈ: ນາງ ຫອມເພັດ ວໍລະສານ

ປອ ສຸພັນ ເທບພະວົງສາ

ທີ່ປຶກສາບົດວິໄຈ:

ອຈ ປທ ນາງ ສົງອຳໄພ ພິມພາພອນ

# ບົດຄັດຫຍໍ້

ຄຸນນະພາບຂອງການສຶກສາຄູຈະຂຶ້ນກັບປະສິດທິພາບຂອງການຈັດການຮຽນ-ການສອນ ເຊິ່ງວິທີການຈັດການຮຽນ-ການສອນໃນປະຈຸບັນໄດ້ປະກອບມີການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ອອນໄລນ໌. ການຈັດການຮຽນການສອນທັງສອງແບບໄດ້ເປັນຮູບບແບບໃໝ່ ທີ່ເປັນສິ່ງທ້າທາຍໃຫ້ແກ່ຄູຜູ້ສອນ ແລະ ນັກສຶກສາພາຍໃນວິທະຍາໄລຄູສາລະວັນ, ເພື່ອຕອບສະໜອງຕໍ່ສະພາບການປ່ຽນແປງຂອງສັງຄົມ ໂດຍສະເພາະການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ບົດບາດ, ຄຸນສົມບັດຂອງເຕັກໂນໂລຊີຂໍ້ມູນຂ່າວສານ ຈຶ່ງເຮັດໃຫ້ພວກເຮົາມີຮູບແບບການຈັດການຮຽນ-ການສອນທີ່ສອດຄ່ອງ ແລະ ເໝາະສົມທີ່ສຸດ. ຜ່ານການຈັດຕັ້ງປະຕິບັດສອງຮູບແບບການສອນດັ່ງກ່າວ, ການວິໄຈໃນຄັ້ງນີ້ຈຶ່ງມີ 2 ຈຸດປະສົງຄື: 1) ສຶກສາສະພາບການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ແລະ 2) ສຶກສາຄວາມເພິ່ງພໍໃຈ ຕໍ່ປະສິທິຜົນການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ວິທະຍາໄລຄູສາລະວັນ ເຊິ່ງນຳໃຊ້ວິທີການວິໄຈແບບສຳຫຼວດທີ່ປະສົມປະສານກັບການເກັບຂໍ້ມູນທັງດ້ານປະລິມານ ແລະ ຄຸນນະພາບ. ເປົ້າໝາຍກໍ່ແມ່ນຄູສອນ ແລະ ນັກສຶກສາປະຈຳສົກຮຽນ 2021-2022 ຈຳນວນທັງໝົດ 300 ທ່ານ, ຄູສອນ 70 ທ່ານ ແລະ ນັກສຶກສາ 230 ທ່ານຂອງວິທະຍາໄລຄູ ສາລະວັນ. ເຄື່ອງມືຄົ້ນຄວ້າໄດ້ແກ່: ແບບສອບສອບຖາມສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ອອນໄລນ ສຳລັບຄູ ແລະ ນັກສຶກສາຈຳນວນ 22 ລາຍການ, ແບບສອບຖາມຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນທັງສອງຮູບແບບຈຳນວນ 86 ລາຍການ.

ຜົນການວິໄຈພົບວ່າ:

1) ສະພາບການຈັດກິດຈະກຳການຮຽນ-ການສອນແບບເຊິ່ງໜ້າ ມີຂໍ້ສະດວກຫຼາຍດ້ານໃຫ້ແກ່ຄູສອນເຊັ່ນ: ການກະກຽມສື່ການຮຽນ-ການສອນ, ການສະແດງລັກສະນະທ່າທາງ, ການຕັ້ງຄຳຖາມ, ການສ້າງສະນະການ, ການສະຫຼຸບບົດຮຽນ ແລະ ການວັດຜົນ-ປະເມີນຜົນ, ຄູສອນ ແລະ ນັກສຶກສາໄດ້ມີຄຳເຫັນຢັ້ງຢືນໃນລະດັບຫຼາຍ.

2) ສະພາບການຈັດກິດຈະກຳການຮຽນ-ການສອນແບບອອນໄລນ໌ ແມ່ນຍັງມີຂໍ້ຫຍຸ້ງຍາກຫຼາຍດ້ານທັງດ້ານສິ່ງອຳນວຍຄວາມສະດວກ, ພື້ນຖານໂຄງລ່າງຂອງສະຖານການສຶກສາ ແລະ ຄວາມຮູ້ ຄວາມສາມາດໃນການນຳໃຊ້

ເຕັກໂນໂລຊີສຳລັບການຈັດການຮຽນ-ການສອນແບບອອນໄລນ໌ ຫຼື ແບບທາງໄກຂອງຄູສອນ ແລະ ນັກສຶກສາໃນລະດັບປານກາງ.

3) ຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນແບບເຊິ່ງໜ້າໃນລະດັບຫຼາຍ ແລະ ມີຄວາມເພິ່ງພໍໃຈຕໍ່ການຈັດການຮຽນ-ສອນແບບອອນໄລນໃນລະດັບປານກາງ.

**Thesis: The study on offline and online learning and teaching implementation at Salavan Teachers' Training College**

**Researcher: Mrs Homphet VORLASANE**
**Mr Souphanh THEPHAVONGSA**
**Advisor: Mrs Singamphai PHIMPHAPHONE**

# Abstract

The quality of teacher education depends on the effectiveness of teaching-learning management, which currently includes face-to-face and online teaching-learning. The management of both teaching and learning methods has become a new form that is a challenge for teachers and students in Salavan Teacher' Training College, to respond to the changing conditions of society. In order to respond to the changing conditions of society, especially the spread of the covid-19 disease and the role, properties of information technology, we have the most consistent and appropriate teaching-learning method. Through the implementation of these two teaching methods. This research has two objectives: 1) to study the organization of face-to-face and online teaching and learning and 2) to study the satisfaction with the effectiveness of face-to-face and online teaching and learning at Salavan Teacher Training College (TTC), which uses survey research methods that combine quantitative and qualitative data collection. The target is a total of 300 teachers and students for the 2021-2022 school year, 70 teachers and 230 students of Salavan TTC. The research tools are: 22-item face-to-face and online teaching-learning questionnaire for teachers and students, 86-item satisfaction questionnaire for both teaching and learning methods.

**Research result:**

1) The situation of teaching-learning activities in a face-to-face manner has many conveniences for teachers such as: preparation of teaching-learning materials, classroom management, asking for the questions, organizing the

activities, summarizing lessons and assessment and evaluation, both teachers and students have higher of affirmative comments.

2) The condition of organizing teaching-teaching online activities still has many difficulties in terms of facilities, infrastructure of educational facilities and the knowledge and ability to use technology for teaching online or distance teaching activities of teachers and students are at a moderate level.

3) Teachers and students are highly satisfied with face-to-face teaching method and moderately satisfied with teaching online method.

# ສາລະບານ

ບົດທີ1 ...... 1
ບົດນຳ ...... 1
1.1 ຄວາມເປັນມາ ແລະ ສະພາບບັນຫາຂອງການຄົ້ນຄວ້າ ...... 1
1.2 ຄຳຖາມການຄົ້ນຄວ້າ ...... 4
1.3 ຈຸດປະສົງຂອງການຄົ້ນຄວ້າ ...... 5
1.4 ສົມມຸດຕິຖານ. ...... 5
1.5 ຜົນຄາດວ່າຈະໄດ້ຮັບ. ...... 5
ພາກທີ 2 ...... 6
ທົບທວນເອກະສານ ແລະ ຂອບເຂດແນວຄິດ ...... 6
2.1. ຂອບຄວາມຄິດກ່ຽວກັບການຈັດການຮຽນ-ການສອນແບບເຊິ່ງໜ້າ. ...... 6
2.1.1. ຄວາມໝາຍຂອງການຈັດການຮຽນ-ການສອນແບບເຊິ່ງໜ້າ. ...... 6
2.1.2 ຫຼັກການ ການຈັດການຮຽນ-ການສອນແບບເຊິ່ງໜ້າ. ...... 6
2.1.3 ຄຸນນະພາບ ການຈັດການຮຽນ-ການສອນແບບເຊິ່ງໜ້າ ...... 7
2.2 ຂອບຄວາມຄິດກ່ຽວກັບການຈັດການຮຽນ-ການສອນແບບອອນໄລນ໌ ...... 8
2.2.1 ຄວາມໝາຍຂອງການຮຽນ-ການສອນແບບອອນໄລນ໌ ...... 8
2.2.2 ຫຼັກການ ການຮຽນ-ການສອນແບບອອນໄລນ໌ ...... 8
2.2.3 ປະສິດທິຜົນຂອງການຈັດການຮຽນ-ການສອນແບບອອນໄລນ໌ ...... 9
2.2.4 ຄວາມສາມາດໃນການຈັດຕັ້ງການສອນ ຮູບແບບອອນໄລນ໌ ...... 10
2.2.5 ປຽບທຽບລະຫວ່າງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ...... 10

2.3. ຂອບແນວຄວາມຄິດກ່ຽວກັບ ການຮຽນ-ການສອນຮູບແບບປະສົມປະສານ ..... 12
2.4. ບົດບາດຂອງຄູ ແລະ ນັກສຶກສາ ..... 12
2.5 ບົດບາດເທັກໂນໂລຊີກັບການພັດທະນາການສຶກສາ ..... 14
2.6 ສິ່ງທ້າທາຍໃນການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ..... 15
2.7 ແນວຄິດ ແລະ ທິດສະດີກ່ຽວກັບຄວາມເພິ່ງພໍໃຈ ..... 16
2.8 ປະຫວັດວິທະຍາໄລຄູສາລະວັນໂດຍສັງເຂບ ..... 16
2.9 ທົບທວນບົດຄົ້ນຄ້ວາວິທະຍາສາດທີ່ກ່ຽວຂ້ອງ. ..... 17
2.10 ຂອບເຂດແນວຄິດ. ..... 20
2.11 ນິຍາມຄໍາສັບສະເພາະ ..... 21
ບົດທີ 3 ..... 22
ວິທີການຄົ້ນຄ້ວາ ..... 22
3.1 ການອອກແບບການສຶກສາ, ການຄັດເລືອກພື້ນທີ່, ໄລຍະເວລາການຄົ້ນຄ້ວາ ..... 22
3.1.1 ການຄັດເລືອກພື້ນທີ່ ..... 22
3.1.2 ໄລຍະເວລາການຄົ້ນຄ້ວາ ..... 22
3.2 ປະຊາກອນ ແລະ ກຸ່ມຕົວຢ່າງ ..... 22
3.2.1 ປະຊາກອນ ..... 22
3.2.2 ກຸ່ມຕົວຢ່າງ ..... 22
3.3 ວິທີເກັບກໍາຂໍ້ມູນ ແລະ ເຄື່ອງມືທີ່ໃຊ້ເກັບກໍາຂໍ້ມູນ ..... 23
3.3.1 ການພັດທະນາເຄື່ອງມື ແລະ ວິທີເກັບກໍາຂໍ້ມູນ ..... 23
3.3.2 ຮູບແບບເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນ ..... 23
3.4 ສະຖິຕິການວິເຄາະຂໍ້ມູນ ..... 23
3.5 ສະຖິຕິໃນການຫາຄຸນນະພາບຂອງເຄື່ອງມື ..... 24
ບົດທີ4 ..... 25
ຜົນການວິເຄາະ ແລະ ແປຜົນ ..... 25
4.1 ຂໍ້ມູນທົ່ວໄປຂອງຄູ ແລະ ນັກສຶກສາ ..... 25
4.1.1 ດ້ານເພດຂອງກຸ່ມຕົວຢ່າງ ..... 25
4.1.2 ດ້ານອາຍຸຂອງຄູສອນ ແລະ ນັກສຶກສາ ..... 26
4.1.3 ດ້ານການສຶກສາຂອງຄູ ..... 27
4.1.4 ດ້ານຂັ້ນຮຽນຂອງນັກສຶກສາ ..... 27

4.2 ຜົນການວິເຄາະຂໍ້ມູນຂອງຄູສອນ ແລະ ນັກສຶກສາຕໍ່ ສະພາບການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບ ອອນໄລນ໌ ........................................................................................................ 28

4.2.1 ດ້ານສະພາບການຮຽນ-ການສອນແບບເຊິ່ງໜ້າຂອງຄູສອນ ແລະ ນັກສຶກສາ .................................. 28

4.2.2 ດ້ານການຈັດການຮຽນ-ການສອນແບບອອນໄລນ໌ ................................................................... 46

4.3 ຜົນການວິເຄາະລະດັບຄວາມເພິ່ງພໍໃຈຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການ ຈັດການຮຽນ-ການສອນແບບອອນໄລນ໌ ......................................................................... 58

4.3 ຜົນການວິເຄາະລະດັບຄວາມເພິ່ງພໍໃຈຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການ ຈັດການຮຽນ-ການສອນແບບເຊິ່ງໜ້າ ......................................................................... 64

ບົດທີ 5 ........................................................................................................ 71

ສະຫຼຸບ, ຂໍ້ຈຳກັດການສຶກສາ ແລະ ຂໍ້ແນະນຳ ................................................................ 71

5.1 ສະຫຼຸບຜົນການຄົ້ນຄ້ວາ ................................................................................ 71

5.2 ຂໍ້ຈຳກັດການສຶກສາ ..................................................................................... 74

5.3 ຂໍ້ແນະນຳ........................................................................................................ 78

ເອກະສານອ້າງອີງ ……………………………………………………………………….. 80

ເອກະສານຊ້ອນທ້າຍ ……………………………………………………………………….. 88

# ພາກທີ 1
# ບົດນຳ
## 1.1 ຄວາມເປັນມາ ແລະ ສະພາບບັນຫາຂອງການຄົ້ນຄວ້າ.

ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 (2016: 1) ເພື່ອປະຕິບັດແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດແຕ່ 2016-2025 ໃຫ້ສອດຄ່ອງກັບໜ້າທີ່ການເມືອງໃນໄລຍະໃໝ່, ມີຊັບພະຍາກອນມະນຸດທີ່ມີ ຄຸນນະພາບ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການໃນການ ພັດທະນາເສດຖະກິດ-ສັງຄົມຂອງຊາດ, ສາມາດແຂ່ງຂັນ, ເຊື່ອມໂຍງກັບບັນດາປະເທດໃນພາກພື້ນ ແລະ ສາກົນ, ແມ່ນໄດ້ອີງໃສ່ບັນດາເອກະສານສຳຄັນຈຳນວນໜຶ່ງ ເຊັ່ນ: ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຮອດປີ 2020, ອີງໃສ່ທິດບຸກທະລຸທາງດ້ານຊັບພະຍາກອນມະນຸດທີ່ນອນຢູ່ໃນບຸກທະລຸ ທີ່ໄດ້ລະບຸໄວ້ໃນມະຕິ ກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ວິໄສທັດການພັດທະນາຊັບພະຍາກອນມະນຸດ ຮອດປີ 2030, ຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມ ໄລຍະ 2016-2025 ບົດລາຍງານການເມືອງຂອງກອງປະຊຸມໃຫຍ່ຂອງພັກ ຄັ້ງທີ VIII ແລະ ແຜນຍຸດທະສາດການພັດທະນາແບບຍືນຍົງ, ຊຶ່ງໄດ້ເປັນນິຕິກຳພື້ນຖານໃນການຄົ້ນຄວ້າ ແລະ ທົບທວນ ຄືນການຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດໄລຍະຜ່ານມາ ແລະ ວາງແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດແຕ່ປີ 2016-2025 ໃຫ້ເປັນເອກະພາບ, ມີຄຸນນະພາບ, ມີປະສິດທິພາບ, ມີປະສິດທິຜົນ ແລະ ເປັນໄປໃນທິດທາງດຽວກັນ ໃນຂອບເຂດທົ່ວປະເທດ.

ກະຊວງສຶກສາທິການ ແລະ ກິລາ (ຕຸລາ 2020:147) ລາຍງານວ່າ ໃນການປະຕິບັດແຜນຍຸດທະສາດ ການພັດທະນາຊັບພະຍາກອນມະນຸດ ໄດ້ເອົາໃຈໃສ່ເນັ້ນຄຸນນະພາບການຮຽນ-ການສອນໃນສຖານສຶກສາທຸກຂັ້ນເອົາໃຈໃສ່ພັດທະນາຫຼັກສູດ ແລະ ວິທີການສິດສອນໃຫ້ມີຄຸນນະພາບດີຂຶ້ນເລື້ອຍໆ ເປັນຕົ້ນ ຜົນສຳເລັດທີ່ພົ້ນເດັ່ນໃນຂະແໜງການສຶກສາ ແມ່ນເຫັນໄດ້ຈາກຜົນສຳເລັດໃນການປັບປຸງ, ຍົກລະດັບຄຸນນະພາບວິຊາການ-ວິຊາສະເພາະຂອງຄູສອນ ໃນບັນດາສະຖານການສຶກສາ ໃຫ້ມີຄຸນວຸດທິຕາມມາດຕະຖານທີ່ກຳນົດໄວ້, ມີການຝຶກອົບຮົມວິຊາສະເພາະ, ວິທີການສິດສອນ, ການພັດທະນາສື່ການຮຽນ-ການສອນ, ພັດທະນາວຽກງານຄົ້ນຄວ້າວິທະຍາສາດ, ມີຈຳນວນຄູເພີ່ມຂຶ້ນໄດ້ຮັບຕຳແໜ່ງວິຊາການຄູ ແລະ ໄດ້ຮັບການສະໜັບສະໜູນໃນການພັດທະນາວິຊາການ ຢ່າງຕໍ່ເນື່ອງ. ສະຖານການສຶກສາດຫຼາຍແຫ່ງ ໄດ້ຮັບການຢັ້ງຢືນສະຖານະພາບເປັນສູນແຫ່ງການພັດທະນາ ສຳລັບສາຍວິຊາຮຽນໃດໜຶ່ງໃນຫຼັກສູດສ້າງຄູ ແລະ ການປັບປຸງຄຸນນະພາບຂອງລະບົບວິຊາຊີບຄູ ເພື່ອສ້າງບຸກຄະລາກອນຄູ ທີ່ມີຄວາມຮູ້, ຄວາມສາມາດ ຮັບໃຊ້ເຂົ້າໃນການຈັດຕັ້ງການຮຽນ-ການສອນ ຂອງລະບົບການສຶກສາສາມັນສຶກສາ ຮອດການສຶກສາອາຊີວະ ແລະ ການສຶກສາຊັ້ນສູງ ໃນຂອບເຂດທົ່ວປະເທດ.

ແຕ່ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດໂຄໂຣນາໄວຣັສ 2019 (COVID-19),ໄດ້ສົ່ງຜົນກະທົບຕໍ່ໂລກ, ຕໍ່ປະຊາຊົນຢ່າງກວ້າງຂວາງ, ມີຈຳນວນຄົນທີ່ຕິດເຊື້ອ ແລະ ເສຍຊີວິດເພີ່ມຂຶ້ນໃນເວລາອັນສັ້ນ ເຮັດໃຫ້ເສດຖະກິດ-ສັງຄົມ ແລະ ການສຶກສາໄດ້ຮັບຜົນກະທົບຢ່າງກ້ວາງຂວາງ; ເຮັດໃຫ້ການຮຽນ-ການສອນພົບກັບຂໍ້ຫຍຸ້ງຍາກຫຼາຍດ້ານ ເຮັດໃຫ້ຜູ້ບໍລິຫານການສຶກສາຕ້ອງໄດ້ວາງທິດທາງແກ້ໄຂສະຢ່າງເລັ່ງດ່ວນໂດຍຊຸກຍູ້ສົ່ງເສີມໃຫ້ຄູສອນ ແລະ ນັກຮຽນ-ນັກສຶກສາຕ້ອງໄດ້ປັບຕົວເຂົ້າຮູບແບບວິຖີຊີວິດ ແລະ ການຮຽນ-ການ

ສອນແບບໃໝ່ ເພື່ອເຮັດເສດຖະກິດ-ສັງຄົມ ແລະ ການສຶກສາ ສາມາດດຳເນີນໄປຢ່າງຕໍ່ເນື່ອງ. ບຸນທັບ ສິດທິລັງສີ (2020:1-17). ສຶກສາພົບວ່າ ການແຜ່ລະບາດຂອງ ພະຍາໂຄວິດ19 ໄດ້ສົ່ງຜົນເຮັດໃຫ້ພຶດຕິກຳຂອງມະນຸດ, ພຶດຕິກາການບໍລິໂພກ, ການບໍລິການ ແລະ ການສຶກສາໄດ້ມີການປ່ຽນແປງຢ່າງໃຫຍ່ຫຼວງໃນຫຼາຍດ້ານ, ສົ່ງຜົນກະທົບໃນຫຼາຍຂະແໜງການເຊັ່ນ:ເສດຖະກິດ, ສັງຄົມ, ການທ່ອງທ່ຽວ, ເຕັກໂນໂລຊີ ແລະ ການສຶກສາ ແລະ ຍັງສົ່ງຜົນໃຫ້ສະຖານການສຶກສາຫຼາຍແຫ່ງບໍ່ສາມາດຈັດການຮຽນ-ການສອນໄດ້ເປັນປົກກະຕິ. (WHO, UNICEF, 2020), ໄດ້ສະເໜີແນວທາງການປ້ອງກັນ ແລະ ຄວບຄຸມການລະບາດໃນໂຮງຮຽນ, ໂດຍການເນັ້ນໃສ່ການປົກປ້ອງສິ່ງສິ່ງແວດລ້ອມໃນໂຮງຮຽນ, ອະນາໄມນັກຮຽນ ແລະ ມີນະໂຍບາຍພັກເຊົາໃນກໍລະນີຄູ, ນັກຮຽນ ແລະ ນັກການສຶກສາເຈັບປ່ວຍ. ນອກຈາກນັ້ນ, ການຢູ່ຫ່າງໄກຂອງສັງຄົມກໍເປັນອີກບັນຫາໜຶ່ງ ສິ່ງທີ່ສຳຄັນທີ່ຄວນຄຳນຶງເຖິງໂດຍການມີການຈັດຫ້ອງຮຽນສະລັບກັນ ຍົກເລີກການຊຸມນຸມຈັດງານ ແລະ ກິດຈະກຳກາງແຈ້ງ ແລະ ການເຕົ້າໂຮມກັນເປັນກຸ່ມໃຫຍ່ ແລະ ຈັດຕັ້ງໂຕະຕ່າງໆ ພ້ອມທັງຊຸກຍູ້ໃຫ້ໂຮງຮຽນຄຸ້ມຄອງການຮຽນ-ການສອນແບບ online ເຊັ່ນດຽວກັນ.

ນອກຈາກນັ້ນ, ສູນສະເພາະກິດແນວທາງການນຈັດການຮຽນ-ການສອນທາງໄກຂອງໂຮງຮຽນສັງກັສຳນັກງານຄະນະກຳມະການການສຶກສາຂັ້ນພື້ນຖານໃນສະຖານະການແຜ່ລະບາດຂອງພະຍາດໂຄວິດ19 (2021), ໄດ້ສະເໜີແນວຄິດທີ່ສອດຄ່ອງກັນວ່າ ສະຖາບັນການສຶກສາຈຳເປັນຕ້ອງໄດ້ປ່ຽນແປງວິທີການຈັດການການຮຽນຮູ້ຢ່າງຮີບດ່ວນໃນພັດທະນາການສອນຂອງຄູໃຫ້ເປັນອອນໄລນ໌ ເພື່ອຫຼຸດຜ່ອນການປະເຊີນຫນ້າ ໂດຍຈັດການການຮຽນຮູ້ແບບອອນໄລ 100% ໂດຍບໍ່ມີການເດີນທາງໄປໂຮງຮຽນ, ຫຼີກລ້ຽງການເຕົ້າໂຮມກັນເປັນຈຳນວນຫຼວງຫຼາຍ, ຫຼີກລ່ຽງກິດຈະກຳຫຼາຍຢ່າງທີ່ຈັດຂຶ້ນ, ພັດທະນາຜູ້ຮຽນໃຫ້ມີຄວາມຮູ້ທາງ ເທັກໂນໂລຢີໄປພ້ອມໆກັນ. ກັນຈະນາ ບຸນພັກດີ (2020:2), ກ່າວວ່າ ເພື່ອໃຫ້ນັກຮຽນສາມາດຮຽນໄດ້ທຸກບ່ອນ ແລະ ການຮຽນຮູ້ຕ້ອງສືບຕໍ່ເຖິງແມ່ນວ່ານັກຮຽນບໍ່ສາມາດໄປໂຮງຮຽນໄດ້ຕາມປົກກະຕິ ການດູແລ ແລະ ການຊ່ວຍເຫຼືອນັກຮຽນ ແລະ ຄູສອນສອນ ໂດຍມີຄວາມຈຳເປັນຕ້ອງໄດ້ພັດທະນາຄວາມຮູ້ຄວາມສາມາດທາງດ້ານການນຳໃຊ້ເທັກໂນໂລຢີ, ການຫາຂໍ້ມູນ, ການປັບຕົວໃຫ້ເຂົ້າກັບຍຸກສັງຄົມປັດຈຸບັນ, ໃຫ້ຮຽນຮູ້ເຄື່ອງມືທີ່ຊ່ວຍໃນການຮຽນ-ການສອນຄື: Zoom, Google Hangouts, Skype, Line, Facetime, Facebook, Messenger, Microsoft ທີມງານ, True Visual World, Google Meet, Vroom ແລະ ອື່ນໆ. ຂໍ້ຕົກລົງ ວ່າດ້ວຍການອະນຸມັດນຳໃຊ້ເອກະສານທິດທາງການຈັດຕັ້ງການຮຽນ-ການສອນສຳລັບສາມັນສຶກສາໃນສະພາບທີ່ມີການລະບາດຂອງພະຍາດCOVID-19 ເລກທີ3868/ສສກ, ວັນທີ 6/9/2021 (2021), ຍັງກ່າວອີກວ່າ ເນື່ອງຈາກ ການລະບາດຂອງພະຍາດ (COVID19), ສະຖານສຶກສາ ຕ້ອງໄດ້ປັບຕົວໃນ 3 ອົງປະກອບທີ່ສຳຄັນຄື: (1) ຮູບແບບການຈັດການຮຽນ-ການສອນໃນຍຸກ New Normal, (2) ທິດທາງການປັບຫຼັກສູດໃຫ້ສາມາດ ຈັດການຮຽນ-ການສອນໄດ້ໃນເວລາທີ່ສັ້ນລົງ ຫຼື ເອີ້ນວ່າ ຫຼັກສູດຊຸດຄວາມຮູ້ພື້ນຖານ, (3) ເນື້ອໃນ ຫຼັກສູດພື້ນຖານວິຊາຕ່າງໆ. ແຕ່ໄລຍະຕໍ່ມາ, ໃນວັນທີ 6 ກັນຍາ, 2021, ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ19 ຜ່ອນຜັນລົງ, ເຮັດໃຫ້ລັດຖະບານແຫ່ງ ສປປ.ລາວ ແຈ້ງການໃຫ້ກະຊວງສຶກສາທິການ ແລະ ກະລາ ໄດ້ປະກາດໃຫ້ບັນດາໂຮງຮຽນ, ວິທະຍາໄລ ແລະ ມະຫາວິທະຍາໄລ ທັງພາກລັດ-ເອກະຊົນ ໃນຂອບເຂດທົ່ວປະເທດໄດ້ມີການເປີດ ການຮຽນ-ການສອນແບບເຊິ່ງໜ້າຄືນ ເຮັດໃຫ້ສະຖານສຶກສາ ສາມາດຈັດການຮຽນ-ການສອນດຳເນີນການໄດ້ຢ່າງເປັນປົກກະຕິ (UNICEP, 2011).

ສຳລັບວິທະຍາໄລຄູສາລະວັນ ກໍ່ເປັນໜຶ່ງສະຖາບັນການສຶກສາ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດພະຍາດ COVID-19 ແລະ ເປັນບ່ອນທີ່ມີນັກສຶກສາຈຳນວນຫຼາຍຈຶ່ງມີຄວາມສ່ຽງສູງທີ່ຈະເກີດການແຜ່ລະບາດຂອງເຊື້ອໄວຣັດ ເພື່ອຫັກສາມາດຕະການ ແລະ ປ້ອງການການແຜ່ລະບາດຂອງພະຍາດ. ກະຊວງສຶກສາທິການ ແລະ ກິລາ ( 2021), ມີແຈ້ງການວິທະຍາໄລ ປະຕິບັດຄຳສັ່ງແນະນຳ ຂອງຄະນະສະເພາະກິດ ຂອງແຂວງສາລະວັນ ແຈ້ງການຂອງທ່ານເຈົ້າແຂວງໆ ສາລະວັນຕາມແຈ້ງການ (ໄລຍະວັນທີ 23 ພຶດສະພາ 20 21 ຫາ 5 ມິຖຸນາ 20 21) ເພື່ອໃຫ້ນັກຮຽນສາມາດສືບຕໍ່ຮຽນຢ່າງຕໍ່ເນື່ອງ ໃຫ້ພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ ແລະ ຊ່ວຍເຫຼືອນັກຮຽນ ແລະຊຸກຍູ້ສິ່ງເສີມຄູສອນ ພ້ອມທັງຄຸ້ມຄອງການຮຽນ-ການສອນແບບອອນໄລນ໌ ໂດຍ ການສະໜັບສະໜູນ, ສິ່ງເສີມ, ພັດທະນາ, ປ້ອງກັນ ແລະ ແກ້ໄຂບັນຫານັກຮຽນ. ເພື່ອໃຫ້ນັກຮຽນມີຄວາມເຂັ້ມແຂງທາງດ້ານຮ່າງກາຍ ແລະ ຈິດໃຈ ທັງມີຄຸນນະພາບຊີວິດທີ່ດີ ໃນສະຖານະການ ການລະບາດຂອງພະຍາດໂຄວິດ19 ເພື່ອຮັບປະກັນການຈັດຕັ້ງຮຽນ-ການສອນ ໃຫ້ມີຈຳນວນນັກຮຽນ-ນັກສຶກສາ ສາມາດເຂົ້າຮ່ວມການຮຽນ-ການສອນໄດ້ໃນຂັດສ່ວນທີ່ສູງ (ແຈ້ງການ, 2021).

ຕໍ່ກັບສະພາບຄວາມເປັນຈິງ ພາຍໃນ ສປປ ລາວ, ສຳລັບການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ກ່ອນການແຜ່ລະບາດຂອງພະຍາດໂຄງວິດ19 ໄລຍະຜ່ານມາກໍ່ຍັງມີຫຼາຍບັນຫາທ້າທາຍ ເປັນຕົ້ນແມ່ນພື້ນຖານໂຄງລ່າງ, ດ້ານສະພາບບັນຫາເສດຖະກິດ-ສັງຄົມ, ດ້ານຄຸນນະພາບການສິດສອນ ແລະ ດ້ານສິ່ງອຳນວຍຄວາມສະດວກ ພາຍໃນໂຮງຮຽນ ສູນການສຶກສາຮຽນຮ່ວມ (2015). ສາລັບການຈັດການຮຽນ-ການສອນອອນໄລນ໌ ໃນໄລຍະການແຜ່ລະບາດພະຍາດໂຄວິ19, ວິທະຍາໄລ ຄູສາລະວັນ ກໍ່ໄດ້ດຳເນີນກິດຈະກຳການຮຽນ-ການສອນໃນຮູບແບບທາງໄກ( ອອນໄລນ໌ ) ໂດຍຜ່ານ ໂປຼເກມZoom, Google meet, ແມັດເຊັນເຈີ, ວັອດແອັບ ແລະ ອື່ນໆ, ແຕ່ວ່າ ການຈັດການຮຽນ-ການສອນໃນຮູບແບບນີ້ ເນື່ອງຈາກນັກສຶກສາມາຈາກຫຼາຍພູມລຳເນົາ ແລະ ພື້ນຖານເສດຖະກິດຄອບຄົວທີ່ແຕກຕ່າງກັນ ເຮັດໃຫ້ນັກສຶກສາຈຳນວນຫຼາຍບໍ່ໄດ້ເຂົ້າຮຽນ, ບໍ່ໄດ້ຮ່ວມກິດຈະກຳທັງພາກທິດສະດີ ແລະ ປະຕິບັດຕົວຈິງ ຢ່າງເຕັມສະມັດຕະພາບ, ນັກສຶກສາ ແລະ ຄູ ພົບກັບຄວາມຫຍຸ້ງຍາກໃນການເຂົ້າເຖິງຂໍ້ມູນ, ການນຳໃຊ້ເຄື່ອງເທັກໂນໂລຊີ ແລະ ເຄືອຄ່າຍອິນເຕີເນັດຍັງບໍ່ທັນທົ່ວເຖິງ. (ກະຊວງສຶກສາທິການ ແລະ ກິລາ, 2021), ລາຍງານວ່າ ການຈັດການຮຽນ-ການສອນອອນໄລນ໌ ສາມາດປະເມີນຜົນວ່າ ຄຸນນະພາບການຈັດການຮຽນ-ການສອນຍັງຕ່ຳ, ອັດຕາສ່ວນນັກຮຽນ-ນັກສຶກສາບໍ່ສາມາດເຂົ້າຮຽນມີຈຳນວນຫຼາຍ ບັນຫາດັ່ງກ່າວ ອາດເກີດຈາກຄວາມສາມາດເຂົ້າເຖິງການຮຽນ-ການສອນອອນໄລນ໌ ຂອງນັກຮຽນຍັງຕ່ຳ ໂດຍສະເພາະ ເຂດຫ່າງໄກສອກຫຼີກ, ຂາດວິທີການຮຽນ-ການສິດສອນແບບທາງໄກທີ່ມີປະສິດທິພາບ ເນື່ອງຈາກເປັນວິທີທາງໃໝ່ສຳລັບຄູ ແລະ ນັກຮຽນ ລວມທັງການມີສ່ວນຮ່ວມຂອງຄອບຄົວຍັງມີໜ້ອຍ. (ແຜນພັດທະນາຂະແໜງການສຶກສາ (2020: 148), ຍັງໄດ້ລາຍງານຕື່ມອີກວ່າ ການພັດທະນາວຽກງານອະຊີວະສຶກສາ ຍັງປະສົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ ເຊັ່ນ: ນັກສຶກສາທີ່ຈົບການສຶກສາອາຊີວະສຶກສາ ບໍ່ສາມາດສະໜອງໄດ້ຢ່າງເຕັມສ່ວນກັບຄວາມຕ້ອງ ການຂອງຜູ້ໃຊ້ແຮງງານ, ຄູອາຈານຂອງສະຖານອາຊີວະສຶກສາຍັງຂາດປະສົບການ ບໍ່ໄດ້ຮັບການຝຶກອົບຮົມຢ່າງ ສົມສ່ວນໃນການສິ່ງຄວາມຮູ້ດ້ານວິຊາການຕາມເນື້ອໃນຫຼັກສູດໃໝ່ ແລະ ຄວາມເຂົ້າໃຈວິທີການນຳໃຊ້ອຸປະກອນ ແລະ ຊັບພະຍາກອນດ້ານວິຊາຊີບໃໝ່ ນອກຈາກນັ້ນ, ການປ່ຽນແປງຢ່າງໄວວາຂອງເຕັກໂນໂລຢີ ແລະ ໂຄງປະກອບເສດຖະກິດ ພາຍໃນປະເທດ ແລະ ພາກພື້ນ ກໍຈະມີຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາອາຊີວະສຶກສາ ຂອງກົມອາຊີວະສຶກສາ ຈະຕ້ອງມີ

ທ່າກຽມພ້ອມໃນການຄຸ້ມຄອງການຝຶກອົບຮົມ ແລະ ຍົກລະດັບວິຊາສະເພາະຂອງຄູ ເພື່ອທີ່ຮັບປະກັນຄຸນນະພາບການສິດສອນ ໃຫ້ສອດຄ່ອງກັບມາດຕະຖານຫຼັກສູດແຫ່ງຊາດ, ພາກພື້ນ ແລະ ສາກົນ.

ຈາກບັນຫາທີ່ກ່າວມາຂ້າເທິງ ເຫັນວ່າ ການຈັດຕັ້ງການຮຽນ-ການສອນ ທັງຮູບແບບອອນໄລນ໌ ແລະ ເຊິ່ງໜ້າ ແມ່ນຍັງພົບບັນຫາ ທ້າທາຍທີ່ຄ້າຍຄືກັນ ແລະ ແຕກຕ່າງກັນຫຼາຍດ້ານ, ຈາກການສຶກສາຂອງບັນດານັກວິຊາການ, ນັກຄົ້ນຄວ້າ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ  ແມ່ນຍັງບໍ່ທັນໄດ້ຂໍ້ສະຫຼຸບທີ່ຊັດເຈນ ວ່າຮູບແບບການສອນແບບໃດມີປະສິດທິພາບດີກວ່າກັນ ໃນແຕ່ລະສະພາບແວດລ້ອມທີ່ແຕກຕ່າງກັນ ເປັນຕົ້ນແມ່ນທ່ານ (Padmalini Singh, et.al., 2021, Ali Alghazo, 2021 & Deepak N. V. et.al., 2022), ໄດ້ສຶກສາພົບວ່າ ການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌  ແມ່ນມີຜົນຕໍ່ຄວາມເລັດທາງການຮຽນຂອງນັກຮຽນ-ນັກສຶກສາ ເທົ່າກັນ. ແຕ່ຍັງມີຜົນການສຶກສາ ຂອງນັກຄົ້ນຄວ້າຫຼາຍທ່ານ ທີ່ມີຜົນຮັບແຕກຕ່າງກັນ ເປັນຕົ້ນ ຜົນການຄົ້ນຄວ້າ ຂອງທ່ານ Stern, B.S., (2004) , N. Ramya, V. et al., (2021) & Mohammad A., ( 2021) ພົບວ່າ ການຮຽນ-ການສອນແບບອອນໄລນ໌ ແມ່ນມີປະສິດທິຜົນດີກວ່າ ການຮຽນ-ການສອນແບບເຊິ່ງໜ້າ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງມີຜົນການສຶກສາ ທີ່ກົງກັນຂ້າມກັນ ຂອງທ່ານ Nurul Rachmah ( 2020), ໄດ້ສຶກສາພົບວ່າ ການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແມ່ນມີປະສິດທິຜົນດີກວ່າ ການຈັດຕັ້ງຮຽນ-ການສອນ ແບບອອນໄລນ໌. ສະນັ້ນ, ການຈັດການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ແມ່ນອາດມີປະສິດທິຜົນຕ່າງກັນໃນສະພາບການທີ່ແຕກຕ່າງກັນ ເປັນຕົ້ນ ໃນ ສປປ.ລາວ ອາດມີຜົນທີ່ແຕກຕ່າງ ຈາກສະພາບໃນຕ່າງປະເທດ, ເຊິ່ງການສຶກສາຄັ້ງນີ້ອາດເປັນສ່ວນໜຶ່ງ ທີ່ສາມາດໃຫ້ຄຳຕອບທີ່ດີ ຕໍ່ກັບຂໍ້ສົງໃສ ຂອງຫຼາຍໆພາກສ່ວນທີ່ກ່ຽວຂ້ອງໃນ ສປປ. ລາວ. ໂດຍສະເພາະ ທີ່ວິທະຍາໄລ ຄູສາລະວັນ.

ຈາກຜົນການສຶກສາທີ່ກ່າວມາຂ້າງເທິງ, ຜູ້ສຶກສາ ສາມາດສະຫຼຸບໄດ້ວ່າ ການຮຽນ-ການສອນແບບເຊິ່ງໜ້າແມ່ນຍັງຫາຂໍ້ສະຫຼຸບບໍ່ທັນໄດ້ຂໍ້ສະຫຼຸບຊັດເຈນ ໂດຍສະເພາະ ການຮຽນ-ການສອນໃນ ສປປ.ລາວ ອາດເປັນຊ່ອງຫວ່າງທີ່ຕ້ອງໄດ້ສຶກສາຄົ້ນຄວ້າ ເພື່ອຊອກຫາຂອງຮູບແບບການຮຽນ-ການສອນທີ່ເໝາະສົມ ແລະ ສອດຄ່ອງກັບສະພາບ ສປປ ລາວ ເວົ້າສະເພາະກໍ່ຄື ທີ່ວິທະຍາໄລ ຄູສາລະວັນ. ອີກຢ່າງໜຶ່ງ, ການສຶກສາຄົ້ນຄວ້າຜ່ານມາ ສ່ວນໃຫຍ່ແມ່ນເປັນການສຶກສາຢູ່ຕ່າງປະເທດ ອາດມີຜົນທີ່ແຕກຕ່າງ ຈາກ ສປປ.ລາວ. ສະນັ້ນ, ຜູ້ສຶກສາຈຶ່ງມີຄວາມສົນໃຈ ແລະ ເຫັນເຖິງຄວາມສຳຄັນ ໃນການສຶກສາ ຫົວຂໍ້ **'ສຶກສາສະພາບການຈັດຕັ້ງການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ຮູບແບບອອນໄລນ໌ ທີ່ວິທະຍາໄລ ຄູສາລະວັນ'** ເພື່ອສຶກສາຫາຮູບແບບ ແລະ ວິທີການທີ່ເໝາະສົມ; ຈຸດດີ ແລະ ຂໍ້ຄົງຄ້າງ ແລ້ວນຳມາເປັນຂໍ້ມູນທີ່ສຳຄັນ ປະກອບສ່ວນເຂົ້າໃນການປັບປຸງແກ້ໄຂບັນຫາ  ການຈັດຕັ້ງການຮຽນ-ການສອນ ທີ່ວິທະຍາໄລ ຄູສາລະວັນ ໃຫ້ໄດ້ຮັບການພັດທະນາດີຂຶ້ນເລື້ອຍໆ.

## 1.2 ຄຳຖາມການຄົ້ນຄວ້າ.

**1.** ສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ໃນວິທະຍາໄລຄູສາລະວັນ ເປັນແນວໃດ?

**2.** ຄວາມເພິ່ງພໍໃຈ ຕໍ່ປະສິດທິຜົນການຈັດຕັ້ງການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ແບບອອນໄລນ໌  ທີ່ວິທະຍາໄລຄູສາລະວັນ ມີຄືແນວໃດ?

## 1.3 ຈຸດປະສົງຂອງການຄົ້ນຄວ້າ.

1. ເພື່ອສຶກສາ ສະພາບການຈັດຕັ້ງການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ວິທະຍາໄລຄູສາລະວັນ.

2. ເພື່ອສຶກສາຄວາມເພິ່ງພໍໃຈ ຕໍ່ປະສິທິຜົນການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ ວິທະຍາໄລຄູສາລະວັນ.

## 1.4 ສົມມຸດຕິຖານ.

1. ສະພາບການຈັດຕັ້ງການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ວິທະຍາໄລຄູສາລະວັນຢູ່ໃນລະດັບດີຫຼາຍ.
2. ນັກສຶກສາມີຄວາມເພິ່ງພໍໃຈ ຕໍ່ປະສິດທິຜົນການຈັດຕັ້ງການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ ວິທະຍາໄລຄູສາລະວັນແຕກຕ່າງກັນ.

## 1.5 ຜົນຄາດວ່າຈະໄດ້ຮັບ.

- ຮູ້ເຖິງສະພາບການຈັດການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ວິທະຍາໄລຄູສາລະວັນ.
- ຮູ້ເຖິງລະດັບຄວາມເພິ່ງພໍໃຈ ຕໍ່ການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ວິທະຍາໄລຄູສາລະວັນ ສົກຮຽນ 2021-2022.
- ຄູ-ອາຈານ ແລະ ຜູ້ບໍລິຫານການສຶກສາຢູ່ ທີ່ວິທະຍາໄລ ຄູສາລະວັນ ຈະໄດ້ຮັບຮູ້ຂໍ້ມູນຮູບແບບ, ຂໍ້ດີ, ຂໍ້ຄົງຄ້າງ ໃນການການຈັດຕັ້ງການຮຽນ-ການສອນ ເພື່ອນຳມາແກ້ໄຂບັນຫາໃຫ້ຖືກເປົ້າໝາຍ.
- ເປັນຂໍ້ມູນສຳຄັນໃຫ້ຜູ້ບໍລິຫານການສຶກສາ ແລະ ຄູອາຈານ ສາມາດນຳໄປເປັນຂໍ້ມູນ ໃນການປັບປຸງ ແລະ ພັດທະນາຫຼັກສູດການຮຽນ-ການສອນໃຫ້ມີຄວາມສອດຄ່ອງ ແລະ ເໝາະສົມຫຼາຍຂຶ້ນ.
- ເພື່ອເປັນຂໍ້ມູນອ້າງອີງໃຫ້ແກ່ນັກວິຊາການທົ່ວໄປ ລະດັບອາຊີວະສຶກສາ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ສາມາດນຳໄປເປັນແນວທາງ ໃນການສຶກສາ ແລະ ການຄົ້ນຄວ້າ ໃນອານາຄົດ.

# ພາກທີ 2

# ທົບທວນເອກະສານ ແລະ ຂອບເຂດແນວຄິດ

ການສຶກສາຄັ້ງນີ້ຜູ້ວິໄຈໄດ້ສຶກສາຄົ້ນຄ້ວາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງເປັນຕົ້ນແມ່ນ ການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌, ບັນຫາ ແລະ ສິ່ງທ້າທາຍໃນການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌, ການຮຽນ-ການສອນແບບປະສົມປະສານ, ທິດສະດີກ່ຽວກັບຄວາມເພິ່ງພໍໃຈ, ການທົບທວນການສຶກສາທີ່ກ່ຽວຂ້ອງ, ຂອບຄວາມຄິດການຄົ້ນຄວ້າ, ຂໍ້ມູນກ່ຽວກັບວິທະຍາໄລຄູສາລະວັນ.

## 2.1. ຂອບຄວາມຄິດກ່ຽວກັບການຈັດການຮຽນ-ການສອນແບບເຊິ່ງໜ້າ.

### 2.1.1. ຄວາມໝາຍຂອງການຈັດການຮຽນ-ການສອນແບບເຊິ່ງໜ້າ.

ການຮຽນ-ການສອນແບບເຊິ່ງໜ້າ ແມ່ນເປັນການຈັດຕັ້ງການຮຽນ-ການສອນແບບດັ້ງເດີມ, ນັກຮຽນ ແລະ ຄູສອນແມ່ນຢູ່ເຊິ່ງໜ້າກັນໃນປະຕິບັດກິດຈະກຳຕ່າງໆ ພາຍໃນຫ້ອງຮຽນ, ຄູສອນເປັນຜູ້ສິ່ງບົດຮຽນ ແລະ ນັກຮຽນເປັນຜູ້ຮັບ, ການຮຽນ-ການສອນແບບດັ່ງກ່າວ ແມ່ນຖືກຈັດຂຶ້ນຢູ່ໂຮງຮຽນເປັນສ່ວນໃຫຍ່ ແລະ ທັງເປັນການຮຽນ-ການສອນທີ່ບໍ່ໄດ້ເນັ້ນການນຳໃຊ້ເຕັກໂນໂລຊີ ປະກອບເຂົ້າໃນການສິດສອນເປັນຫຼັກ. ທ່ານ (Pei, L., & Wu, H., 2019) ຍັງໃຫ້ທັດສະນະວ່າ ບັນຫາການຄວບຄຸມດ້ານເວລາ, ດ້ານແຮງຈູງໃຈຜູ້ຮຽນ, ບັນຫາດ້ານເຕັກນິກວິຊາການ ແລະ ຂີດຈຳກັດການເຂົ້າເຖິງອິນເຕີເນັດ ສິ່ງຜົນເຮັດໃຫ້ການຈັດການຮຽນ-ການສອນແບບເຊິ່ງໜ້າ ຍັງຖືວ່າເປັນວິທີການສິດສອນທີ່ໄດ້ຮັບຄວາມນິຍົມສູງ ເພາະວ່າ ການສອນແບບເຊິ່ງໜ້າ ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ຮຽນໄດ້ດີສຳລັບນັກຮຽນທີ່ມີຄວາມຕ້ອງການ ຢາກເຂົ້າຮ່ວມຫ້ອງຮຽນແບບເຊິ່ງໜ້າ ແລະ ການເຮັດກິດຈະກຳຮ່ວມກັນໃນຫ້ອງຮຽນ. ການຮຽນ-ການສອນແບບເຊິ່ງໜ້າ ຍັງເປັນວິທີທີ່ເຮັດໃຫ້ຄູ ກັບນັກຮຽນໃກ້ຊິດ ແລະ ໄດ້ສື່ສານເພື່ອສຶກສາຮຽນຮູ້ຮ່ວມກັນຫຼາຍຂຶ້ນ. Wright, B. M., ( 2017) ແລະ RACHMAH, N., ( 2020) ສຶກສາພົບວ່າ ນັກຮຽນສ່ວນໃຫຍ່ມັກຮຽນແບບເຊິ່ງໜ້າຫຼາຍກວ່າການຮຽນແບບອອນໄລນ໌ ເພາະເປັນການເຮັດໃຫ້ນັກຮຽນໄດ້ເຂົ້າເຖິງຫົວຂໍ້ ແລະ ການອະທິບາຍຂອງຄູໄດ້ດີໃນຫ້ອງຮຽນ ແລະ ທັງເປັນການຊ່ວຍໃຫ້ນັກຮຽນສາມາດພັດທະນາທັກສະການສື່ສານໄດ້ດີ.

### 2.1.2 ຫຼັກການ ການຈັດການຮຽນ-ການສອນແບບເຊິ່ງໜ້າ.

ອີງຕາມຫຼັກການຂອງທ່ານ Chickering & Gamson, (1999: 3) ໄດ້ໃຫ້ທັດສະນະກ່ຽວກັບຫຼັກການການຮຽນ-ການສອນທີ່ມີປະສິດທິຜົນ ເຊິ່ງປະກອບມີຫຼັກການສຳຄັນຄື: 1. ຊຸກຍູ້ໃຫ້ນັກຮຽນພົວພັນກັບຄະນະວິຊາຢ່າງສະໜິດແໜ້ນ, 2. ພັດທະນາການການແລກປ່ຽນ ແລະ ຮ່ວມມືເຊິ່ງກັນ ແລະ ກັນໃນການຮຽນຮູ້, 3. ນາໃຊ້ເຕັກນິກການຮຽນຮູ້ທີ່ມີລັກສະນະຫ້າວຫັນ, 4. ໃຫ້ຄາຕິສິ່ງຂ່າວ ແລະ ສຶກສາອົບຮົມຢ່າງທັນການ, 5. ປະຕິບັດຕົວຈິງເປັນສ່ວນໃຫຍ່, 6. ການົດເປົ້າໝາຍຜົນສຳເລັດໃຫ້ສູງ ແລະ 7. ຍົກສູງດ້ານພອນສະຫວັນ ແລະ ວິທີການຮຽນຮູ້ຂອງຜູ້ຮຽນທີ່ແຕກຕ່າງ.

ນອກນີ້, Perkins (2008), ຍັງກຳນົດຫຼັກການ ການສອນໄວ້ອີກວ່າ: 1. ການສອນຄວນມີການອອກແບບກິດຈະກຳ ແລະ ເກມຕ່າງໆເພື່ອສົ່ງເສີມການຮຽນຮູ້ໃຫ້ຫຼາຍ, 2. ມອບວຽກທີ່ຫຼາກຫຼາຍເພື່ອສ້າງທັກສະ, ຄວາມທົດທົນ, ເກີດການປັບປຸງ ແລະ ແກ້ໄຂຈາກປະສົບການເຮັດວຽກ, 3. ນຳພາທັດສະນະສຶກສາ ແລະ ການລົງສະໜາມ

ເພື່ອຮຽນຮູ້ປະສົບການທີ່ຫຼາກຫຼາຍ, 4. ຮຽນຮູ້ຈາກການເຮັດວຽກເປັນກຸ່ມ ແລະ ຝຶກທັກສະການຮ່ວມມືໃຫ້ຫຼາຍ, 5. ອອກແບບກິດຈະກາເພື່ອໃຫ້ນັກຮຽນໄດ້ສະແດງພອນສະຫວັນ ແລະ ຄວາມສາມາດ, ກ້າສະແດງອອກ ກໍ່ໃຫ້ເກີດການຮຽນຮູ້ເຊິ່ງກັນ ແລະ ກັນ.

Swain J., and Swan, M., ( 2007) ຫຼັກການສິດສອນຕ້ອງເນັ້ນໃສ່ 7 ຫຼັກການຄື: 1. ຫຼັກການສ້າງຄວາມຮູ້ແກ່ນັກຮຽນ, 2. ຄົ້ນຫາຂໍ້ຜິດພາດ ແລະ ຄວາມບໍ່ສອດຄ່ອງລະຫວ່າງນັກຮຽນ ແລະ ຄູສອນເພື່ອຫາແນວທາງແກ້ໄຂ, 3. ພັດທະນາຄາຖາມທີ່ມີປະສິດທິຜົນ, 4. ສົ່ງເສີມການຮ່ວມມືໃນການເຮັດວຽກເປັນກຸ່ມ, 5. ເນັ້ນໃສ່ວິທີການຫຼາຍກວ່າຄໍາຕອບ, 6. ມອບວຽກທີ່ສ້າງສັນການຮ່ວມມືທີ່ມີປະສິດທິຜົນ ແລະ 7. ສົ່ງການນາໃຊ້ເຕັກໂນໂລຊີທີ່ ເໝາະສົມ.

ແຕ່ສໍາລັບ ກະຊວງສຶກສາທິການ ແລະ ກິລາ ຂອງ ສປປ ລາວ ແມ່ນເນັ້ນຫຼັກການ ການຮຽນ-ການສອນ ໃຫ້ຜູ້ຮຽນມີ 3 ລັກສະນະຄື: ລັກສະນະຊາດ, ລັກສະນະມະຊົນ ແລະ ລັກສະນະວິທະຍາສາດ ແລະ ທັນສະໄໝ ໂດຍເນັ້ນການສຶກສາໃສ່ 5 ຫຼັກມູນ ຄື: ປັນຍາສຶກສາ, ຄຸນສົມບັດສຶກສາ, ແຮງງານສຶກສາ, ກິລາສຶກສາ ແລະ ສິລະປະສຶກສາ.

### 2.1.3 ຄຸນນະພາບ ການຈັດການຮຽນ-ການສອນແບບເຊີ່ງໜ້າ

ຄຸນນະພາບການຮຽນ-ການສອນ ແມ່ນຖືວ່າ ເປັນມາດຖານທີ່ຫຼາຍໆ ພາກສ່ວນທີ່ພວມເອົາໃສ່ພັດທະນາປັບປຸງ ລະບົບການສຶກສາ ຢ່າງຕໍ່ເນື່ອງ, ເຊິ່ງຄວາມໝາຍຄໍາວ່າ ຄຸນນະພາບແມ່ນຍັງມີລັກສະນະທີ່ແຕກຕ່າງກັນ ໃນທັດສະນະຂອງນັກວິຊາການ ເປັນຕົ້ນ ທ່ານ Sudarwan Danim (2007) ໃຫ້ຄວາມໝາຍຂອງຄຸນນະພາບວ່າ ການດີເລີດຂອງຜົນຜະລິດ ຫຼື ການປະຕິບັດວຽກ. ທ່ານ Matthew. M. Chingos (2013) ໃຫ້ທັດສະນະກ່ຽວກັບ ຄຸນນະພາບຂອງການຮຽນ-ການສອນ ແມ່ນໝາຍເຖິງຄຸນນະພາບຂອງຫຼັກສູດ, ຄຸນນະພາບຂອງການສິດສອນ, ຄຸນນະພາບຂອງຜູ້ຮຽນ ແລະ ອື່ນໆທີ່ກ່ຽວຂ້ອງ. Moss Julianne (2006)ໄດ້ລວບລວມແນວຄວາມຄິດກ່ຽວກັບຄຸນນະພາບການຮຽນ-ການສອນໄວ້ດັ່ງນີ້:

- ມະຫາວິທະຍາໄລ ກຣີນແລນ: 1) ເຂົ້າໃຈຜູ້ຮຽນໃຫ້ເລິກເຊິ່ງ, 2) ກໍ່ຄວາມທ້າວທັນທັງຄູ ແລະ ນັກຮຽນ, 2. ສ້າງແວດລ້ອມການຮຽນຮູ້ທີ່ມີປະສິດທິພາບ, 3) ສ້າງແວດລ້ອມການຮຽນຮູ້ຈາກການຮ່ວມມື ແລະ 4) ການສ້າງແວດລ້ອມການຮຽນຮູ້ຕິດພັນກັບວັດທະນະທໍາ, ສັງຄົມ ແລະ ສະພາບການຂອງທ້ອງຖິ່ນ ເຊິ່ງສິ່ງເຫຼົ່ານັ້ນ ມັນໄດ້ຕິດພັນກັບປະສິທິຜົນການສອນ, ການຮຽນ ແລະ ຕອບສະໜອງອຸປະກອນທີ່ມີຄຸນນະພາບຮັບໃຊ້ເຂົ້າໃນການຮຽນ-ການສອນ.
- ມະຫາວິທະຍາໄລ ເຊົາທ໌ເວລ: ເນັ້ນການສົ່ງເສີມຄຸນນະພາບຄວາມສະຫຼາດຄິດ, ຄຸນນະພາບແວດລ້ອມການຮຽນຮູ້, ແລະ ພັດທະນານັກຮຽນໃຫ້ເຫັນຄ່າທາງການຮຽນ ແລະ ໜ້າທີ່ຂອງນັກຮຽນຢ່າງຊັດເຈນ.
- ມະຫາວິທະຍາໄລ ວິກຕໍເຣຍ: ເນັ້ນການຮຽນ-ການສອນທີ່ເປີດໃຫ້ນັກຮຽນໄດ້ຄົ້ນຄິດດ້ວຍການຖາມ-ຕອບ , ຕອບສະໜອງຄວາມຮູ້ທີ່ຫຼາກຫຼາຍທີ່ເປັນພື້ນຖານແກ່ນັກຮຽນ, ສ້າງສະພາບແວດລ້ອມທາງສັງຄົມເພື່ອພັດທະນາການຄວາມສາມາດ ແລະ ຄວາມສະຫຼາດແກ່ນັກຮຽນ, ສ້າງເນື້ອໃນບົດສອນທີ່ສ້າງຄວາມຮູ້ ແລະ ທັກສະຢ່າງຈະແຈ້ງ ແລະ ສ້າງກຸ່ມນັກຮຽນທີ່ສາມາດສ້າງແວດລ້ອມການຮຽນຮູ້, ການຮ່ວມື ແລະ ສາມາດພັດທະນາສະມາຊິກໃນກຸ່ມຢ່າງ

ມີປະສິດທິຜົນ. ສິ່ງດັ່ງກ່າວມັນໄດ້ຕິດພັນກັບຍຸດທະວິທີການສິດສອນ ແລະ ກິດຈະກຳທີ່ສອດຄ່ອງ, ການປັບປຸງການສອນ ແລະ ພັດທະນາຕໍ່ຍອດການຮຽນ-ການສອນທີ່ຮັບປະກັນທັງປະລິມານ ແລະ ຄຸນນະພາບ.

ເຖິງຢ່າງໃດກໍ່ຕາມ, ກະຊວງສຶກສາທິການ ແລະ ກິລາ (2016), ໄດ້ລາຍງານວ່າ ຄຸນນະພາບການຮຽນ-ການສອນສອນຕາມມາດຖານຫຼັກສູດແຫ່ງຊາດ ຄື: 1) ຄຸນນະພາບດ້ານການການົດວິໃສທັດ,ພາລະກິດ ແລະ ວາງເປົ້າໝາຍທີ່ຊັດເຈນ, 2) ມາດຖານການຄຸ້ມຄອງບໍລິຫານ, 3) ຄຸນນະພາບດ້ານບຸກຄາລະກອນ, 4) ຄຸນນະພາບດ້ານຫຼັກສູດ, 5) ຄຸນນະພາບດ້ານການຈັດການຮຽນ-ການສອນ, 6) ຄຸນນະພາບດ້ານການສົ່ງເສີມຜູ້ຮຽນ, 7) ຄຸນນະພາບດ້ານການສ້າງແວດລ້ອມການຮຽນຮູ້, 8) ຄຸນນະພາບດ້ານແຫ່ງຂໍ້ມູນຂ່າວສານ, 9) ດ້ານການຄົ້ນຄວ້າ ແລະ ບໍລິການສັງຄົມ, 10) ດ້ານຄຸນນະພາບການນາໃຊ້ເຕັກໂນໂລຊີທີ່ສອດຄ່ອງ ເພື່ອເຮັດໃຫ້ຜູ້ຮຽນ-ການສອນມີຜົນສຳເລັດສູງ.

## 2.2 ຂອບຄວາມຄິດກ່ຽວກັບການຈັດການຮຽນ-ການສອນແບບອອນໄລນ໌.

### 2.2.1 ຄວາມໝາຍຂອງການຮຽນ-ການສອນແບບອອນໄລນ໌.

ການຈັດການຮຽນ-ການສອນແບບອອນໄລນ໌ ແມ່ນເປັນຂະບວນການດຳເນີນການຮຽນ-ການສອນ ໂດຍການນຳໃຊ້ອິນເຕີເນັດ ຜ່ານຊ່ອງທາງສື່ສັງຄົມອອນໄລນ໌ ແລະ ໂປຣແກຣມຕ່າງໆທາງຄອມພິວເຕີ, ໄອພອດ ແລະ ໂທລະສັບ ທີ່ສາມາດສົ່ງເສີມໃຫ້ເກີດຂະບວນການຮຽນຮູ້ແກ່ຜູ້ຮຽນ. ທ່ານ (Sadiku, et al. (2017; 1-3) ແລະ Donna Zucker & Robert S. Feldman ( 2022)ນິຍາມວ່າ ການຮຽນ-ການສອນແບບອອນໄລນ໌ ແມ່ນຖືກອອກແບບເພື່ອໃຫ້ຜູ້ຮຽນ ແລະ ຜູ້ສອນ ສາມາດເຂົ້າເຖິງການຮຽນ-ການສອນທີ່ທັນສະໄໝ ບົນພື້ນຖານຄວາມສາມາດ ໃນການນຳການນຳໃຊ້ເຕັກໂນໂລຊີ, ທັງເປັນການອຳນວຍຄວາມສະດວກໃຫ້ຜູ້ຮຽນ ແລະ ຜູ້ສອນສາມາດຈັດຕັ້ງປະຕິບັດໄດ້ທຸກສະຖານທີ່ ແລະ ເວລາຕາມຄວາມເໝາະສົມ. Tapscott ( (2009) ໃນການຮຽນ-ການສອນແບບອອນໄລນ໌ ຖືວ່າ ບົດບາດໃນການສົ່ງເສີມການຮຽນຮູ້ແມ່ນມີຫຼາຍ, ນັກຮຽນສາມາດຄົ້ນຄວ້າ ແລະ ຮຽນຮູ້ແບບອິດສະຫຼະ ພາຍໃຕ້ການຄວບຄຸມຂອງຄູສອນຢ່າງເປັນລະບົບ ແຕ່ອາດມີຈະຍັງບໍ່ທັນຄວບຄຸມ ແລະ ເຂົ້າເຖິງນັກຮຽນໄດ້ຢ່າງພຽງພໍໃນສະພາບການທີ່ແຕກຕ່າງກັນ, ເຊິ່ງມີຄວາມຈຳເປັນຫຼາຍທີ່ຕ້ອງໄດ້ຂະຫຍາຍ ແລະ ພັດທະນາຂີດຄວາມສາມາດທັງຄູສອນ ແລະ ນັກຮຽນໄປພ້ອມກັນ. ເຖິ່ງ ຜ່ານອິນເຕີເນັດເປັນຫຼັກ ເພາະສະນັ້ນ, ຜູ້ຮຽນສ່ວນໃຫຍ່ແມ່ນຖືກແຍກຕົວຢູ່ແບບໂດດດ່ຽວ, ຖ້າເປັນການດີໃນການເພີ່ມຄຸນນະພາບຂອງຫຼັກສູດໃດໜຶ່ງ ຄວນອອກແບບໃຫ້ມີລັກສະນະປະສົມປະສານ.

### 2.2.2 ຫຼັກການ ການຮຽນ-ການສອນແບບອອນໄລນ໌

ການຮຽນ-ການສອນອອນໄລນ໌ ແມ່ນເປັນການສອນທີ່ເນັ້ນພື້ນຖານ ແລະ ຫຼັກການທາງດ້ານຄວາມສາມາດ ດ້ານນຳໃຊ້ ເຕັກໂນໂລຊີ ສະນັ້ນ, ການຈັດການຮຽນ-ການສອນດັ່ງກ່າວ ລວມມີທັງຈຸດດີ ແລະ ຈຸດອ່ອນເຊິ່ງບັນດານັກຄົ້ນຄວ້າ ແລະ ນັກວິຊາການໄດ້ກຳນົດຫຼັກການປະກັນຄຸນນະພາບໄວ້ຢ່າງຫຼາກຫຼາຍທີ່ແຕກຕ່າງກັນ ໃນສະພາບການທີ່ແຕກຕ່າງກັນ. California Community Colleges ( 2021) ໄດ້ການົດຫຼັກການປະກັນຄຸນນະພາບການສອນແບບອອນໄລນ໌ ໄວ້ດັ່ງນີ້:

- **ຫຼັກສູດທີ່ມີປະສິດທິຜົນ:** ການປະເມີນຜົນ ແລະ ນາໃຊ້ເຄື່ອງມືເຕັກໂນໂລຊີ ເຂົ້າມາພັດທະນາຜູ້ຮຽນ, ຕອບສະໜອງສະພາບແວດລ້ອມແກ່ຜູ້ຮຽນໃຫ້ນັກຮຽນທຸກຄົນ, ສັງລວມ, ພັດທະນາເຄື່ອງມື ແລະ ກິດຈະກຳຕ່າງໆ

ສົ່ງເສີມນັກຮຽນ, ການສົນທະນາ ແລະ ການນຳສະເໜີລະຫວ່າງນັກຮຽນ ແລະ ສົ່ງເສີມການປະການຮ່ວມມືເພື່ອການຮຽນຮູ້ລະຫວ່າງຄູກັບນັກຮຽນ.

- **ການເລືອກຫຼັກການສິດສອນທີ່ມີປະສິທິພາບ:** ພັດທະນາເນື້ອໃນຫຼັກສູດ, ວິທີສິດສອນ ແລະ ຄວາມສາມາດດ້ານວິຊາຄູ, ຊຸກຍູ້ສົ່ງເສີມນັກຮຽນທີ່ສອດຄ່ອງກັບຄວາມຄາດຫວັງຂອງນັກຮຽນ, ພ້ອມທັງສົ່ງເສີມຄວາມຮູ້ດ້ານເຕັກໂນໂລຊີແກ່ນັກຮຽນຢ່າງທົ່ວເຖິງ, ສຶກສາອົບຮົມນັກຮຽນ ແລະ ສົ່ງເສີມການພົວພັນໃຫ້ຫຼາຍຂຶ້ນ, ສ້າງຄວາມສະເໝີພາບການຮຽນຮູ້ ແລະ ຈັດການຮຽນ-ການສອນແບບອອນໄລນ໌ ໃຫ້ບັນລຸຜົນສຳເລັດຕາມແຜນຍຸດທະສາດຂອງໂຮງຮຽນວາງໄວ້.
- **ມີຄູສອນແບບ**ອອນໄລນ໌ ທີ່ມີປະສິດທິພາບ ແລະ ປັບປຸງຂໍ້ຫຼັກສູດຢ່າງຕໍ່ເນື່ອງ: ມີການປະເມີນຜົນຈັດຕັ້ງປະຕິບັດຫຼັກສູດ, ຄຸນນະພາບຜູ້ຮຽນ ແລະ ຄູສອນແບບອອນໄລນ໌ ຢ່າງຕໍ່ເນື່ອງ ເພື່ອພັດທະນາແຜນການສອນ ແລະ ຫຼັກສູດ ປະຈຳພາກຮຽນ ແລະ ສົກຮຽນ.
- **ການເປັນຕົວແບບຂອງຄູສອນ:** ຄູຄວນເປັນຕົວແບບໃນດ້ານຄວາມສາມາດການໍາໃຊ້ເຕັກໂນໂລຊີ ທັງມີຈັນຍາບັນ, ມີລະບຽບການນໍາໃຊ້ ເພື່ອໃຫ້ນັກຮຽນໄດ້ເອົາເປັນແບບຢ່າງ ແລະ ຊຸກຍູ້ສົ່ງເສີມໃຫ້ນັກຮຽນໄດ້ມີໂອກາດໃນການສ້າງເນື້ອໃນ ແລະ ນະວັດຕະກຳດ້ານຈາກເຕັກໂນໂລຊີ ຢ່າງເໝາະສົມ.
- **ຄູຄືນັກພັດທະນາຢ່າງມືອາຊີບ:** ການປັບຕົວ, ຕື່ນຕົວ ແລະ ການຮັບຮູ້ໃນການພັດທະນາຄວາມສາມາດຢ່າງຕໍ່ເນື່ອງ ຖືວ່າເປັນສ່ວນທີ່ສຳຄັນທີ່ ຄູຕ້ອງໄດ້ພັດທະນາເພື່ອສ້າງຜົນສຳເລັດໃຫ້ໂຮງຮຽນຢ່າງສະໝ່ຳສະເໝີ ເຊັ່ນ: ການຊອກຮູ້ຮໍ່າຮຽນດ້ວຍຕົນເອງ, ການເຂົ້າຮ່ວມກອງປະຊຸມວິຊາການ ແລະ ສຳມະນາວິຊາການອື່ນໆ.

Stern, J. (2019) ໄດ້ກຳນົດຫຼັກການສິດສອນຮູບອອນໄລນ໌ ອອກເປັນ 7 ຫຼັກການດັ່ງນີ້: 1) ຊຸກຍູ້ໃຫ້ນັກຮຽນມີສ່ວນຮ່ວມ, 2) ສົ່ງເສີມໃຫ້ນັກຮຽນມີການຮ່ວມມື, 3) ຊຸກຍູ້ໃຫ້ນັກຮຽນຫ້າວຫັນ, 4) ໃຫ້ຄຳປັບປຸງຢ່າງວ່ອງໄວ, 5) ເນັ້ນເວລາການມອບວຽກ, 6) ກຳນົດຄວາມຄາດຫວັງຜົນສາເລັດໄວ້ໃນລະດັບສູງ, 7) ເຄົາລົບຄວາມສາມາດ ແລະ ວິທີການຮຽນທີ່ຫຼາກຫຼາຍ. ນອກນີ້, H. Zsohar and J. A. Smith (2016), ຍັງເນັ້ນ 7 ຫຼັກການສອນຮູບແບບອອນໄລນ໌ ຄື: 1) ແກ້ໄຂຄວາມແຕກຕ່າງລະຫວ່າງບຸກຄົນ, 2) ກະຕຸ້ນໃຫ້ນັກຮຽນສົນໃຈການຮຽນ, 3) ຫຼີກລຽງການໃຫ້ຂໍ້ມູນ ແລະ ວຽກແກ່ນັກຮຽນຫຼາຍເກີນໄປ, 4) ສ້າງກິດຈະກຳນຳໃຊ້ເຕັກໂນໂລຊີ ແລະ ທີ່ຕິດພັນກັບຊີວິດຈິງ, 5) ສົ່ງເສີມໃຫ້ນັກຮຽນມີການພົວພັນແລກປ່ຽນຫຼາຍຂຶ້ນ, 6) ສົ່ງເສີມກິດຈະກຳປະຕິບັດຕົວຈິງ ແລະ 7. ຊຸກຍູ້ໃຫ້ມີການຕຳນິສິ່ງຂ່າວລະຫວ່າງນັກຮຽນ ແລະ ຄູສອນ.

### 2.2.3 ປະສິດທິຜົນຂອງການຈັດການຮຽນ-ການສອນແບບອອນໄລນ໌.

ການຈັດການຮຽນ-ການສອນແບບອອນໄລນ໌ ແມ່ນເປັນການສິດສອນອີກວິທີໜຶ່ງ ທີ່ເໝາະສົມສຳລັບນັກຮຽນທີ່ສາມາດເຂົ້າຮ່ວມຫ້ອງຮຽນໄດ້ເປັນປົກກະຕິ, ເປັນການພັດທະນາການຮຽນຮູ້ຜ່ານການນຳໃຊ້ເຕັກໂນໂລຊີ ແລະ ເຮັດໃຫ້ຜູ້ຮຽນສາມາດຮຽນຮູ້ໄດ້ຢ່າງອິດສະຫຼະ ເປັນຕົ້ນຜູ້ທີ່ຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກ, ຜູ້ທີ່ເຮັດວຽກເຕັມເວລາ, ແລະ ຜູ້ສົນໃຈການຮຽນຮູ້ແບບອິດສະຫຼະດ້ວຍຕົນເອງ. ດັ່ງທີ່ ທ່ານ Stern, J. ( 2019) ໄດ້ການົດຜົນດີໃນການຮຽນ-ການສອນແບບອອນໄລນ໌ ຄື: ມີຄວາມສະດວກ, ມີໂອກາດໃນການພັດທະນາຄວາມຮູ້ໄດ້ຫຼາຍ, ມີໂອກາດໃຫ້ຜູ້ຮຽນໄດ້ມີເວລາຄົ້ນຄິດຫຼາຍຂຶ້ນ, ມີການແລກປ່ຽນສື່ສານໃນບົດຮຽນຫຼາຍຂຶ້ນ, ມີການສ້າງນະວັດຕະກຳການສອນ, ໄດ້ປັບປຸງດ້ານການບໍລິຫານຈັດການ, ປະຫຍັດ, ລົດການແອອັດ ແລະ ສາມາດເຂົ້າຮຽນໄດ້ທົ່ວໂລກ.

ນອກຈາກນີ້, ທ່ານ Berge, Z. L., (1995) ຍັງໃຫ້ທັດສະນະຕໍ່ກັບຄວາມສາມາດເຮັດໃຫ້ການຮຽນ-ການສອນແບບອອນໄລນ໌ ປະສົບຜົນສຳເລັດ ປະກອບດ້ວຍຄວາມສາມາດ 4 ດ້ານຄື: 1) ຄວາມສາມາດດ້ານວິຊາຄູ 2) ດ້ານທັກສະສັງຄົມ, 3) ດ້ານບໍລິຫານຈັດການ ແລະ 4) ຄວາມສະມາດດ້ານວິຊາການ.

**2.2.4 ຄວາມສາມາດໃນການຈັດຕັ້ງການສອນ ຮູບແບບອອນໄລນ໌.**

ຄວາມສາມາດໃນການສອນແບບອອນໄລນ໌ ແມ່ນໝາຍເຖິງໂຮງຮຽນ ແລະ ຄູສອນຕ້ອງໄດ້ເປັນຜູ້ຂັບເຄື່ອນ ແລະ ພັດທະນາອົງຄວາມຮູ້, ຄວາມສາມາດ ແລະ ທັກສະເຂົ້າໃນການຈັດຕັ້ງການຮຽນ-ການສອນ, ການພັດທະນາກິດຈຳກຳ ແລະ ເຄື່ອງມືການສອນ ທີ່ຮັບປະກັນປະສິດທະພາບ ແລະ ປະສິດທິຜົນສູງ. ທ່ານ (Richey, Fields, & Foxon, 2001:26); ທ່ານ (Williams, 2003) **ອ້າງອີງໃນ** ທ່ານ Martin, F., et al., (2019) ໄດ້ນິຍາມຄວາມສາມາດການຈັດການຮຽນ-ການສອນແບບອອນໄລນ໌ ຂອງສະຖາບັນການສຶກສາ ອອກເປັນ 4 ຂົດຄວາມສາມາດຄື: 1) ຄວາມສາມາດໃນການດ້ານຮຽນ-ການສອນ, 2) ຄວາມສາມາດດ້ານການສື່ສານ ແລະ ການພົບພັນ, 3) ຄວາມສາມາດດ້ານການບໍລິຫານ ແລະ ຈັດການ ແລະ 4) ຄວາມສາມາດດ້ານເຕັກໂນໂລຊີ.

Hiltz, S. R., & Turoff, M (2005) ຄາດຄະເນວ່າຫຼາຍສະຖາບັນຈະໄດ້ຮັບຜົນກະທົບຈາກຄວາມຕ້ອງການ ການສຶກສາອອນໄລນ໌ທີ່ເພີ່ມຂຶ້ນ ແລະ ສະຖາບັນການສຶກສາ ໄດ້ປັບລະດັບສາມາດແບບປະສົມປະສານລະບົບທັງອອນໄລນ໌ ແລະ ແບບດັ້ງເດີມຢ່າງມີປະສິດທິຜົນສູງ. ທ່ານ Kebritchi, M., Lipschuetz, A., & Santiague, L. (2017) ລະບຸວ່າ ສະຖາບັນການສຶກສາ ມີຄວາມຈຳເປັນຕ້ອງໄດ້ສະໜອງດ້ານການພັດທະນາວິຊາຊີບສຳລັບຄູ, ແລະ ບົດບາດຂອງນັກຮຽນໃຫ້ເຂົ້າໃຈເລິກເຊິ່ງ ພ້ອມສະຫນັບສະໜູນດ້ານວິຊາການທີ່ມີຄຸນນະພາບເພື່ອຮັບປະກັນການຮຽນຮູ້ອອນໄລນ໌. (Allen, I. E., & Seaman, J. (2014) ຍັງໄດ້ລະບຸວ່າການສຶກສາອອນໄລນ໌ມີແນວໂນ້ມຄວາມນິຍົມເພີ່ມຂຶ້ນ ແລະ ມີຜູ້ຄົນຈຳນວນຫຼາຍ ສະໝັກເຂົ້າຮຽນຫຼັກສູດອອນໄລນ໌ ຫຼາຍກ່ວາຫຼັກສູດການຮຽນແບບເຊິ່ງໜ້າທຸກໆປີ.

**2.2.5 ປຽບທຽບລະຫວ່າງການຮຽນ-ການສອນຮູບແບບເຊິ່ງໜ້າ ແລະ ແບບອອນໄລນ໌.**

Chickering, A. W., & Gamson, Z. F. ( 1999), ໄດ້ລະຫຼຸບສົມທຽບຄວາມແຕກຕ່າງລະຫວ່າງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນ**ໄລນ໌ດັ່ງຕາຕະລາງລຸ່ມນີ້:**

ຕາຕະລາງ: ປຽບທຽບການຈັດຕັ້ງການຮຽນ-ການສອນການຮຽນແບບເຊິ່ງໜ້າ ແລະ ການຮຽນແບບອອນໄລນ໌

| **ການຮຽນແບບອອນໄລນ໌** | **ການຮຽນແບບເຊິ່ງໜ້າ** |
|---|---|
| **ຂໍ້ດີ:**<br>1. ຈັດຕັ້ງການຮຽນ-ການສອນຢູ່ບ່ອນໃດບ່ອນໜຶ່ງທີ່ສະດວກ.<br>2. ສາມາດສຶກສາ ແລະ ທົບທວນໄດ້ຕະຫຼອດເພາະສາມາດບັນທຶກການສອນໄວ້ໄດ້.<br>3. ຄູສາມາດເຊີນຜູ້ຊ່ຽວຊານມາແລກປ່ຽນຄວາມຮູ້ຜ່ານລະບົບອອນໄລນ໌ ໄດ້.<br>4. ນັກຮຽນສາມາດນຳໃຊ້ອຸປະກອນການຮຽນຮູ້ທີ່ | **ຂໍ້ດີ:**<br>1. ຝຶກພື້ນຖານຂອງຜູ້ຮຽນ.<br>2. ມີຜູ້ໃຫ້ຄຳແນະນຳ, ປຶກສາ.<br>3. ເຮັດໃຫ້ຮູ້ວ່າຕົນເອງມັກຫຼືບໍ່ມັກຫຍັງ.<br>4. ຜູ້ຮຽນໄດ້ຮຽນ ແລະ ປະຕິບັດກິດຈະກຳໂດຍກົງໃນຫ້ອງຮຽນ.<br>5. ຜູ້ຮຽນໄດ້ປຶກສາຫາລືກັບໝູ່, ເຫັນໝູ່ໃໝ່ໆໃນຫ້ອງ ແລະ ຄູສອນ ເປັນການຜ່ອນຄາຍຄວາມ |

| | |
|---|---|
| ຫຼາກຫຼາຍ.<br>5. ປະຫຍັດເວລາ ແລະ ຄ່າໃຊ້ຈ່າຍໃນການເດີນທາງທັງ ຜູ້ຮຽນ ແລະ ຜູ້ສອນ.<br>6. ປອດໄພຈາກການຕິດເຊື້ອ ແລະ ການແຜ່ລະບາດຂອງພະຍາດ.<br>7. ຜູ້ຮຽນ ແລະ ຜູ້ສອນມີການພັດທະນາຄວາມຮູ້ທາງດ້ານເທັກໂນລຊີໄປໃນຕົວ. | ອິດເໝື່ອຍ.<br>6. ຜູ້ສອນໄດ້ວາງແຜນການສອນໄດ້ຕາມຫຼັກສູດທີ່ກຳນົດໄວ.<br>7. ມີສະຖານທີ່ ແລະ ເວລຮຽນທີ່ແນ່ນອນ.<br>8. ມີຄວາມສາມັກຄີທັງຄູ ແລະ ນັກສຶກສາໄປພ້ອມໆກັນ. |
| **ຂໍ້ຈຳກັດ:**<br>1. ທັກສະຂອງຄູ ພົບວ່າຄູບາງຄົນບໍ່ຄຸ້ນເຄີຍກັບ ການນຳໃຊ້ເຄື່ອງມື ຫຼື ເຕັກໂນໂລຊີເຂົ້າໃນການຈັດການຮຽນ-ການສອນ.<br>2. ການຜະລິດສື່ການຮຽນການສອນ ຄູສອນທັງໝົດບໍ່ມີຄວາມຮູ້ ມີຄວາມຊຳນິຊຳນານໃນການຜະລິດເອກະສານວິດີໂອເພື່ອນຳໃຊ້ເຂົ້າໃນການຮຽນ-ການສອນ ຫຼືການສອບເສັງອອນໄລນ໌ .<br>3. ຄວາມພ້ອມຂອງນັກຮຽນເຊັ່ນອຸປະກອນສະໜັບສະໜູນໃນການຮຽນຮູ້ ແລະ ບາງຄົນອາໄສຢູ່ໃນເຂດຫ່າງໄກສອກຫຼີກ, ບໍ່ມີສັນຍານອິນເຕີເນັດ.4. ຄວາມເປັນລະບຽບຂອງຜູ້ຮຽນ, ເຊິ່ງເປັນລັກສະນະທີ່ສຳຄັນຫຼາຍຂອງການຮຽນຮູ້ທາງອອນໄລນ໌ ເນື່ອງຈາກຜູ້ຮຽນບາງກຸ່ມຍັງຂາດລະບຽບວິໄນໃນການຮຽນ.<br>5. ຄ່າໃຊ້ຈ່າຍເພີ່ມຂຶ້ນ ເຊັ່ນ: ຄ່າໄຟຟ້າ, ຄ່າອິນເຕີເນັດ ແລະ ອື່ນໆ<br>6. ບັນຫາທາງດ້ານເຕັກນິກ ເຊັ່ນ: ໄຟຟ້າດັບ, ບັນຫາຄອມພິວເຕີ, ລະບົບອິນເຕີເນັດຫຼືສັນຍານບໍ່ສະຖຽນລະພາບ, ສິ່ງພົນໃຫ້ມີອຸປະສັກຕໍ່ການຮຽນ-ການສອນ. | **ຂໍ້ຈຳກັດ:**<br>1. ຖ້າຄວາມຮູ້ທີ່ສອນເປັນຄວາມຮູ້ເກົ່ານັກຮຽນກໍ່ຈະບໍ່ຢາກຟັງ.<br>2. ເສຍເວລາເດີນທາງ.<br>3. ເສຍຄ່າໃຊ້ຈ່າຍໃນການເດີນທາງ, ການກິນ ແລະ ຄ່າທີ່ພັກເຊົາ.<br>4. ບໍ່ໄດ້ພັດທະນາຄວາມຮູ້ທາງເອກະເລັກໂທນິກທີ່ຫຼາກຫຼາຍ. |

**ໝາຍເຫດ: ຂໍ້ດີ ແລະ ຂໍ້ຈາກັດຂອງການຮຽນແບບອອນໄລນ໌ມີດັ່ງນີ້:**

- **ຂໍ້ດີ:**
  1. ຫຼຸດຜ່ອນເວລາເດີນທາງ ທັງຄູ ແລະ ນັກຮຽນ
  2. ມີໂຄງການຊ່ວຍຄຸ້ມຄອງ ກວດເບິ່ງຊື່ຂອງນັກຮຽນ ແລະໄດ້ຮັບເອກະສານການທົດສອບ ໃຊ້ເພື່ອປະເມີນການຮຽນຮູ້ທີ່ສະດວກກວ່າ.
  3. ມີຊ່ອງທາງການສື່ສານລະຫວ່າງຄູອາຈານ ແລະ ຜູ້ຮຽນແມ່ນສະດວກ

4. ໃຊ້ເຄື່ອງມືອອນໄລນ໌ ເພື່ອຄົ້ນຄວ້າເພີ່ມເຕີມ.

- **ຂໍ້ຈຳກັດ:**

1. ການສອນການສື່ສານທາງດຽວ ມີໂອກາດທີ່ຈະເກີດຄວາມຜິດພາດການຮັບຮູ້. ດັ່ງນັ້ນ, ຕ້ອງມີການທົດສອບທີ່ປະເມີນການຮຽນຮູ້ຂອງຜູ້ຮຽນ.
2. ການເຂົ້າເຖິງອຸປະກອນການຮຽນຮູ້ອອນໄລນ໌ ເຊັ່ນ: ໂທລະພາບ, ໂທລະສັບມືຖື, ແທັບເລັດ, ຫຼືການເຊື່ອມຕໍ່ອິນເຕີເນັດຍັງຈຳກັດ.
3. ນັກຮຽນບໍ່ສາມາດຕັ້ງໃຈຮຽນໄດ້. ຖ້າໃຊ້ໂທລະສັບມືຖື ຈະລັກເອົາໂທລະສັບມືຖືມາຫຼິ້ນໃນເວລາຮຽນ.
4. ນັກຮຽນບໍ່ສາມາດສະທ້ອນເຖິງຄວາມຖືກຕ້ອງຂອງຂໍ້ມູນ ຈາກການເຂົ້າເຖິງຂໍ້ມູນທີ່ບໍ່ໜ້າເຊື່ອຖື.
5. ເດັກນ້ອຍນັກຮຽນໃຊ້ເວລາອອນໄລນ໌ ຫຼາຍເກີນໄປ.
6. ພໍ່ແມ່ຕອບຄຳຖາມ ຫຼືເຮັດວຽກບ້ານໃຫ້ລູກ.
7. ພໍ່ແມ່ບໍ່ມີເວລາເບິ່ງແຍງລູກ ເພາະວ່າເຂົາເຈົ້າຕ້ອງເຮັດວຽກ

## 2.3. ຂອບແນວຄວາມຄິດກ່ຽວກັບ ການຮຽນ-ການສອນຮູບແບບປະສົມປະສານ

ການຮຽນ-ການສອນແບບປະສົມປະສານ ເປັນການຮຽນ-ການສອນທີ່ເນັ້ນການຮຽນແບບປະສົມປະ ສານລະຫວ່າງຮູບແບບການສອນເຊິ່ງໜ້າ ແລະ ແບບອອນໄລນ໌ ໂດຍນຳໃຊ້ເທັກໂນໂລຊີຂໍ້ມູນຂ່າວສານເປັນຕົວຂັບເຄື່ອນຫຼັກໃນການຈັດຕັ້ງຫຼັກສູດການຮຽນ-ການສອນຮູບແບບນີ້. ນອກນີ້, ການສອນແບບນີ້ຍັງເປັນການສົ່ງເສີມໃຫ້ຜູ້ຮຽນໄດ້ຮຽນຮູ້ຜ່ານການສອນທີ່ແຕກຕ່າງກັນເຊິ່ງທີ່ພາໃຫ້ເກີດປະສົບການຮຽນຮູ້ ທີ່ມີຄວາມເໝາະສົມກັບສະພາບຂອງຜູ້ຮຽນທີ່ຕ້ອງການເວລາການຮຽນຮູ້ດ້ວຍຕົນເອງ. Graham, Ch. R., Borup, J., Short, C. R., & Archambault., L. ( 2019), ໄດ້ກ່າວວ່າ ການສອນປະສົມປະສານ ແມ່ນການສອນປະສົມປະສານລະຫວ່າງ ແບບເຊິ່ງໜ້າ ແລະ ແບບອອນອອນໄລນ໌. Kaleta, R., Garnham, C., and Aycock, A. (2005), ໄດ້ໃຫ້ທັດສະນະກ່ຽວກັບປະສິດຜົນຂອງການສອນແບບປະສົມປະສານ ຄື: ເປັນຍຸດທະສາດການຮຽນ-ການສອນທີ່ຫຼຸດຜ່ອນພື້ນທີ່ການຈັດການຮຽນ-ການສອນໃນສະ ຖານສຶກສາ, ເຮັດໃຫ້ເກີດການຮຽນແບບປະສົມປະສານ ເພື່ອເກີດການຮ່ວມມືແລະ ການພົວພັນໃນການສື່ສານແລກປ່ຽນຮຽນຮູ້ ໂດຍການນຳໃຊ້ເຕັກໂນໂລຊີເປັນເຄື່ອງມືທີ່ສຳຄັນໃນການສື່ສານຮຽນຮູ້ໄດ້ຫຼາຍຂຶ້ນ ທັງເປັນການເປີດໂອກາດໃຫ້ຜູ້ ຮຽນໄດ້ລົງມືປະຕິບັດຕົວຈິງ, ຜູ້ຮຽນມີໂອກາດໄດ້ກະກຽມບົດຮຽນ, ສຶກສາຄົ້ນຄວ້າ ແລະ ເຮັດກິດຈະກຳຮ່ວມກັບໝູ່ເພື່ອນຫຼາຍຂຶ້ນ ເຊິ່ງສິ່ງຜົນເຮັດໃຫ້ຜູ້ຮຽນໄດ້ແລກປ່ຽນບົດຮຽນຢ່າງມີປະສິດທິຜົນສູງ.

## 2.4. ບົດບາດຂອງຄູ ແລະ ນັກສຶກສາ.

ພວກເຮົາຮູ້ນຳກັນແລ້ວວ່າ, ການສຶກສາ ໄດ້ສ້າງຄົນໃຫ້ເປັນພົນລະເມືອງດີ, ມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກລະບອບໃໝ່, ມີລະບຽບວິໄນ, ເຄົາລົບກົດໝາຍ, ສ້າງສັງຄົມໃຫ້ມີຄວາມຮັບຮູ້, ມີອາຊີບ ແລະ ມີຄວາມສາມາດ, ໃນນັ້ນ, ມີບົດບາດໃນການປະຕິບັດ ຕາມສິດ ແລະ ໜ້າທີ່ຂອງສະຖາ ນະພາບຄື ບົດບາດຂອງພໍ່ແມ່ຕ້ອງລ້ຽງດູລູກ ແລະ ບົດບາດຂອງຄູ ຄືສັ່ງສອນອົບຮົມນັກຮຽນໃຫ້ດີ ຫຼື ໝາຍເຖິງພາລະໜ້າທີ່ຕ້ອງຮັບຜິດຊອບ

ຕາມສະຖານະພາບຂອງແຕ່ລະບຸກຄົນ. ສະນັ້ນ, ພາລະໜ້າທີ່ຂອງຄູ ກໍ່ຄືສັ່ງສອນ, ອົບຮົມນັກຮຽນ-ນັກສຶກສາ ໃຫ້ຄົນມີຄວາມຮູ້-ຄວາມສາມາດ, ມີຄຸນນະທຳ ແລະ ສິນທຳປະ ຕິວັດ, ກາຍເປັນລູກທີ່ດີຂອງພໍ່-ແມ່, ເປັນສິດທີ່ດີຂອງຄູ, ເປັນພົນລະເມືອງດີຂອງສັງຄົມ ແລະ ປະເທດຊາດ, ຊຶ່ງບໍ່ມີບຸກຄົນໃດ ແລະ ຊັ້ນຄົນໃດທີ່ຈະປະຕິເສດຄູໄດ້. ຜູ້ທີ່ມາເປັນຄູ່ນັ້ນຕ້ອງຮັບພາລະໜ້າທີ່ຕໍ່ສັງ ຄົມ ແລະ ປະເທດຊາດ, ບົດບາດຂອງຄູ ຈຶ່ງຖືວ່າໜັກໜ່ວງແຕ່ມີກຽດສະຫງ່າທີ່ສຸດ, ແຕ່ຈະໄດ້ຮັບຜົນກະທົບຕາມມາພາຍຫຼັງທີ່ມີຄຸນຄ່າອັນສູງສົ່ງທີ່ສຸດ ໃນສັງຄົມ ແລະ ໜ້າທີ່ຂອງຄູ ມີຄວາມໝາຍສຳຄັນຫຼາຍທີ່ສຸດ, ເພາະເປັນຜູ້ທີ່ປູກຝັງຄວາມຮູ້, ຄວາມຄິດ ແລະ ຈິດໃຈໃຫ້ແກ່ນັກຮຽນ-ນັກສຶກສາ ເພື່ອໃຫ້ເປັນພົນລະເມືອງດີ ແລະ ມີປະສິດທິພາບຂອງປະເທດຊາດ. ສະນັ້ນ, ຄູ ຈິ່ງເປັນຜູ້ທີ່ມີບົດບາດສຳຄັນທີ່ສຸດ ໃນການພັດທະນາສັງຄົມ ແລະ ປະເທດຊາດໃນທຸກໆດ້ານ, ເພາະສັງຄົມ ແລະ ປະເທດຊາດຈະມີຄວາມຈະເລີນກ້າວໜ້າ, ສີວິໄລ ແລະ ໝັ້ນຄົງ ຫຼາຍທ່ານໄດ້ໃຫ້ຄວາມໝາຍຂອງຄູວ່າ:

ອະວິທຸດ ເຫມມານຸຣັກ (2017: 1-3) ຄູແມ່ນຜູ້ທີ່ມີຄວາມສາມາດໃນການໃຫ້ຄຳແນະນຳ ເພື່ອຜົນປະໂຫຍດຂອງການຮຽນຮູ້ ສຳລັບນັກສຶກສາ ຫຼືນັກສຶກສາໃນສະຖາບັນການສຶກສາຕ່າງໆ ທັງພາກລັດ ແລະ ເອກະຊົນ ມີໜ້າທີ່ ຫຼື ອາຊີບໃນການສອນ ໃຫ້ຄວາມຮູ້ນັກຮຽນ ກ່ຽວກັບຄວາມຮູ້ ຫຼັກການຂອງການອ່ານ ລວມທັງການປະຕິບັດ ແລະ ຄຳແນະນຳສຳລັບການເຮັດວຽກ ວິທີການສິດສອນທີ່ແຕກຕ່າງກັນໄປຕາມພື້ນຖານຄວາມຮູ້, ຄວາມສາມາດ ແລະ ເປົ້າໝາຍຂອງນັກຮຽນແຕ່ລະຄົນ.

ຄູອາຈານ ແລະ ນັກຮຽນແມ່ນຄົນທີ່ໃກ້ຊິດທີ່ສຸດຂອງກັນ ແລະ ກັນ ບໍ່ວ່າໃນຍຸກສະໃໝໃດຈົນເຖິງປັດຈຸບັນ, ຄູສອນຖືໄດ້ວ່າເປັນພໍ່, ເປັນແມ່ຜູ້ທີສອງຂອງນັກຮຽນ, ພໍ່ແມ່ເມື່ອສົ່ງລູກໄປໂຮງຮຽນ, ໄດ້ວາງຄວາມຫວັງໄວ້ກັບຄູສອນ, ນັ້ນແມ່ນຕ້ອງມອບພາລະໃນການຝຶກອົບຮົມ, ບົ່ມສອນ, ໃຫ້ຄວາມຮູ້ ແລະ ເບິ່ງແຍງດູແລເຂົາເຈົ້າ. ສະນັ້ນ, ຄູຄວນປະຕິບັດໜ້າທີ່ຂອງຄູໃຫ້ຄົບຖ້ວນເທົ່າທີ່ຈະເປັນໄປໄດ້ ແລະ ຄວນສ້າງມະນຸດສຳພັນທີ່ດີລະຫວ່າງຄູ ແລະ ນັກຮຽນ ຂໍໃຫ້ພວກລູກສິດມີຄວາມຮູ້ສຶກທີ່ຖືກຝັງໄວ້ໃນສິ່ງທີ່ດີຕະຫຼອດໄປ.

**1. ຄູ-ອາຈານປົກກະຕິ:** ຄູ-ອາຈານປົກກະຕິ ໝາຍເຖິງ ຄູທີ່ສອນເຕັມເວລາ, ຄູຂອງລັດຖະບານທີ່ເບິ່ງແຍງນັກຮຽນໃນຫ້ອງຮຽນ ຫຼື ຫ້ອງຮຽນເປັນເວລາໜຶ່ງພາກຮຽນ ຫຼື ໜຶ່ງປີການສຶກສາ ແລະ ປະຕິບັດຫນ້າທີ່ບໍລິຫານໃນຫ້ອງຮຽນ. ໃນເມື່ອກ່ອນ, ຄວາມສຳພັນຂອງຄູອາຈານໃນບ້ານເປັນຄືກັບພໍ່ແມ່ຜູ້ທີສອງ ພວກເຂົາເຈົ້າຈຳເປັນຕ້ອງໄດ້ດູແລພວກເຂົາ, ຝຶກອົບຮົມໃຫ້ເຂົາເຈົ້າ, ຊ່ວຍໃຫ້ເຂົາເຈົ້າແກ້ໄຂບັນຫາ ແລະ ເຊື່ອມຕໍ່ຄວາມສຳພັນລະຫວ່າງໂຮງຮຽນ ແລະ ເຮືອນ ດັ່ງນັ້ນ, ຄູອາຈານ ແລະ ໂຮງຮຽນຈຶ່ງໄດ້ຮັບຄວາມສັດທາ ແລະ ຄວາມກະຕັນຍູຕໍ່ນັກຮຽນ ແລະ ຄອບຄົວຂອງເຂົາເຈົ້າ.ລະບົບການສຶກສາສ່ວນໃຫຍ່ໃນໂຮງຮຽນໃນທົ່ວໂລກມີນັກຮຽນແບ່ງອອກເປັນຫ້ອງເພື່ອອຳນ. ຄວາມສະດວກໃນການຮຽນ-ການສອນ ແລະ ການຄວບຄຸມ ລວມທັງການດຳເນີນກິດຈະກຳອື່ນໆທີ່ເອີ້ນວ່າ "ຫ້ອງຮຽນ" ແລະ ເພື່ອນຮ່ວມຫ້ອງຮຽນດຽວກັນກັບ.

**2. ຄູໃນສັດຕະວັດທີ 21:** ກະຊວງສຶກສາທິການ ແລະ ກິລາ ( 2013),ໃນສະຕະວັດທີ 21 ນີ້ ຂະບວນການຮຽນຮູ້ອາດຈະມີການປ່ຽນແປງຫຼາຍ, ຜູ້ຮຽນຈະໄດ້ຮຽນຮູ້ດ້ວຍເທັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານທີ່ທັນສະໄໝ ແລະ ກ້າວໜ້າ ແລະ ສາມາດເຂົ້າເຖິງຂໍ້ມູນເພີ່ມເຕີມ ແລະ ໄວຂຶ້ນ ບັນຫາທີ່ເກີດຈາກການເພີ່ມຂຶ້ນຂອງຈຳນວນນັກຮຽນຕໍ່ຫ້ອງຮຽນຈົນກ່ວາເຮັດໃຫ້ວິທີການສອນແບບດັ້ງເດີມ ບໍ່ມີປະສິດທິພາບພຽງພໍ ສິ່ງທີ່ສະແດງແມ່ນບໍ່ມີຂະຫນາດໃຫຍ່ພຽງພໍສຳລັບການ ນັກຮຽນຢູ່ຫລັງຫ້ອງ ຈຸດສຸມຂອງຄູອາຈານໄດ້ຫັນໄປຈາກພຶດຕິກຳ ແລະ ສິ່ງແວດ

ລ້ອມໃນຫ້ອງຮຽນຂະໜາດໃຫຍ່, ນັກຮຽນໄດ້ຖືກນຳມາໃຊ້ຄອມພິວເຕີເຄື່ອນທີ່ເພື່ອຄົ້ນຫາຄວາມຮູ້ໃນຫ້ອງຮຽນ, ນັກຮຽນຖາມຄຳຖາມກ່ຽວກັບວິຊາທີ່ຄູສອນ ຫຼືເອົາຂໍ້ມູນເຫຼົ່ານັ້ນມາສົນທະນາ ໂດຍທີ່ອາຈານບໍ່ຕອບ ຫຼືບໍ່ເຄີຍຮູ້.

ສຸທິພົນ ຈິດມິດຕະພາບ (2010),ໃນເວລານີ້ແມ່ນ ຄູອາຈານຕ້ອງມີຄວາມພ້ອມທີ່ຈະປັບປຸງ ແລະ ພັດທະນາຕົນເອງໃຫ້ທັນກັບຍຸກທີ່ປ່ຽນແປງ ແລະ ຕ້ອງບໍ່ຂາດຄວາມກະຕືລືລົ້ນໃນການພັດທະນາທັກສະ ແລະ ເທັກໂນໂລຍີໃຫ້ທັນສະໃໝ ເພື່ອຮຽນຮູ້ເຕັກນິກການສອນແບບໃໝ່ ມີອຳນາດ ສິ່ງຜົນໃຫ້ເດັກມີຄຸນລັກສະນະທີ່ເໝາະສົມຕາມຄວາມຕ້ອງການຂອງສັງຄົມ ແລະ ສັງຄົມໂລກ.

ໃນນີ້ ຂ່າວສຳນັກງານລັດຖະມຸນຕີ (2013),ໄດ້ຮັບຮູ້ຄວາມສຳຄັນຂອງການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ແລະການສື່ສານ (ICT) ໃນການສຶກສາ. ນີ້ຈະເປັນເຄື່ອງມືທີ່ສຳຄັນ ແລະ ເປັນປະໂຫຍດໃນການຍົກສູງຄຸນນະພາບການສຶກສາ. ຊ່ວຍເພີ່ມປະສິດທິພາບການສອນ ແລະ ພັດທະນາຄູໃຫ້ໄວ. ທັງຊ່ວຍແກ້ໄຂບັນຫາການຂາດແຄນຄູ ເຊັ່ນດຽວກັນກັບການຫຼຸດຜ່ອນຄວາມບໍ່ສະເໝີພາບດ້ານການສຶກສາໃນໂຮງຮຽນຫ່າງໄກສອກຫຼີກ. ບົດບາດຂອງຄູ ແລະ ນັກຮຽນ ໃນການຈັດຫ້ອງຮຽນແບບນີ້ຈະເປັນຄວາມຮັບຜິດຊອບຂອງຄູ. ຊີ້ນຳ ແລະ ຊີ້ນຳນັກສຶກສາບົດບາດຄູອາຈານຈະເວົ້າໜ້ອຍ ອະນຸຍາດໃຫ້ນັກຮຽນຄິດ, ຖາມຄຳຖາມ, ແກ້ໄຂບັນຫາ ແລະເຮັດກິດຈະກຳດ້ວຍຕົນເອງ, ນັກຮຽນອາດຈະຮຽນຮູ້ດ້ວຍຕົນເອງຈາກສື່ປະສົມເຊັ່ນ: ບົດຮຽນທີ່ມີໂປຣແກຣມ, ຊຸດການສອນ, ຄອມພິວເຕີຊ່ວຍສອນ, ຄູອາຈານຈະໃຫ້ຄຳແນະນຳແລະການຊ່ວຍເຫຼືອໃນເວລາທີ່ຈຳເປັນ, ສອດຄ່ອງກັບຄວາມຕັ້ງໃຈຂອງຫຼັກສູດທີ່ຮຽກຮ້ອງໃຫ້ຜູ້ຮຽນຄິດແລະຄົ້ນຄ້ວາ ການວິເຄາະທີ່ສຳຄັນ ແລະປະຕິບັດທຸກຂັ້ນຕອນຈົນກ່ວາທ່ານສາມາດຮຽນຮູ້ດ້ວຍຕົນເອງ.

ສະນັ້ນ, ຈຶ່ງສະຫຼຸບໄດ້ວ່າ ຄຸ້ມຄອງຫ້ອງຮຽນໃນຍຸກທີ່ມີການປ່ຽນແປງຂອງການສຶກສາ ມັນເປັນການຈັດຫ້ອງຮຽນເພື່ອຜົນປະໂຫຍດຂອງການຮຽນຮູ້, ການສອນທີ່ມີກິດຈະກຳຫຼາຍປະເພດ ເປັນການກະຕຸ້ນຈິດໃຈທີ່ດີທີ່ສຸດ ສຳລັບຜູ້ຮຽນ ມັນເປັນການກະຕຸ້ນໃຫ້ຕ້ອງການທີ່ຈະຮຽນຮູ້ທີ່ຈະມີຜົນກະທົບຕໍ່ການຮຽນຮູ້ ຄູສອນຖືກນັບເປັນຄົນທີ່ປະກອບສ່ວນ ມີຄວາມສຳຄັນເທົ່າທຽມກັນ ນັ້ນແມ່ນການສ້າງສະພາບແວດລ້ອມການຮຽນຮູ້ທີ່ມີຄວາມສຸກໃນການສຶກສາ, ການຈັດຫ້ອງຮຽນທີ່ມີຕາຕະລາງ, ຕັ່ງ, ຫຼືການຈັດບ່ອນນັ່ງອາດຈະ ອັນນີ້ເຮັດໃຫ້ຄູຄວບຄຸມການສອນມີຄວາມຫຍຸ້ງຍາກຍ້ອນການກວດສອບ, ບໍ່ລະອຽດ ການຈັດວາງ ແລະ ການຕົບແຕ່ງຫ້ອງຮຽນຄວນອີງໃສ່ 2 ຫຼັກການຄື: ອັນທີ 1, ແມ່ນກະຕຸ້ນຄວາມສົນໃຈໃນການຮຽນ, ອັນທີ2, ຄວາມເປັນລະບຽບຮຽບຮ້ອຍ ເພື່ອສ້າງບັນຍາກາດການຮຽນຮູ້ທີ່ມີປະສິດທິພາບຫຼາຍຂຶ້ນ.

## 2.5 ບົດບາດເທັກໂນໂລຊີກັບການພັດທະນາການສຶກສາ

ໃນປັດຈຸບັນຂະບວນການປະຕິວັດດ້ານວິທະຍາສາດ ເທັກໂນໂລຊີ ໂດຍສະເພາະແມ່ນເທັກໂນໂລຊີຂໍ້ມູນຂ່າວສານຈະສືບຕໍ່ຂະຫຍາຍຕົວຢ່າງແຂງແຮງ ແລະ ການຫັນໄປສູ່ເສດຖະກິດສັງຄົມພູມປັນຍາຈະມີທ່າອ່ຽງກວ້າງຂວາງໃນຂອບເຂດທົ່ວໂລກຫຼາຍຂຶ້ນ.

ກະຊວງສຶກສາທິການ ແລະ ກິລາ (2016) ຂະແໜງການສຶກສາເປັນຂະແໜງໜຶ່ງທີ່ໄດ້ນາໃຊ້ເຕັກໂນໂລຊີຂໍ້ມູນ ຂ່າວສານ (ICT) ເຂົ້າໃນວຽກງານການສຶກສາຢ່າງ ຫຼວງຫຼາຍ ຊຶ່ງໄດ້ມີການກຳນົດວິໄສທັດສຳລັບການ ພັດທະນາໄອຊີທີ (ICT) ຢ່າງຊັດເຈນໄວ້ວ່າ: "ຮອດປີ 2030 ໄອຊີທີ່ ຈະເປັນເຄື່ອງມືທີ່ມີຄວາມຍືນຍົງຖືກນາໃຊ້ ຢ່າງມີປະ

ສິດທິຜົນ ແລະ ທົ່ວເຖິງເຂົ້າໃນການສຶກສາທຸກຢ່າງ ເພື່ອສະໜັບສະໜູນ ແລະ ສົ່ງເສີມການສຶກສາໃຫ້ ສາມາດບັນລຸວິໄສທັດ ແລະ ເປົ້າໝາຍຢ່າງມີປະສິດ ທິພາບ ແລະ ປະສິດທິຜົນ"

ກະຊວງສຶກສາທິການ ແລະ ກິລາ (2016:15) ແລະ ກະຊວງແຜນການ ແລະ ການລົງທຶນ (2016: i) ເພື່ອຕອບສະໜອງຕາມວິໄສທັດ. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ເອົາໃຈໃສ່ ພັດທະນາວຽກງານເທັກໂນໂລຊີຢ່າງຕໍ່ເນື່ອງມາຈາກໂຄງການປະຕິຮູບລະບົບການສຶກສາແຫ່ງຊາດ ຊຶ່ງເລີ່ມແຕ່ປີ 2026 ໄດ້ຮຽກຮ້ອງໃຫ້ໜ່ວຍງານຂະແໜງການສຶກສາຕ້ອງໄດ້ພັດທະນາ ວຽກງານເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາຢ່າງເປັນລະບົບຄົບຊຸດ. ດັ່ງນັ້ນ, ໃນທ້າຍປີ 2010 ລັດຖະບານຈຶ່ງຕົກລົງຮັບຮອງ ແລະ ມອບໝາຍ ໃຫ້ກະຊວງສຶກສາທິການ ແລະ ກິລາ ຈັດຕັ້ງປະຕິບັດໂຄງການນໍາໃຊ້ ICT ເຂົ້າໃນການປັບປຸງ ຄຸນນະພາບການສຶກສາ ແລະ ການຂະຫຍາຍໂອກາດ ເຂົ້າຮຽນແນໃສ່ການບັນລຸຈຸດປະສົງ 4 ດ້ານຄື: ພັດທະນາພື້ນຖານວັດຖຸໂຄງລ່າງດ້ານ ICT, ໂດຍສະເພາະ ແມ່ນສ້າງສູນຂໍ້ມູນຂ່າວສານ, ສູນເຝິກອົບຮົມ, ສູນຮຽນ ດ້ວຍຕົນເອງ, ສູນປະຊຸມແບບເອເລັກໂຕຣນິກ, ສູນເຄືອຂ່າຍການສຶກສາ ແລະ ການວິໄຈສໍາລັບຂະແໜງການສຶກສາທັງໝົດ ແລະ ສູນການຮຽນການສອນແບບເອເລັກໂຕຼນິກສໍາລັບມັດທະຍົມຕອນປາຍ.

ກະຊວງສຶກສາ ແລະ ກິລາ (2016) ແລະ ສອດຄ່ອງກັບແຜນຍຸດທະສາດ ຮອດປີ 2025 ຂອງກະຊວງສຶກສາທິການ ແລະ ກິລາ ໃນ ພາລະກິດ 6 ແມ່ນການນໍາໃຊ້ໄອຊີທີ່ເປັນເຄື່ອງມືໃນ ການຄຸ້ມຄອງ ແລະ ບໍລິຫານການສຶກສາ ແລະ ກິລາ, ການຮຽນການສອນ ແລະ ປັບປຸງຄຸນນະພາບການສຶກສາ

ກະຊວງສຶກສາທິການ ແລະ ກິລາ (2015) ນອກຈາກ ນັ້ນ, ກະຊວງສຶກສາທິການ ແລະ ກິລາຍັງໄດ້ວາງແຜນທະນາບັນດາວຽກຈຸດສຸມໃຫ້ແກ່ບັນດາສະຖາບັນສ້າງ ຄູ ແລະ ສະຖາບັນການສຶກສາຊັ້ນສູງໃຫ້ມີການປັບປຸງປ່ຽນແປງການສິດສອນ ແລະ ການຮຽນຮູ້ໃນສະຖາບັນ ສ້າງຄູ ໂດຍເນັ້ນເອົານັກຮຽນເປັນໃຈກາງ ແລະ ນໍາໃຊ້ ICT ເຂົ້າໃນການຮຽນການສອນສ່ວນວຽກຈຸດສຸມຂອງ ສະຖາບັນການສຶກສາຊັ້ນສູງແມ່ນ ນະໂຍບາຍທີ 6 ຄື ການພັດທະນາລະບົບຂໍ້ມູນຂ່າວສານການສຶກສາ ໂດຍ ການນໍາໃຊ້ ICT ເຂົ້າໃນການຮຽນການສອນ ແລະ ພັດທະນາບຸກຄະລາກອນຮັບໃຊ້ວຽກງານ IT.

## 2.6 ສິ່ງທ້າທາຍໃນການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌.

ອີງຕາມການສຶກສາຂອງ Debasish Biswas & Chanchal De (2020) ແລະ Mahima Rohatgi, et al., ( 2021), ໄດ້ສຶກສາພົບວ່າ ສິ່ງທ້າທາຍໃນການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ແມ່ນມີລັກສະນະຄ້າຍຄືກັນ ແລະ ແຕກຕ່າງກັນໃນບາງດ້ານ. ສໍາລັບສິ່ງທ້າທາຍ ຂອງການຮຽນ-ການສອນແບບອອນໄລນ໌ ແມ່ນບັນຫາດ້ານຂີດຈໍາກັດການຕອບສະໜອງສິ່ງຮອງຮັບເຂົ້າໃນການສອນຂອງຮູບແບບດັ່ງກ່າວ, ການທັກສະ ແລະຂະບວນການສື່ສານການສອນແບບອອນໄລນ໌ ແມ່ນມີໜ້ອຍ ກວ່າການສອນແບບເຊິ່ງໜ້າ, ບັນຫາຂີດຈໍາກັດການເຮັດກິດຈະກໍາສົ່ງເສີມການຮຽນຮູ້ຕ່າງໆ, ບັນຫາທາງຂາດແຄນເຄື່ອງມືອີເຕັກໂຕຣນິກ, ບັນຫາດ້ານການເຂົ້າເຖິງອິນເຕເນັດ, ບັນຫາດ້ານຄຸນນະພາບເຄື່ອງມື ແລະ ງົບປະມານການນໍາໃຊ້ເຂົ້າໃນການຮຽນ-ການສອນອອນໄລນ໌ ແລະບັນຫາການເອົາໃຈໃສ່, ຂາດຄວາມອົດທົນ ແລະ ຄວາມຮັບຜິດຊອບຂອງຜູ້ຮຽນຖືເປັນບັນຫາສໍາຄັນທີ່ແກ້ຍາກ ແລະການຄວບຄຸມກໍ່ຫຍຸ້ງຍາກພໍສົມຄວນ.

Debasish Biswas & Chanchal De ( 2020) ຍັງສຶກສາພົບອີກວ່າ ສຳລັບສິ່ງທ້າທາຍ ການຮຽນ-ການສອນແບບເຊິ່ງໜ້າ ແມ່ນດ້ານເສດຖະກິດຄອບຄົວ, ດ້ານຄຸນນະພາບພື້ນຖານໂຄງລ່າງການຕອບສະໜອງໃນການຮຽນ-ການສອນ ແລະ ຄຸນນະພາບສິດສອນທີ່ຍັງມີຂີດຈຳກັດຫຼາຍດ້ານ ລວມທັງບັນຫາການນຳໃຊ້ເຕັກໂນໂລຊີເພື່ອການສຶກສາຂອງຄູ ແລະ ນັກຮຽນ.

## 2.7 ແນວຄິດ ແລະ ທິດສະດີກ່ຽວກັບຄວາມເພິ່ງພໍໃຈ

ຄວາມເພິ່ງພໍໃຈ (Satisfaction) ແມ່ນທັດສະນະຄະຕິທີ່ບໍ່ມີຕົວຕົນ ບໍ່ສາມາດເບິ່ງເຫັນ ເປັນຮູບຊົງໄດ້ ເພື່ອໃຫ້ພວກເຮົາຮູ້ວ່າບຸກຄົນໃດໜຶ່ງມີຄວາມເພິ່ງພໍໃຈຫຼືບໍ່ ສາມາດສັງເກດໄດ້ໂດຍ ການສະແດງອອກຂ້ອນຂ້າງສັບສົນ ເພາະສະນັ້ນມັນຍາກທີ່ຈະວັດຄວາມເພິ່ງພໍໃຈໂດຍກົງ ແຕ່ສາມາດວັດ ທາງອ້ອມໄດ້ ຈາກການວັດຄວາມຄິດເຫັນຂອງບຸກຄົນເຫຼົ່ານັ້ນ ເຊິ່ງການສະແດງຄວາມຄິດເຫັນຕ້ອງກົງ ກັບຄວາມຮູ້ສຶກທີ່ແທ້ຈິງ ເພາະສະນັ້ນຈຶ່ງສາມາດວັດຄວາມເພິ່ງພໍໃຈນັ້ນໄດ້ ຈາກການສຶກສາພົບວ່າ ມີຜູ້ ໃຫ້ຄວາມໝາຍຂອງຄວາມເພິ່ງພໍໃຈໄວ້ຫຼາຍທັດສະນະດັ່ງຕໍ່ໄປນີ້:

ຊະຫວິຫວັນ ປຣະນາມະສາ (2004: 69) ໄດ້ໃຫ້ຄວາມໝາຍຄວາມເພິ່ງພໍໃຈ ໝາຍເຖິງ ທັດສະນະຄະຕິ ຫຼື ລະດັບຄວາມເພິ່ງພໍໃຈຂອງຄົນທີ່ມີຕໍ່ກິດຈະກຳຕ່າງໆ ເຊິ່ງສະທ້ອນເຖິງປະສິດທິພາບ ຂອງກິດຈະກຳນັ້ນໂດຍເກີດພື້ນຖານຂອງການຮັບຮູ້ ຄ່ານິຍົມ ແລະ ປະສົບການທີ່ແຕ່ລະຄົນໄດ້ຮັບ ລະ ດັບຄວາມເພິ່ງພໍໃຈເກີດຂຶ້ນເມື່ອກິດຈະກຳນັ້ນສາມາດຕອບສະໜອງຄວາມຕ້ອງການແກ່ບຸກຄົນນັ້ນໄດ້.

ອັກຄະລະສາດ ສາດສູງເນີນ (2007: 45) ກ່າວວ່າ ຄວາມເພິ່ງພໍໃຈແມ່ນຄວາມຮູ້ສຶກໃນ ແງ່ບວກຂອງຄົນ ຄວາມມັກ ຄວາມສະບາຍໃຈ ແລະ ຄວາມສຸກໃຈໃນດ້ານຕ່າງໆຂອງສະພາບແວດລ້ອມ ຫຼື ແມ່ນຄວາມຮູ້ສຶກທີ່ເພິ່ງພໍໃຈຕໍ່ສິ່ງຕ່າງໆທີ່ກໍ່ໃຫ້ເກີດຄວາມມັກ ຄວາມສະບາຍໃຈ ແລະ ຄວາມຮູ້ສຶກທີ່ ຄົນເຮົາບັນລຸເຖິງຄວາມຕ້ອງການ.

ຈາລຸຊາ ເມຄະສຸວັນ (2012: 60) ໄດ້ໃຫ້ຄວາມໝາຍຂອງຄວາມເພິ່ງພໍໃຈວ່າ ຄວາມເພິ່ງ ພໍໃຈ ໝາຍເຖິງ ຄວາມຮູ້ສຶກນຶກຄິດ ຫຼື ທັດສະນະຄະຕິຂອງບຸກຄົນທີ່ມີຕໍ່ການເຮັດວຽກ ຫຼື ການ ປະຕິບັດກິດຈະກຳໃນທາງບວກ ແລະ ສະແດງພຶດຕິກຳຕອບສະໜອງທັງທາງຮ່າງກາຍ ແລະ ຈິດໃຈ ສະນັ້ນ ຄວາມເພິ່ງພໍໃຈໃນການຮຽນຮູ້ ໝາຍເຖິງຄວາມຮູ້ສຶກພໍໃຈ ແລະ ພໍໃຈກັບການດຳເນີນກິດຈະກຳ ການຮຽນ-ການສອນ ແລະ ດຳເນີນກິດຈະກຳນັ້ນຈົນປະສົບຜົນສຳເລັດ.

ຈາກຄວາມໝາຍຂອງນັກການສຶກສາຫຼາຍທ່ານກ່າວມານັ້ນສາມາດສະຫຼຸບໄດ້ວ່າ ຄວາມເພິ່ງພໍໃຈ ໝາຍເຖິງຄວາມຮູ້ສຶກນຶກຄິດ ຄວາມມັກ ຄວາມພໍໃຈຂອງບຸກຄົນຕໍ່ສິ່ງຕ່າງໆໄປໃນທາງບວກ ແລະ ເປັນຄວາມຮູ້ສຶກທີ່ມີຄວາມສຸກເມື່ອປະສົບຜົນສຳເລັດ ຫຼື ໄດ້ຕາມສິ່ງທີ່ຕ້ອງການໃນການເຮັດວຽກ ຫຼື ປະຕິບັດກິດຈະກຳໃດໜຶ່ງ.

## 2.8 ປະຫວັດວິທະຍາໄລຄູສາລະວັນໂດຍສັງເຂບ.

ວິທະຍາໄລຄູສາລະວັນ (2021: 10) ຕັ້ງຢູ່ບ້ານນາໂດນ ເມືອງ ແລະ ແຂວງ ສາລະວັນ, ມີສາຍຕັ້ງຂຶ້ນກັບກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ສາຍຂວາງຂຶ້ນກັບແຂວງສາລະວັນ. ວິທະຍາໄລຄູສາລະວັນມີພາລະບົດບາດ ແລະ ໜ້າທີ່ໃນການກໍ່ສ້າງ ແລະ ບຳລຸງຄູ ໃນລະດັບຊັ້ນສູງ ແລະ ປະລິນຍາຕີ ໃນສາຍຄູອະນຸບານ, ສາຍຄູປະຖົມ ແລະ ສາຍຄູມັດທະຍົມ ທັງພາກປົກກະຕິ ແລະ ຕໍ່ເນື່ອງ, ເຊິ່ງປະກອບມີ 5 ພະແນກ, 4 ພາກວິຊາ, ມີໂຮງຮຽນສາທິດທີ່ຂຶ້ນກັບວິທະຍາໄລຄູຄື: ມັດທະຍົມຕົ້ນສາທິດ, ປະຖົມສາທິດ ແລະ ອະນຸບານສາທິດ. ມີພະນັກງານລວມທັງໝົດ 137 ຄົນ, ຍິງ 68 ຄົນ, ປະລິນຍາເອກ 03 ຄົນ, ຍິງ 01 ຄົນ, ປະລິນຍາໂທ 35 ຄົນ ຍິງ 11 ຄົນ, ປະລິນຍາຕີ 63 ຄົນ, ຍິງ

33 ຄົນ, ຊັ້ນສູງ 33 ຄົນ, ຍິງ 23 ຄົນ, ຊັ້ນກາງ 03 ຄົນ, ຍິງ 0 ຄົນ. ສະມາຊິກພັກພະນັກງານ 77 ສະຫາຍ, ຍິງ 30 ສະຫາຍ, ນອກຈາກນີ້ຍັງມີພະນັກງານໄປສຶກສາຕໍ່ທັງພາຍໃນ ແລະ ຕ່າງປະເທດ ຈຳນວນ 12 ຄົນ, ຍິງ 07 ຄົນ ສຶກສາລະດັບປະລິນຍາເອກ 1 ຄົນ, ຍິງ 0 ຄົນ, ປະລິນຍາໂທ 09 ຄົນ, ຍິງ 07 ຄົນ, ປະລິນຍາຕີ 01 ຄົນ, ຍິງ 0 ຄົນ; ຍົກລະດັບທິດສະດີການເມືອງລະດັບຊັ້ນກາງ 1 ຄົນ, ຍິງ 0 ຄົນ.

ແຜນພັດທະນາ 5 ປີ ຂອງວິທະຍາໄລຄູສາລະວັນ, (2020-2024: 11) ວິທະຍາໄລຄູສາລະວັນ ເພື່ອເຮັດໃຫ້ການສຶກສາທັນກັບຍຸກສັດຕະຫວັດທີ່ 21 ໄດ້ຈັດຕັ້ງການຮຽນ-ການສອນທີ່ເນັ້ນມາດຖານການຮຽນຮູ້ນຳ ໃຊ້ ICT ເຂົ້າມາຊ່ວຍການການຈັດການຮຽນຮູ້ໃຫ້ຫຼາຍຂຶ້ນ, ຍຸກນີ້ເປັນຍຸກແຫ່ງຂໍ້ມູນຂ່າວສານຄື: ຂໍ້ມູນຄວາມຮູ້ບໍ່ໄດ້ຢູ່ໃນຕຳລາທີ່ຮັກສາໄວ້ໃນຫ້ອງສະໝຸດພຽງຢ່າງດຽວ ແຕ່ ຍັງມີຢູ່ໃນເຄືອຂ່າຍອອນໄລນ໌. ສະນັ້ນ, ຈຶ່ງໄດ້ກ່າວໄວ້ໃນແຜນພັດທະນາວິທະຍາໄລຄູສາລະວັນໃນໄລຍະ 5 ປີເປັນຕົ້ນ ແມ່ນສະພາບແວດລ້ອມການຮຽນຮູ້ຂອງສັງຄົງໃນໄລຍະໃໝ່ ທີ່ມີການປັບຕົວ ແລະ ປ່ຽນແປງຕະຫອດເວລາ.

## 2.9 ທົບທວນບົດຄົ້ນຄ້ວາວິທະຍາສາດທີ່ກ່ຽວຂ້ອງ.

ໃນການສຶກສາຄົ້ນຄວ້າທີ່ກ່ຽວຂ້ອງຜ່ານມາເຫັນວ່າ ຜົນການຄົ້ນຄວ້າແມ່ນມີຜົນລັບທີ່ແຕກຕ່າງກັນ ແລະ ຄືກັນເປັນຈຳນວນຫຼາຍ ແລະ ການສຶກສາດັ່ງກ່າວນີ້ ມີຄວາມໜ້າສົນໃຈຫຼາຍພໍສົມຄວນ ຈາກນັກວິຊາການ, ນັກຄົ້ນຄວ້າ ຕະຫຼອດຮອດຜູ້ບໍລິຫານການສຶກສາທີ່ກ່ຽວຈາກປະເທດຕ່າງໆໃນໂລກ. ສຳລັບການສຶກສາຄັ້ງນີ້ ຜູ້ຄົ້ນຄວ້າໄດ້ສຶກສາ, ທົບທວນບົດຄົ້ນຄວ້າຜ່ານມາ ແລະ ສັງລວມເອົາຜົນການຄົ້ນຄວ້າຕ່າງໆ ຈາກຫຼາຍປະເທດດັ່ງລຸ່ມນີ້:

| ຊື່ນັກຄົ້ນຄວ້າ ແລະ ປີຕີພິມ | ວິທີວິທະຍາ ການຄົ້ນຄວ້າ | ຜົນການຄົ້ນຄວ້າ |
|---|---|---|
| **ການສຶກສາທີ່ມີຜົນໄດ້ຮັບບໍ່ແຕກຕ່າງກັນ** | | |
| Padmalini Singh, et al. (2021) ແລະ Ramya,N., et al. (2021) | ການສຶກສາດັ່ງກ່າວແມ່ນເພື່ອສົມທຽບປະສິດທິຜົນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ ແລະ ແບບເຊິ່ງໜ້າ ໃນສະຖາບັນການສຶກສາຊັ້ນສູງທີ່ປະເທດຕີມໍ. ເຊິ່ງການສຶກສາດັ່ງກ່າວໄດ້ສຳຫຼວດຄວາມຄິດເຫັນຈາກກຸ່ມຕົວຢ່າງນັກສຶກສາທີ່ມາສຶກສາໃນປະເທດຕີມໍ ລະບົບຊັ້ນສູງ ,ປະລິນຍາຕີ ແລະ ລິນາຍາໂທ ທີ່ມາຈາກປະເທດອິນເດຍ, ອິນໂດເນເຊຍ, ມາເລຍເຊຍ ແລະ ປະເທດອື່ນໆ ຈຳນວນ 1.000 ຄົນ. ເຄື່ອງມືທີ່ໃຊ້ແມ່ນແບບສອບຖາມ ແລະ ສະຖິຕິແມ່ນ ຄ່າຄວາມຖີ່, ຄ່າສະເລ່ຍ, ຄ່າບ່ຽງເບນມາດຕະຖານ ແລະ ຄ່າສົມທຽບຄວາມແຕກຕ່າງT-test. | ຜົນການຄົ້ນຄວ້າຄັ້ງນີ້ພົບວ່າ: ການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ແມ່ນມີປະສິດທິຜົນເທົ່າກັນ. |

| | | |
|---|---|---|
| Ali Alghazo, ( 2020) | ການສຶກສາ ເພື່ອສົມທຽບປະສິດທິຜົນ ການຈັດຕັ້ງການຮຽນ-ການສອນແບບ ອອນໄລນ໌ ແລະ ແບບເຊິ່ງໜ້າ ໃນສະຖາບັນການສຶກສາຊັ້ນສູງທີ່ມະຫາວິທະຍາໄລອິລິນອຍ. ເຊິ່ງການສຶກສາດັ່ງກ່າວໄດ້ສໍາຫຼວດຄວາມຄິດເຫັນຈາກກຸ່ມຕົວຢ່າງ ນັກສຶກສາ ຈຳນວນ 380 ຄົນ. ເຄື່ອງມືທີ່ໃຊ້ແມ່ນແບບສອບຖາມ ແລະ ສະຖິຕິແມ່ນ ຄ່າຄວາມຖີ່, ຄ່າສະເລ່ຍ, ຄ່າບ່ຽງເບນມາດຕະຖານ ແລະ ຄ່າສົມທຽບຄວາມແຕກຕ່າງT-test. | ຜົນການຄົ້ນຄວ້າຄັ້ງນີ້ພົບວ່າ ການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ແມ່ນມີປະສິດທິຜົນເທົ່າກັນ. |
| Serkan Kaymak (2021) | ການສຶກສາດັ່ງກ່າວແມ່ນເພື່ອສົມທຽບປະສິດທິຜົນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ ແລະ ແບບເຊິ່ງໜ້າ ໃນສະຖາບັນການສຶກສາຊັ້ນສູງທີ່ ມະຫາວິທະຍາໄລ ສຸລິມອນ ດີເມີເຣວ, ເຊິ່ງການສຶກສາແບບທົດລອງດສອງກຸ່ມ ຄື: ກຸ່ມທົດລອງແມ່ນສອນແບບເຊິ່ງໜ້າ ແລະ ກຸ່ມທີ2 ແມ່ນສອນແແບ ອອນໄລນ໌ ຈຳນວນ 62 ຄົນ. ເຄື່ອງມືທີ່ໃຊ້ແມ່ນແບບສອບຖາມ ແລະ ສະຖິຕິແມ່ນ ຄ່າຄວາມຖີ່, ຄ່າສະເລ່ຍ, ຄ່າບ່ຽງເບນມາດຕະຖານ ແລະ ຄ່າສົມທຽບຄວາມແຕກຕ່າງT-test. | ຜົນການຄົ້ນຄວ້າຄັ້ງນີ້ພົບວ່າ ການຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ແມ່ນມີປະສິດທິຜົນເທົ່າກັນ ເພາະວ່າຜົນການຮຽນຂອງນັກສຶກສາບໍ່ມີໄລຍະຄໍາຄັນແຕກຕ່າງກັນທາງສະຖິຕິ. |
| **ການສຶກສາທີ່ມີຜົນການຄົ້ນຄວ້າທີ່ແຕກຕ່າງກັນ** | | |
| Fiqhi L.D., & Nurul R., (2020) | ການສຶກສາເພື່ອສົມທຽບປະສິດທິຜົນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ ແລະ ແບບເຊິ່ງໜ້າ ໃນສະຖາບັນການສຶກສາຊັ້ນສູງ ທີ່ ມະຫາວິທະ ຍາໄລ ໄອບູ ຄາດຸນ ບໍເກີ. ຈໍານວນນັກສຶກ 1.266 ຄົນ ໃນປະເທດກາລັງພັດທະນາ, ເຊິ່ງການສຶກສາດັ່ງກ່າວໃຊ້ເຄື່ອງມືທີ່ໃຊ້ແມ່ນແບບສອບຖາມ ແລະ ສະຖິຕິແມ່ນທີ່ໃຊ້ຄ່າຄວາມຖີ່, ຄ່າສະເລ່ຍ, ຄ່າບ່ຽງ | ການສຶກສາພົບວ່າ ນັກສຶກສາ ມັກການຮຽນແບບເຊິ່ງໜ້າຫຼາຍກວ່າ ຮູບແບບອອນໄລນ໌. |

| | | |
|---|---|---|
| | ເບນມາດຕະຖານ ແລະ ຄ່າສົມທຽບຄວາມແຕກຕ່າງT-test. | |
| Mohammad Amin, et. al., ( 2021) | ເປັນການສຶກສາ ເພື່ອສົມທຽບປະສິດທິຜົນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ ແລະ ແບບເຊິ່ງໜ້າ ໃນສະຖາບັນການສຶກສາຊັ້ນສູງ ທີ່ ມະຫາວິທະ ຍາໄລ ແຫ່ງຊາດ, ແຊດີເອີໂກ, ລັດແຄລິບຟໍເນຍ, ສະລັດອາເມລິກາ. ເປັນການສຶກສາທົດລອງ ກິດຈະກຳການສອນແບບອອນໄລນ໌ ແລະ ການສອນແບບເຊິ່ງໜ້າກັບກຸ່ມຕົວຢ່າງນັກສຶກສາວິສາວະກຳເຕັກໂນໂລຊີ ເປັນໄລຍະເວລາແຕ່ປີ 2017-2021. ເຊິ່ງການສຶກສາດັ່ງກ່າວໃຊ້ເຄື່ອງມືທີ່ໃຊ້ແມ່ນແບບສອບຖາມ ແລະ ສະຖິຕິທີ່ໃຊ້ແມ່ນຄ່າຄວາມຖີ່, ຄ່າສະເລ່ຍ, ຄ່າບ່ຽງເບນມາດຕະຖານ ແລະ ຄ່າສົມທຽບຄວາມແຕກຕ່າງT-test. | ຜົນການສຶກສາໃນໄລຍະສາມສົກຮຽນສາມາດສະຫຼູບຜົນານສຶກສາ ໄດ້ວ່າການຮຽນ-ການສອນຮູບແບບອອນໄລນ໌ ແມ່ນເໝາະສົມ ແລະ ມີປະສິດທິຜົນດີກວ່າ ການຮຽນແບບເຊິ່ງໜ້າ. |
| Debasish Biswas & Chanchal De, (2020) | ສຶກສາກ່ຽວການປະສິດທິຜົນຈັດການຮຽນ-ກາສອນແບບໄລນ໌ ໃນໄລຍະການແຜ່ລະບາດພະຍາດໂຄວິດ19 ທີ່ມະຫາວິທະຍາໄລ ຊິມບາວີ. ເຄື່ອງມືການຄົ້ນຄວ້າແມ່ນແບບສອບຖາມ ກັບກຸ່ມຕົວຢ່າງນັກສຶກ 202 ຄົນ. ສະຖິຕິທີ່ໃຊ້ແມ່ນຄ່າຄວາມຖີ່, ຄ່າສະເລ່ຍ, ຄ່າບ່ຽງເບນມາດຕະຖານ. | ຜົນການສຶກສາພົບວ່າ ການຮຽນບໍ່ມີປະສິດທິຜົນເທົ່າທີ່ຄວນ. ເນື່ອງຈາກວ່າ ຍຸດທະວິທີການສິດສອນ ແລະ ກິດຈະກຳການສອນຍັງບໍ່ສາມາດ ສ້າງການພົວພັນທີ່ເປັນການຮຽນຮູ້ທີ່ດີລະຫວ່າງຄູສອນ ກັບນັກສຶກສາ. ຄູສອນບໍ່ສາມາດໃຫ້ການປັບປຸງນັກສຶກສາໃນດ້ານຕ່າງໆ ເຊັ່ນ: ການສຶກສາອົບຮົມ, ການທົດສອບ ແລະ ປະເມີນຜົນບໍ່ທັນຈະແຈ້ງ. ກຸ່ມຕົວຢ່າງຍັງແນະນຳວ່າ ທາງສະຖາບັນຄວນຕອບສະໜອງອຸປະກອນທີ່ຈຳເປັນ, ຝຶກອົບຮົມທັກສະ ແລະ ຄວາມສາມາດດ້ານເຕັກໂນໂລຊີທີ່ຈຳເປັນແກ່ນັກສຶກສາ ແລະ ຄູສອນຢ່າງທົ່ວເຖິງ. |
| Lalima &Kiran Lata Dangwal, (Lalima &Kiran Lata Dangwal,, | ໄດ້ສຶກສາກ່ຽວກັບ ການຈັດການຮຽນ-ການສອນແບບປະສົມປະສານ (Blened | ຜົນການສຶການສຶກສາ ພົບວ່າ ການສອນແບບປະສົມປະສານ ແມ່ນມີ |

| | | |
|---|---|---|
| 2017), Wuhui Chen, (2020) ແລະ Marhabo Avazmatova, (2021). | Learing and teaching) ເຊິ່ງລວມເອົາຮູບແບບເຊິ່ງໜ້າ ແລະ ຮູບແບບໄລນ໌ ທີ່ປະເທດອິນເດຍ, ສປ.ຈີນ ແລະ ປາກິສຖານ. | ຄວາສຳຄັນ ແລະ ມີປະສິດທິຜົນຕໍ່ຜົນສຳເລັດທາງການຮຽນຂອງນັກສຶກສາ. ນອກນີ້, ການສຶກສາຍັງມີຂໍ້ແນະນຳໃຫ້ສະຖາບັນການສຶກສາດັດປັບໃຫ້ສອດຄ່ອງເຂົ້າກັບສະພາບການຮຽນ-ການສອນ ຂອງແຕ່ລະທ້ອງຖິ່ນທີ່ແຕກຕ່າງກັນ. |

ຈາກຜົນການສຶກສາ ທີ່ທົບທວນມາຂ້າງເທິງເຫັນວ່າ ມີຜົນລັບທີ່ແຕກຕ່າງກັນ ໃນການສຶກສາສົມທຽບປະສິດທິຜົນ ຂອງຮູບແບບການຈັດການຮຽນ-ການສອນ ຮູບແບບເຊິ່ງໜ້າ ແລະ ຮູບແບບອອນໄລນ໌ ໃນບັນດາປະເທດຕ່າງໆ ແຕ່ສຳລັບ ສປປ.ລາວ ໂດຍສະເພາະ ທີ່ວິທະຍາໄລ ຄູສາລະວັນ ແມ່ນໄດ້ຈັດຕັ້ງການຮຽນ-ການສອນແບບເຊິ່ງໜ້າ ສືບທອດກັນມາຫຼາຍໆປີ, ແຕ່ສຳລັບຮູບແບບການສອນອອນໄລນ໌ ຖືເປັນເລື່ອງໃໝ່ສຳລັບນັກຮຽນ ແລະ ຄູສອນທີ່ຍັງມີບັນຫາທີ່ທ້າທາຍ ສະນັ້ນ, ບົນພື້ນນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຊຸກຍູ້ສົ່ງເສີມໃຫ້ສະຖານສຶກສາ ພະຍາຍາມຈັດຕັ້ງການຮຽນ-ການສອນໃຫ້ມີການນຳໃຊ້ເຕັກໂນໂລຊີ ແລະ ພັດທະນາຮູບແບບການສອນທີ່ຫຼາກຫຼາຍ ເພື່ອເພີ່ມປະສິທິພາບ ແລະ ປະສິດທິຜົນໃຫ້ແກ່ການຮຽນ-ການສອນດີຂຶ້ນເລື້ອຍໆ. ສະນັ້ນ, ຜູ້ຄົ້ນຄວ້າຈຶ່ງເຫັນວ່າ ມີຄວາມຈຳເປັນ ແລະ ສຳຄັນຫຼາຍໃນການສຶກສາຫາຮູບແບບການສອນທີ່ມີສອດຄ່ອງ ແລະ ເໝາະສົມກັບສະພາບຕົວຈິງ ຂອງ ສປປ.ລາວ.

## 2.10 ຂອບເຂດແນວຄິດ.

ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ຄື : ນັກສຶກສາ ປີ 2, 3, 4 ແລະ ຄູສອນໃນສາຍທັງໝົດໃນສົກຮຽນ 2021-2022 ທີ່ ວິທະຍາໄລຄູສາລະວັນ ທີ່ໄດ້ຜ່ານການຈັດຕັ້ງການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌.

**ແຜນວາດທີ1:** ຂອບຄວາມຄິດການຄົ້ນຄວ້າ.



## 2.11 ນິຍາມຄຳສັບສະເພາະ.

ການຄົ້ນຄວ້າຄັ້ງນີ້ ນັກຄົ້ນຄວ້າໄດ້ກຳນົດຄຳສັບເພື່ອຄວາມເຂົ້າໃຈໃນ ການສຶກສາການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ໃນວິທະຍາໄລຄູສາລະວັນ ດັ່ງຕໍ່ໄປນີ້:

- **ການຈັດການຮຽນ-ການສອນແບບເຊິ່ງໜ້າ**: ໝາຍເຖິງການຈັດການຮຽນ-ການສອນແບບປົກກະຕິຢູ່ຫ້ອງຮຽນ( ແບບດັ້ງເດີມ) ໂດຍມີສະຖານທີ່ ແລະ ເວລາອັນແນ່ນອນ, ມີຄູ ແລະ ນັກສຶກສາດຳເນີນກິດຈະກຳການຮຽນ-ການສອນຮ່ວມກັນ, ປຶກສາຫາລື ແລະ ເຮັດວຽກເປັນກຸ່ມ, ຄູສາມາດໃຫ້ຄຳປຶກສາ, ຄຳຕອບທັນທີ.
- **ການຈັດການຮຽນ-ການສອນ ແບບອອນໄລນ໌**: ໝາຍເຖິງ ຜູ້ສອນ ແລະ ຜູ້ຮຽນ ຢູ່ຫ່າງໄກກັນ, ຢູ່ສະຖານທີ່ຕ່າງກັນ, ແຕ່ສາມາດດຳເນີນກິດຈະກຳການຮຽນ-ການສອນຮ່ວມກັນໄດ້ໂດຍອີງໃສ່ວັດສະດຸການສອນທີ່ສະໜອງໃຫ້ເຊັ່ນ: ເອກະສານ, ຕຳລາ, ໂນດບຸກ, ຄອມພິວເຕີ້, ເຄື່ອງບັນທຶກພາບ, ສຽງ, ແມັດເຊັນເຈີ, google meet ແລະ ເຄືອຄ່າຍອິນເຕີເນັດ ເປັນຕົ້ນ. ນັກຮຽນສາມາດເລືອກຮຽນຕາມວັດສະດຸການສອນທີ່ເໝາະສົມກັບນັກຮຽນ, ຕາມຕາຕະລາງການຮຽນ-ການສອນຫຼື ຕາມເວລາທີ່ ເໝາະສົມອື່ນໆ.
- **ຮູບແບບການສອນທີ່ມີປະສິດທິຜົນ:** ໝາຍເຖິງປະສິດທິຜົນການສິດສອນຮູບແບບເຊິ່ງໜ້າ ຫຼື ຮູບແບບອອນໄລນ໌ ທີ່ສົ່ງຜົນສຳເລັດໃຫ້ແກ່ນັກສຶກສາໃນດ້ານຕ່າງໆ ເປັນຕົ້ນ ສາມາດພັດທະນາດ້ານວິຊາການ, ພັດທະນາທັກສະການນຳໃຊ້ເຕັກໂນໂລຊີ, ພັດທະນາທັກສະການຮຽນຮູ້ດ້ວຍຕົນເອງ, ພັດທະນາທັກສະທາງສັຄົມ ແລະ ພັດທະນະທັກສະການເຮັດວຽກເປັນກຸ່ມ ແລະ ອື່ນໆ.
- **ຄວາມເພິ່ງພໍໃຈ**: ໝາຍເຖິງ ຄວາມຮູ້ສຶກທີ່ດີ ຫຼືທັດສະນະຄະຕິທີ່ດີຂອງບຸກຄົນ ຊຶ່ງມັກເກີດຈາກການໄດ້ຮັບການຕອບສະໜອງທີ່ຕົນຕ້ອງການ ກໍຈະເກີດຄວາມຮູ້ສຶກທີ່ດີໄດ້ ກົງກັນຂ້າມຫາກຄວາມຕ້ອງການບໍ່ໄດ້ຮັບການຕອບສະໜອງ ຄວາມບໍ່ເພິ່ງພໍໃຈກໍຈະເກີດຂຶ້ນ ຄວາມພຶງພໍໃຈທີ່ມີຕໍ່ການໃຊ້ບໍລິການຈະເກີດຂຶ້ນຫລືບໍ່ນັ້ນຈະຕ້ອງພິຈາລະນາເຖິງລັກສະນະຂອງການໃຊ້ບໍລິການຂອງອີງປະກອບກັບລະດັບຄວາມຮູ້ສຶກຂອງຜູ້ມາຮັບບໍລິການໃນມິຕິຕ່າງໆ ຂອງແຕ່ລະບຸກຄົນ.

# ບົດທີ 3
# ວິທີການຄົ້ນຄ້ວາ

ສໍາລັບບົດນີ້, ຈະໄດ້ອະທິບາຍກ່ຽວກັບວິທີການຄົ້ນຄ້ວາ ຢ່າງລະອຽດໃນແຕ່ລະດ້ານ ຜູ້ຄົ້ນຄ້ວາໄດ້ມີຂັ້ນຕອນການສຶກສາດ້ານຕ່າງໆຄື: ການອອກແບບການສຶກສາ, ການຄັດເລືອກພື້ນທີ່, ໄລຍະເວລາການຄົ້ນຄ້ວາ, ປະຊາກອນ ແລະ ກຸ່ມຕົວຢ່າງ, ການພັດທະນາເຄື່ອງມືທີ່ໃຊ້ເກັບກໍາຂໍ້ມູນ, ວິທີເກັບກໍາຂໍ້ມູນ, ການວິເຄາະຂໍ້ມູນ ແລະ ການແປຜົນ.

## 3.1 ການອອກແບບການສຶກສາ, ການຄັດເລືອກພື້ນທີ່, ໄລຍະເວລາການຄົ້ນຄ້ວາ.

### 3.1.1 ການຄັດເລືອກພື້ນທີ່.

ການຄົ້ນຄ້ວາ ແລະ ດໍາເນີນການຄົ້ນຄວ້າໃນຄັ້ງນີ້ແມ່ນຈະໄດ້ດໍາເນີນການສຶກສາຢູ່ທີ່ ວິທະຍາໄລຄູສາລະວັນ.

### 3.1.2 ໄລຍະເວລາການຄົ້ນຄ້ວາ.

ຜູ້ວິໄຈໄດ້ດໍາເນີນການຄົ້ນຄ້ວາ ຈະໃຊ້ເວລາ 1 ພາກຮຽນ ເລີ່ມແຕ່ເດືອນທີ 9/2022 ຫາ ເດືອນທີ 4/2022 ແລະ ກຽມຄວາມພ້ອມໃນການປ້ອງກັນ ວິທະຍານິພົນສົມບູນໃນເດືອນທີ່ 5/2023 ຕາມແຜນຂອງຄະນະສຶກສາສາດກໍານົດໄວ້.

## 3.2 ປະຊາກອນ ແລະ ກຸ່ມຕົວຢ່າງ.

### 3.2.1 ປະຊາກອນ

ປະຊາກອນທັງໝົດຈໍານວນ 610 ຄົນ, ໃນນັ້ນມີນັກສຶກສາຄູ ປີ 2,3,4 ຈໍານວນ 540 ຄົນ ແລະ ຄູສອນຈໍານວນ 70 ຄົນ. ໃນວິທະຍາໄລຄູສາລະວັນ ສົກຮຽນ 2021-2022.

### 3.2.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທັງໝົດຈໍານວນ 300 ຄົນ ໃນນັ້ນມີຄູສອນ ຈໍານວນ 70 ຄົນທີ່ມີໜ້າສອນຕົວຈິງ(ເລືອກແບບເຈາະຈົງ), ນັກສຶກສາ ຈໍານວນ 230 ຄົນ ການຄັດເລືອກກຸ່ມຕົວຢ່າງນັກສຶກສາແມ່ນນໍາໃຊ້ສູດ Taro Yamane ດັ່ງລຸ່ມນີ້:

$$n = \frac{N}{1 + Ne^2}$$

$$n = \frac{540}{1 + 540 * 0,05^2} = \frac{540}{2,35} 229,7872 = 230$$

**N** ແມ່ນປະຊາກອນທີ່ເປັນນັກສຶກສາ.

**n** ແມ່ນກຸ່ມຕົວຢ່າງທີ່ເປັນນັກສຶກສາ.

**e** ຄ່າຄວາມຄາດເຄື່ອນ (0,05).

ການແບ່ງກຸ່ມຕົວຢ່າງສໍາລັບນັກສຶກສາແມ່ນແບບແບ່ງຊັດສ່ວນ (Quota random sampling technique), ລາຍລະອຽດຕິດັດດ້ານຫຼັງ.

## 3.3 ວິທີເກັບກໍາຂໍ້ມູນ ແລະ ເຄື່ອງມືທີ່ໃຊ້ເກັບກໍາຂໍ້ມູນ.

**3.3.1 ການພັດທະນາເຄື່ອງມື ແລະ ວິທີເກັບກຳຂໍ້ມູນ:**

1. ສຶກສາຂໍ້ມູນແນວຄິດທິດສະດີທີ່ກ່ຽວຂ້ອງ.

2. ກຳນົດຂອບເຂດ ແລະ ໄລຍະເວລາໃນການສຶກສາ.

3. ດຳເນີນການລວບລວມຂໍ້ມູນ ແລະ ພັດທະນາເຄື່ອງມື.

4. ນຳເອົາເຄື່ອງມືປຶກສານຳທີ່ປຶກສາ, ຜ່ານຜູ້ຊ່ຽວຊານ ເພື່ອກວດແກ້ຂໍ້ມູນ ແລະ ເນື້ອໃນເພື່ອໃຫ້ເໝາະສົມ ແລະ ສອດຄ່ອງກັບຄວາມເປັນຈິງ.

5. ຊອກຫາຄ່າຄວາມເຊື່ອໝັ້ນຂອງເຄື່ອງມື (α-Coefficient Reliability)ຕາມວິທີຂອງ Cronbach Alpha.

6. ປັບປຸງເຄື່ອງມື.

7. ກຳນົດກຸ່ມຕົວຢ່າງ ແລະ ຂໍໜັງສືຈາກ ຄສສ ເພື່ອລົງເກັບກຳຂໍ້ມູນ.

8. ຈັດພິມ ແລະ ລົງເກັບຂໍ້ມູນຕາມໄລຍະເວລາທີ່ກຳນົດໄວ້.

9. ສັງລວມຂໍ້ມູນ ແລະ ວິເຄາະຜົນ.

10. ແປຜົນການຂໍ້ມູນ.

**1.3.2 ຮູບແບບເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ:**

ເຄື່ອງມືການຄົ້ນຄວ້າຄັ້ງນີ້ ແມ່ນ ແບບສອບຖາມ ສຳລັບຄູສອນ ແລະ ແບບສອບຖາມສຳລັບນັກສຶກສາ ເຊິ່ງທັງສອງຮູບແບບແມ່ນຈະຖືກອອກແບບຕາມຂອບຄວາມຄິດ, ຈຸດປະສົງການຄົ້ນຄວ້າ ໂດຍປະກອບດ້ວຍພາກສ່ວນຕ່າງໆທີ່ສຳຄັນດັ່ງນີ້:

ສ່ວນທີ1: ເປັນຂໍ້ມູນສ່ວນຕົວຂອງກຸ່ມຕົວຢ່າງ ຄູ ແລະ ນັກສຶກສາ.

ສ່ວນທີ2: ຄາຖາມເລືອກຕອບ ກ່ຽວກັບສະພາບການຈັດການຮຽນການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌.

ສ່ວນທີ3: ເປັນຄາຖາມແບບວັດລະດັບຄວາມເພິ່ງພໍໃຈ 5 ລະດັບ ຕາມແບບຂອງ Likert Scales ກ່ຽວກັບການຮຽນ-ການສອນຮູບແບບເຊິ່ງໜ້າ.

- ເກນແປຜົນລະດັບຄວາມເພິ່ງພໍໃຈໃນສ່ວນ ທີ 3 ມີດັ່ງນີ້:

ຄ່າສະເລ່ຍ 4.51 - 500 ພໍໃຈຫຼາຍທີ່ສຸດ

ຄ່າສະເລ່ຍ 3.51 - 4.50 ພໍໃຈຫຼາຍ

ຄ່າສະເລ່ຍ 2.51 - 3.50 ພໍໃຈປານກາງ

ຄ່າສະເລ່ຍ 1.51 - 2.50 ພໍໃຈນ້ອຍ

ຄ່າສະເລ່ຍ 1.00 - 1.50 ພໍໃຈນ້ອຍທີ່ສຸດ

## 3.4 ສະຖິຕິການວິເຄາະຂໍ້ມູນ

ພາຍຫຼັງທີ່ເກັບ ແລະ ລວບລວມຂໍ້ມູນແລ້ວ ຜູ້ຄົ້ນຄວ້າຈະໄດ້ເອົາຂໍ້ມູນປ້ອນຂໍ້ມູນໃສ່ Micro sotf Excel ແລະ ຈະໄດ້ໃຊ້ໂປຣແກຣມ ວິເຄາະຜູ້ມູນສຳເລັດຮູບ SPSS ຫາຄ່າສະຖິຕິລຸ່ມນີ້:

- ເປີເຊັນ (percentage) ແລະ ຄວາມຖີ່ (fregency) ແມ່ນໃຊ້ວິເຄາະຄຳຖາມ ໃນສ່ວນທີ 1, 2.

- **ຄ່າສະເລ່ຍ** (Mean) ແລະ (Standard Deviation)ຄິດໄລ່ຄໍາຖາມໃນ ສ່ວນທີ 3.

## 3.5 ສະຖິຕິໃນການຫາຄຸນນະພາບຂອງເຄື່ອງມື

- ພອນນິ ລີກິດລັດຕະນະ, (2013, ໜ້າ. 110) ການຫາຄວາມທ່ຽງຕົງ(Validity)ຂອງແບບທົດສອບວັດຜົນສໍາເລັດທາງການຮຽນໂດຍຫາຄ່າດັດສະນີຄວາມສອດຄ່ອງລະຫວ່າງຈຸດປະສົງການຮຽນກັບເນື້ອໃນ (Index of Item Objective Congruence: IOC) ມີສູດດັ່ງນີ້:

$$IOC=\frac{\sum R}{N}$$

IOC ແທນ ດັດສະນີຄວາມສອດຄ່ອງລະຫວ່າງຄໍາຖາມກັບຈຸດປະສົງ

$\sum R$ ແທນ ຜົນຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານທັງໝົດ

N ແທນຈໍານວນຜູ້ຊ່ຽວຊານທັງໝົດ

- ສະຖິຕິທີ່ໃຊ້ຫາຄວາມເຊື່ອໝັ້ນຂອງແບບສອບຖາມຄວາມເພິງພໍໃຈຕໍ່ກັບການຈັດກິດຈະກໍາການຮຽນຮູ້ແບບຮ່ວມມືເທັກນິກ CIRC (α-Coefficient)ຂອງ Cronbach ບຸນຊຶມ ສີສະອາດ ພ້ອມຄະນະ (2015) ອ້າງອີງໃນ SORKEOMANY, B., (2016) ດັ່ງສູດລຸ່ມນີ້:

$$\alpha=\frac{n}{n-1}\left[1-\frac{\sum S_i^2}{S_t^2}\right]$$

$$\alpha=0.82$$

α ແທນ ຄວາມເຊື່ອໝັ້ນຂອງແບບສອບຖາມ

n ແທນ ຈໍານວນຂໍ້ຂອງແບບສອບຖາມ

$\sum S_i^2$ ແທນຜົນລວມຂອງຄ່າຄະແນນຜັນປ່ຽນຂອງຄະແນນແຕ່ລະຂໍ້

$S_t^2$ ແທນຄ່າຄວາມຜັນປ່ຽນຂອງຄະແນນລວມ

# ບົດທີ 4

## ຜົນການວິເຄາະ ແລະ ແປຜົນ

ໃນບົດນີ້ແມ່ນໄດ້ນຳສະເໜີຜົນການວິເຄາະທີ່ໄດ້ຈາກການສະແດງຄວາມຄິດເຫັນຂອງຄູ-ອາຈານ ແລະ ນັກສຶກສາທີ່ວິທະຍາໄລ ຄູສາລະວັນ ຕໍ່ແບບສອບຖາມໃນການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ເຊິ່ງຜົນການວິເຄາະທີ່ນຳໃຊ້ສະຖິຕິຊອກຄ່າຄວາມຖີ່ (Frequency), ຄ່າສະເລ່ຍ (Mean), ຄ່າຄວາມດຸ່ນດ່ຽງ (SD), t-test ແລະ one way anova ເພື່ອນຳມາແປ ແລະ ອະທິບາຍຜົນໄດ້ຮັບຢ່າງຮອບຄອບ ແລະ ຫາຂໍ້ສະຫຼຸບຢ່າງຊັດເຈນດັ່ງລາຍລະອຽດລຸ່ມນີ້:

## 4.1. ຂໍ້ມູນທົ່ວໄປຂອງຄູ ແລະ ນັກສຶກສາ.

### 4.1.1 ດ້ານເພດຂອງກຸ່ມຕົວຢ່າງ.

**ຕາຕະລາງ 1:** ຂໍ້ມູນດ້ານເພດ ຂອງຄູ ແລະ ນັກສຶກສາ.

| ລ/ດ | ເພດ | ຄວາມຖີ່ fregency | ເປີເຊັນ (%) percentage |
|---|---|---|---|
| **ເພດຂອງຄູສອນ** | | | |
| 1 | ຊາຍ | 41 | 58.6 |
| 2 | ຍິງ | 29 | 41.4 |
| **ລວມ** | | **70** | **100** |
| **ເພດຂອງນັກສຶກສາ** | | | |
| 1 | ຊາຍ | 109 | 47.4 |
| 2 | ຍິງ | 121 | 52.6 |
| **ລວມ** | | **230** | **100** |

ຕາຕະລາງທີ1, ໄດ້ສະແດງຜົນການວິເຄາະຂໍ້ມູນສ່ວນທົ່ວໄປດ້ານເພດຂອງກຸ່ມຕົວຢ່າງ ທັງຄູສອນ ແລະ ນັກສຶກສາທີ່ສະແດງຄວາມຄິດເຫັນຕອບແບບສອບຖາມ, ຜົນການວິເຄາະພົບວ່າ: ເພດຊາຍທີ່ເປັນກຸ່ມຕົວຢ່າງຄູສອນກວມຊັດສ່ວນເຖິງ 58,6% ແຕ່ເພດຍິງກວມເອົາ 41.4%. ແລະ ສຳລັບຊັດສ່ວນດ້ານເພດຂອງນັກສຶກສາ ແມ່ນພົບວ່າ ເພດຍິງກວມເອົາ 52.6% ເຊິ່ງກວມເອົາຊັດສ່ວນສູງກວ່າເພດຊາຍພຽງ **5.2**%.

ຈາກຜົນການວິເຄາະຂ້າງເທິງສາມາດສະຫຼຸບໄດ້ວ່າ ກຸ່ມຕົວຢ່າງທີ່ຕອບແບບສອບຖາມໃນການຄົ້ນຄວ້າຄັ້ງນີ້ ສຳລັບດ້ານເພດຂອງຄູສອນແມ່ນມີຈຳນວນແຕກຕ່າງກັນ, ໝາຍຄວາມວ່າເພດຊາຍຂອງຄູສອນຫຼາຍກວ່າເພດຍິງກວມເອົາເຖິງ 17.2% ແຕ່ສຳລັບດ້ານເພດຂອງນັກສຶກສາແມ່ນມີຈຳນວນຊັດສ່ວນໃກ້ຄຽງກັນຫຼາຍຢ່າງຊັດເຈນ ຖ້າທຽບໃສ່ດ້ານເພດຂອງຄູສອນ.




**4.1.2 ດ້ານອາຍຸຂອງຄູສອນ ແລະ ນັກສຶກສາ.**

**ຕາຕະລາງ 2:** ຂໍ້ມູນດ້ານອາຍຸ ຂອງຄູສອນ ແລະ ນັກສຶກສາ.

| ລ/ດ | ອາຍຸ | ຄວາມຖີ່ fregency | ເປີເຊັນ (%) percentage |
|---|---|---|---|
| **ດ້ານອາຍຸຂອງຄູສອນ** | | | |
| 1 | 25-29 ປີ | 0 | 0 |
| 2 | 30-34 ປີ | 1 | 1.4 |
| 3 | 35-39 ປີ | 53 | 75.7 |
| 4 | ຫຼາຍກວ່າ 40 ປີຂຶ້ນ | 16 | 29.9 |
| **ລວມ** | | **70** | **100** |
| **ດ້ານອາຍຸຂອງນັກສຶກສາ** | | | |
| 1 | 17-19 ປີ | 102 | 44.3 |
| 2 | 20-25 ປີ | 123 | 53.5 |
| 3 | 26-29 ປີ | 5 | 5 |
| 4 | 30 ປີຂຶ້ນໄປ | 0 | 0 |
| **ລວມ** | | **230** | **100** |

ຈາກຂໍ້ມູນໃນຕາຕະລາງ2: ແມ່ນສະແດງຜົນການວິເຄາະຂໍ້ມູນດ້ານອາຍຸ ຂອງຄູສອນ ແລະ ນັກສຶກສາ, ຜົນການວິເຄາະພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນສ່ວນໃຫຍ່ແມ່ນ 75.7% ອາຍຸລະຫວ່າງ 35-39 ປີ ແລະ ຮອງລົງມາແມ່ນ 29.9% ຂອງຄູສອນ ແມ່ນອາຍຸຫຼາຍກວ່າ 40 ປີຂຶ້ນໄປ ແຕ່ວ່າມີພຽງ 1.4% ແມ່ນອາຍຸລະຫວ່າງ 30-35 ປີ. ສໍາລັບຜົນການວິເຄາະດ້ານເພດຂອງນັກສຶກສາພົບວ່າ: 53.5% ຂອງນັກສຶກສາແມ່ນກວມເອົາຊັດສ່ວນສູງກວ່າໝູ່ ໃນກຸ່ມອາຍຸລະຫວ່າງ 20-25 ປີ, ຮອງລົງມາ ແມ່ນກຸ່ມອາຍຸລະຫວ່າງ 17-19 ປີ ເຊິ່ງກວມເອົາຊັດສ່ວນ 44.3% ເຖິງຢ່າງໃດກໍ່ຕາມມີພຽງ 5% ຂອງນັກສຶກສາແມ່ນກຸ່ມອາຍຸລະຫວ່າງ 26-29 ປີ.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູ-ອາຈານທີ່ສະແດງຄວາມຄິດເຫັນຕໍ່ແບບສອບຖາມສ່ວນໃຫຍ່ແມ່ນກຸ່ມອາຍຸສູງ ຢູ່ໃນລະດັບ 35 ປີຂຶ້ນໄປ ແລະ ນັກສຶກສາສ່ວນໃຫຍ່ແມ່ນອາຍຸ 20-25 ປີ ແຕ່ຕໍ່າສຸດບໍ່ຫຼຸດ 17 ປີ. ສະນັ້ນ, ຈິ່ງສະແດງໃຫ້ເຫັນວ່າ ຄູສອນ ແລະ ນັກສຶກສາທີ່ມີວຸດທິພາວະສູງ ແລະ ອາດມີປະສົບການທາງດ້ານການຮຽນ-ການສອນ ແລະ ການປະຕິບັດວຽກງານຕົວຈິງຜ່ານມາຫຼາຍພໍສົມຄວນ.

4.1.3 **ດ້ານ**ການສຶກສາ ຂອງຄູສອນ.

**ຕາຕະລາງ 3:** ຂໍ້ມູນທົ່ວໄປຂອງຄູທີ່ຕອບແບບສອບຖາມອີງຕາມ(ການສຶກສາ)

| **ລ/ດ** | **ການສຶກສາ** | **ຄວາມຖີ່** fregency | **ເປີເຊັນ (%)** percentage |
|---|---|---|---|
| 1 | ຊັ້ນສູງ | 2 | 2.9 |
| 2 | ປະລິນຍາຕີ | 29 | 41.4 |
| 3 | ປະລິນຍາໂທ | 36 | 51.4 |
| 4 | ປະລິນຍາເອກ | 3 | 4.3 |
| | ລວມ | 70 | 100 |

**ຈາກຂໍ້ມູນໃນຕາຕະລາງ 3:** ແມ່ນສະແດງຜົນການວິເຄາະຂໍ້ມູນດ້ານ ການສຶກສາຂອງຄູສອນ ຜົນການວິເຄາະພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ສ່ວນໃຫຍ່ແມ່ນ 51.4 % ລະດັບປະລິນຍາໂທ, ຮອງລົງມາແມ່ນ 41.4 % ລະດັບປະລິນຍາຕີ, ໃນນັ້ນ 4.3 % ແມ່ນລະດັບ ປະລິນຍາເອກ ແລະ 2.9 % ແມ່ນລະດັບຊັ້ນສູງ.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູ-ອາຈານທີ່ສະແດງຄວາມຄິດເຫັນຕໍ່ແບບສອບຖາມສ່ວນໃຫຍ່ແມ່ນກຸ່ມການສຶກສາ ລະດັບປະລິນຍາໂທ ແລະ ລະດັບປະລິນຍາຕີ.

4.1.4 **ດ້ານຂັ້ນຮຽນ ຂອງນັກສຶກສາ**

**ຕາຕະລາງ 4:** ຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມອີງຕາມ(**ຂັ້ນຮຽນ**)

| **ລ/ດ** | **ຂັ້ນຮຽນ** | **ຄວາມຖີ່** fregency | **ເປີເຊັນ (%)** percentage |
|---|---|---|---|
| 1 | ປີ2 | 53 | 23.0 |
| 2 | ປີ3 | 101 | 43.9 |
| 3 | ປີ4 | 76 | 33.0 |
| ລວມ | | 230 | 100 |

**ຈາກຂໍ້ມູນໃນຕາຕະລາງ4 :** ແມ່ນສະແດງຜົນການວິເຄາະຂໍ້ມູນ**ດ້ານຂັ້ນຮຽນ ຂອງນັກສຶກສາ**ຜົນການວິເຄາະພົບວ່າ: ກຸ່ມຕົວຢ່າງທີ່ເປັນນັກສຶກສາ ສ່ວນໃຫຍ່ແມ່ນ ຈໍານວນ 101 ຄົນ, ຄິດເປັນເປີເຊັນເທົ່າກັບ 43.9 %, ຮອງລົງມາແມ່ນ ປີ4 ຈໍານວນ 76 ຄົນ, ຄິດເປັນເປີເຊັນເທົ່າກັບ 33.0 %, ໜ້ອຍທີ່ສຸດແມ່ນ ປີ2 ຈໍານວນ 53 ຄົນ, ຄິດເປັນເປີເຊັນເທົ່າກັບ 23.0 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ນັກສຶກສາທີ່ສະແດງຄວາມຄິດເຫັນຕໍ່ແບບສອບຖາມສ່ວນໃຫຍ່ແມ່ນກຸ່ມຂັ້ນຮຽນປີ3.

4.1.5 ດ້ານປະສົບການຂອງຄູສອນ.

**ຕາຕະລາງ5:** ຂໍ້ມູນທົ່ວໄປຂອງຄູທີ່ຕອບແບບສອບຖາມອີງຕາມ(ປະສົບການ)

| ລ/ດ | ປະສົບການ | ຄວາມຖີ່<br>fregency | ເປີເຊັນ (%)<br>percentage |
|---|---|---|---|
| 1 | ຕໍ່າກ່ວາ 5 ປີ | 1 | 1.4 |
| 2 | 5-10 ປີ | 8 | 11.4 |
| 3 | 10 ປີຂຶ້ນໄປ | 61 | 87.1 |
| | ລວມ | 70 | 100 |

**ຈາກຂໍ້ມູນໃນຕາຕະລາງ5:** ແມ່ນສະແດງຜົນການວິເຄາະຂໍ້ມູນດ້ານປະສົບການ ຂອງຄູສອນ ຜົນການວິເຄາະພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນສ່ວນໃຫຍ່ແມ່ນ ຫຼາຍກ່ວາໝູ້ແມ່ນ 10 ປີຂຶ້ນໄປ ຈຳນວນ 61 ຄົນ, ຄິດເປັນເປີເຊັນເທົ່າກັບ 87.1 %, ຮອງລົງມາແມ່ນ 5-10 ປີ ຈຳນວນ 8 ຄົນ, ຄິດເປັນເປີເຊັນເທົ່າກັບ 11.4 % ແລະ ຕໍ່າກ່ວາ 5 ປີ ຈຳນວນ 1 ຄົນ, ຄິດເປັນເປີເຊັນເທົ່າກັບ 1.4 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູ-ອາຈານທີ່ສະແດງຄວາມຄິດເຫັນຕໍ່ແບບສອບຖາມດ້ານປະສົບການແມ່ນມີຈຳນວນແຕກຕ່າງກັນ ສ່ວນໃຫຍ່ແມ່ນ ມີປະສົບການສອນລະດັບ10 ປີຂຶ້ນໄປ ກວມເອົາເປີເຊັນເຖິງ 87.1 % ຂອງຄູສອນທີ່ຕອບແບບສອບຖາມທັງໝົດ.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




**4.2 ຜົນການວິເຄາະຂໍ້ມູນຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ ສະພາບການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບບອອນໄລນ໌**

4.2.1 ດ້ານສະພາບການຮຽນ-ການສອນແບບເຊິ່ງໜ້າຂອງຄູສອນ ແລະ ນັກສຶກສາ.

ຕາຕະລາງທີ 6: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານການປະຕິບັດຫຼັກສູດການຮຽນ-ການສອນສ່ວນໃຫຍ່ແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາ.

| ການປະຕິບັດຫຼັກສູດການຮຽນ-ການສອນສ່ວນໃຫຍ່ແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາ. | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| ຄວາມຄິດຄູສອນ | | | |
| ເນັ້ນຫຼາຍ | 70 | 100 | |
| ເນັ້ນປານກາງ | 0 | 0 | |
| ເນັ້ນໜ້ອຍ | 0 | 0 | |
| ບໍ່ເນັ້ນເລີຍ | 0 | 0 | |
| ຄວາມຄິດນັກສຶກສາ | | | |
| ເນັ້ນຫຼາຍ | 190 | 82.6 | 1 |
| ເນັ້ນປານກາງ | 33 | 14.3 | 2 |
| ເນັ້ນໜ້ອຍ | 7 | 3.0 | 3 |
| ບໍ່ເນັ້ນເລີຍ | 0 | 0 | 4 |

**ຈາກຂໍ້ມູນໃນຕາຕະລາງ**6: ແມ່ນສະແດງຜົນການວິເຄາະຂໍ້ມູນການປະຕິບັດຫຼັກສູດການຮຽນ-ການສອນສ່ວນໃຫຍ່ແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາ ຂອງຄູສອນ ແລະ ນັກສຶກສາ, ຜົນການວິເຄາະພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນທັງໝົດ 70 ຄົນ ລ້ວນແຕ່ເນັ້ນ 5 ຫຼັກມູນການສຶກສາ ທີ່ກະຊວງສຶກສາທິການວາງອອກ, ຄິດເປັນເປີເຊັນ 100%. ສຳລັບຜົນວິເຄາະຂໍ້ມູນການປະຕິບັດຫຼັກສູດການຮຽນ-ການສອນສ່ວນໃຫຍ່ແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາ ຂອງນັກສຶກສາ ພົບວ່າ: ລະດັບ ເນັ້ນຫຼາຍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 190 ຄົນ, ຄິດເປັນເປີເຊັນເທົ່າ 82.6 %, ທັດລົງມາແມ່ນລະດັບ ເນັ້ນປານກາງ ຈຳນວນ 33 ຄົນ, ຄິດເປັນເປີເຊັນເທົ່າ 14.3 %, ສ່ວນເນັ້ນໜ້ອຍ ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 3.0 % ແລະ ການປະຕິບັດຫຼັກສູດການຮຽນ-ການສອນສ່ວນໃຫຍ່ແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາ,ໃນລະດັບ ບໍ່ເນັ້ນເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານທັງໝົດ ທີ່ສະແດງຄວາມຄິດເຫັນຕໍ່ດ້ານການປະຕິບັດຫຼັກສູດການຮຽນ-ການສອນສ່ວນໃຫຍ່ແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາ ເປັນສ່ວນຫຼາຍ.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:



ຕາຕະລາງທີ 7: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານຄວາມຄິດເຫັນຕໍ່ກັບຊົ່ວໂມງຮຽນໃນການຈັດຕັ້ງການຮຽນ-ການສອນ.

| ຄວາມຄິດເຫັນຕໍ່ກັບຊົ່ວໂມງຮຽນໃນການຈັດຕັ້ງການຮຽນ-ການສອນ | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| ຄວາມຄິດເຫັນຄູສອນ | | | |
| ຫຼາຍສຸດ | 12 | 17.1 | 3 |
| ຫຼາຍ | 23 | 32.9 | 2 |
| ປານກາງ | 32 | 45.7 | 1 |
| ໜ້ອຍ | 3 | 4.3 | 4 |
| ໜ້ອຍສຸດ | 0 | 0 | 5 |
| ຄວາມຄິດເຫັນນັກສຶກສາ | | | |
| ຫຼາຍສຸດ | 25 | 10.9 | 3 |
| ຫຼາຍ | 74 | 32.2 | 2 |
| ປານກາງ | 120 | 52.2 | 1 |
| ໜ້ອຍ | 8 | 3.5 | 4 |
| ໜ້ອຍສຸດ | 3 | 1.3 | 5 |

ຈາກຕາຕະລາງທີ 7: ແມ່ນສະແດງຜົນການວິເຄາະຂໍ້ມູນຄວາມຄິດເຫັນຕໍ່ກັບຊົ່ວໂມງຮຽນໃນການຈັດຕັ້ງການຮຽນ-ການສອນ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ໃນລະດັບປານກາງ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 32 ຄົນ, ຄິດເປັນເປີເຊັນເທົ່າ 45 %, ທັດລົງມາແມ່ນຜູ້ທີ່ມີຊົ່ວໂມງໃນລະດັບ ຫຼາຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 32.9 %, ສ່ວນຄູທີ່ມີ ຊົ່ວໂມງສອນ ໃນລະດັບຫຼາຍທີ່ສຸດ ຈຳນວນ 12 ຄົນ, ຄິດເປັນເປີເຊັນເທົ່າ 17.1 % ແລະ ຄູທີ່ມີ ຊົ່ວໂມງສອນ ໃນລະດັບ ໜ້ອຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 4.3 % ແລະ ກຸ່ມຕົວຢ່າງທີ່ເປັນນັກສຶກສາ ໃນລະດັບປານກາງ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 120 ຄົນ, ຄິດເປັນເປີເຊັນເທົ່າ 52.2 %, ທັດລົງມາແມ່ນຜູ້ທີ່ມີຊົ່ວໂມງໃນລະດັບ ຫຼາຍ ຈຳນວນ 74 ຄົນ, ຄິດເປັນເປີເຊັນເທົ່າ 32.2 %, ສ່ວນຄູທີ່ມີ ຊົ່ວໂມງສອນ ໃນລະດັບຫຼາຍທີ່ສຸດ ຈຳນວນ 25 ຄົນ, ຄິດເປັນເປີເຊັນເທົ່າ 10.9 %, ຄູທີ່ມີ ຊົ່ວໂມງສອນ ໃນລະດັບ ໜ້ອຍ ຈຳນວນ 8 ຄົນ, ຄິດເປັນເປີເຊັນເທົ່າ 3.5 %. ແລະ ລະດັບ ໜ້ອຍສຸດ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 1.3 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານຄວາມຄິດເຫັນຕໍ່ກັບຊົ່ວໂມງຮຽນໃນການຈັດຕັ້ງການຮຽນ-ການສອນທັງຄູສອນ ແລະ ນັກສຶກສາສ່ວນຫຼາຍແມ່ນແຕກຕ່າງກັນໃນລະດັບຫຼາຍສົມຄວນ ໃນນັ້ນຢູ່ໃນລະດັບປານກາງ ແມ່ນຫຼາຍສົມຄວນ, ເຊິ່ງສະແດງໃຫ້ເຫັນເຖິງການແບ່ງປັນຊົ່ວໂມງສອນຂອງຄູສອນໃນແຕ່ລະລາຍວິຊາ ແລະ ອັດຕາຄວາມດຸ່ນດ່ຽງຂອງຄູສອນນັ້ນ, ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ8: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານທາງໂຮງຮຽນໄດ້ຈັດຊົ່ວໂມງສອນບຳລຸງພິເສດ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກສຶກສາ.

| **ທາງໂຮງຮຽນໄດ້ຈັດຊົ່ວໂມງສອນບຳລຸງພິເສດ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກສຶກສາ.** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ໄດ້ປະຕິບັດເລື້ອຍໆ | 12 | 17.1 | 3 |
| ປະຕິບັດບາງຄັ້ງຄາວ | 21 | 30.0 | 2 |
| ໄດ້ປະຕິເລັກໜ້ອຍ | 7 | 10.0 | 4 |
| ບໍ່ໄດ້ປະຕິບັດເລີຍ | 30 | 42.9 | 1 |
| **ຄວາມຄິດຂອງນັກສຶກສາ** | | | |
| ໄດ້ປະຕິບັດເລື້ອຍໆ | 46 | 20.0 | 3 |
| ປະຕິບັດບາງຄັ້ງຄາວ | 62 | 27.0 | 2 |
| ໄດ້ປະຕິເລັກໜ້ອຍ | 93 | 40.4 | 1 |
| ບໍ່ໄດ້ປະຕິບັດເລີຍ | 29 | 12.6 | 4 |

ຈາກຕາຕະລາງທີ 8: ແມ່ນສະແດງຜົນການວິເຄາະຂໍ້ມູນທາງໂຮງຮຽນໄດ້ຈັດຊົ່ວໂມງສອນບຳລຸງພິເສດ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກສຶກສາ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ໃຫ້ຄວາມຄິດເຫັນ ໃນລະດັບບໍ່ໄດ້ປະຕິບັດເລີຍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 30 ຄົນ, ຄິດເປັນເປີເຊັນເທົ່າ 42.9 %,

ທັດລົງມາແມ່ນ ຄູສອນ ປະຕິບັດບາງຄັ້ງຄາວ ມີຈຳນວນ 21 ຄົນ, ຄິດເປັນເປີເຊັນເທົ່າ 30.0 %, ໃນນັ້ນ ໄດ້ປະຕິບັດເລື້ອຍໆ ຈຳນວນ 12 ຄົນ, ຄິດເປັນເປີເຊັນເທົ່າ 17,1 %, ໄດ້ປະຕິບັດເລັກໜ້ອຍ ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 % ແລະ ກຸ່ມຕົວຢ່າງທີ່ເປັນນັກສຶກສາໃຫ້ຄວາມຄິດເຫັນລະດັບ ໄດ້ປະຕິບັດເລັກໜ້ອຍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 93 ຄົນ, ຄິດເປັນເປີເຊັນເທົ່າ 40.4 %, ທັດລົງມາແມ່ນ ຄູສອນ ປະຕິບັດບາງຄັ້ງຄາວ ມີຈຳນວນ 62 ຄົນ, ຄິດເປັນເປີເຊັນເທົ່າ 27.0 %, ໃນນັ້ນ ໄດ້ປະຕິບັດເລື້ອຍໆ ຈຳນວນ 46 ຄົນ, ຄິດເປັນເປີເຊັນເທົ່າ 20.0 %, ບໍ່ໄດ້ປະຕິບັດເລີຍ ຈຳນວນ 29 ຄົນ, ຄິດເປັນເປີເຊັນເທົ່າ 12.6 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານຄວາມຄິດເຫັນຕໍ່ກັບທາງໂຮງຮຽນໄດ້ຈັດຊົ່ວໂມງສອນບຳລຸງພິເສດ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກສຶກສາ ແນວຄວາມຄິດຂອງຄູສອນ ແລະ ນັກສຶກສາແມ່ນແຕກຕ່າງກັນ. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 9: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານການຮຽນ-ການສອນເນັ້ນປະຕິບັດຕົວຈິງ.

| **ການຮຽນ-ການສອນເນັ້ນປະຕິບັດຕົວຈິງ.** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ແນວຄວາມຄິດຂອງຄູສອນ** | | | |
| ເນັ້ນຫຼາຍ | 38 | 54.3 | 1 |
| ເນັ້ນປານກາງ | 26 | 37.1 | 2 |
| ເນັ້ນໜ້ອຍ | 3 | 4.3 | 3 |
| ບໍ່ມີເລີຍ | 3 | 4.3 | 3 |
| **ແນວຄວາມຄິດຂອງ** | | | |
| ເນັ້ນຫຼາຍ | 87 | 37.8 | 2 |

| | | | |
|---|---|---|---|
| ເນັ້ນປານກາງ | 94 | 40.9 | 1 |
| ເນັ້ນໜ້ອຍ | 43 | 18.7 | 3 |
| ບໍ່ມີເລີຍ | 6 | 2.6 | 4 |

ຈາກຕາຕະລາງທີ 9: ແມ່ນສະແດງຜົນການວິເຄາະຂໍ້ມູນການຮຽນ-ການສອນເນັ້ນປະຕິບັດຕົວຈິງ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ໃຫ້ຄວາມຄິດເຫັນຫຼາຍກວ່າໝູ່ແມ່ນ ເນັ້ນປະຕິບັດຕົວຈິງ ໃນລະດັບເນັ້ນຫຼາຍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 38 ຄົນ, ຄິດເປັນເປີເຊັນເທົ່າ 53.3 %, ທັດລົງມາແມ່ນຜູ້ທີ່ເນັ້ນລະດັບ ປານກາງ ຈຳນວນ 26 ຄົນ, ຄິດເປັນເປີເຊັນເທົ່າ 37.1 %, ສ່ວນຄູທີ່ເນັ້ນໃນລະດັບໜ້ອຍ ຈານວນ 3 ຄົນ, ຄິດເປັນເປີເຊັນເທົ່າ 4.3 % ແລະ ຄູທີ່ຢູ່ໃນລະດັບ ບໍ່ເນັ້ນເລີຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 4.3 % ແລະ ແນວຄວາມຄິດຂອງນັກສຶກສາເນັ້ນປະຕິບັດຕົວຈິງ ໃນລະດັບ ເນັ້ນປານກາງ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 94 ຄົນ, ຄິດເປັນເປີເຊັນເທົ່າ 40.9 %, ທັດລົງມາແມ່ນຜູ້ທີ່ເນັ້ນລະດັບ ເນັ້ນຫຼາຍ ຈານວນ 87 ຄົນ, ຄິດເປັນເປີເຊັນເທົ່າ 37.8 %, ສ່ວນຄູທີ່ເນັ້ນໃນລະດັບໜ້ອຍ ຈຳນວນ 43 ຄົນ, ຄິດເປັນເປີເຊັນເທົ່າ 18.7 % ແລະ ຄູທີ່ຢູ່ໃນລະດັບ ບໍ່ເນັ້ນເລີຍ ຈຳນວນ 6 ຄົນ, ຄິດເປັນເປີເຊັນເທົ່າ 2.6 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານຄວາມຄິດເຫັນຕໍ່ກັບການຮຽນ-ການສອນເນັ້ນປະຕິບັດຕົວຈິງ ແນວຄວາມຄິດຂອງຄູສອນ ແລະ ນັກສຶກສາແມ່ນບໍ່ແຕກຕ່າງກັນປານໃດເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລື່ນກັນເລັກໜ້ອຍຕາມລຳດັບ ສຳລັບແນວຄວາມຄິດຂອງຄູເນັ້ນຫຼາຍກວ່າແມ່ນລະດັບໃນລະດັບເນັ້ນຫຼາຍ, ສ່ວນນັກສຶກສາແມ່ນ ເນັ້ນຫຼາຍກວ່າໝູ່ແມ່ນ ໃນລະດັບ ເນັ້ນປານກາງ ເຊິ່ງທັງສອງລະດັບນີ້ແມ່ນມີຄວາມລຸດລື່ນກັນ 13.4 %. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:



ຕາຕະລາງທີ 10: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານການຮຽນ-ການສອນໄດ້ມີການເຄື່ອນໄຫວກິດຈະກຳນອກຫຼັກສູດ.

| ການຮຽນ-ການສອນໄດ້ມີການເຄື່ອນໄຫວກິດຈະກຳນອກຫຼັກສູດ. | ຄວາມຖີ່ fregency | ເປີເຊັນ (%) percentage | ອັນດັບ |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ມີຫຼາຍ | 16 | 22.9 | 2 |
| ມີປານກາງ | 42 | 60.0 | 1 |
| ມີໜ້ອຍ | 9 | 12.9 | 3 |
| ບໍ່ມີເລີຍ | 3 | 4.3 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ມີຫຼາຍ | 87 | 37.8 | 2 |
| ມີປານກາງ | 94 | 40.9 | 1 |
| ມີໜ້ອຍ | 43 | 18.7 | 3 |
| ບໍ່ມີເລີຍ | 6 | 2.6 | 4 |

ຈາກຕາຕະລາງທີ 10: ແມ່ນສະແດງຜົນການວິເຄາະຂໍ້ມູນການຮຽນ-ການສອນໄດ້ມີການເຄື່ອນໄຫວກິດຈະກຳນອກຫຼັກສູດ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ໃຫ້ຄວາມຄິດເຫັນຫຼາຍກວ່າໝູ່ແມ່ນລະດັບປານກາງ ຈຳນວນ 42 ຄົນ, ຄິດເປັນເປີເຊັນເທົ່າ 60.0 %, ທັດລົງມາແມ່ນ ໃນລະດັບ ມີຫຼາຍ ຈຳນວນ 16 ຄົນ, ຄິດເປັນເປີເຊັນເທົ່າ 22.9 %, ສ່ວນ ມີໜ້ອຍ ຈານວນ 9 ຄົນ, ຄິດເປັນເປີເຊັນເທົ່າ 12.9 % ແລະ ໃນລະດັບ ບໍ່ມີເລີຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 4.3 % ແລະ ນັກສຶກສາໃຫ້ຄວາມຄິດເຫັນຫຼາຍກ່ວາໝູ່ ແມ່ນຢູ່ໃນລະດັບ ມີປານກາງ ຈຳນວນ 94 ຄົນ, ຄິດເປັນເປີເຊັນເທົ່າ 40.9 %, ທັດລົງມາແມ່ນ ໃນລະດັບ ມີຫຼາຍ ຈຳນວນ 87 ຄົນ, ຄິດເປັນເປີເຊັນເທົ່າ 37.8 %, ສ່ວນ ມີໜ້ອຍ ຈຳນວນ 43 ຄົນ, ຄິດເປັນເປີເຊັນເທົ່າ 18.7 % ແລະ ໃນລະດັບ ບໍ່ມີເລີຍ ຈຳນວນ 6 ຄົນ, ຄິດເປັນເປີເຊັນເທົ່າ 2.6 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານມີຄວາມຄິດເຫັນຕໍ່ກັບການຮຽນ-ການສອນໄດ້ມີການເຄື່ອນໄຫວກິດຈະກຳນອກຫຼັກສູດ ແນວຄວາມຄິດຂອງຄູສອນ ແລະ ນັກສຶກສາແມ່ນຄ້າຍຄືກັນ ເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລື່ນກັນເລັກໜ້ອຍ ແລະ ການຈັດລຽງລຳດັບແມ່ນຄືກັນລະຫວ່າງແນວຄິດຄິດຂອງຄູສອນ ແລະ ນັກສຶກສາ. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 11: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບ ການຮຽນ-ການສອນແບບເຊິ່ງໜ້າ ດ້ານການຕອບສະໜອງຕຶກຫໍພັກ, ຕຶກອາຄານ ແລະ ຫ້ອງຮຽນ.

| ດ້ານການຕອບສະໜອງຕຶກຫໍພັກ, ຕຶກອາຄານ ແລະ ຫ້ອງຮຽນ. | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ມີຫຼາຍ | 18 | 25.7 | 2 |
| ມີພຽງພໍ | 36 | 51.4 | 1 |
| ປານກາງ | 10 | 14.3 | 3 |
| ບໍ່ພຽງພໍ | 6 | 8.6 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ມີຫຼາຍ | 37 | 16.1 | 3 |
| ມີພຽງພໍ | 116 | 50.4 | 1 |
| ປານກາງ | 60 | 26.1 | 2 |
| ບໍ່ພຽງພໍ | 17 | 7.4 | 4 |

ຈາກຕາຕະລາງທີ 11: ແມ່ນສະແດງຜົນການວິເຄາະຂໍ້ມູນດ້ານການຕອບສະໜອງຕຶກຫໍພັກ, ຕຶກອາຄານ ແລະ ຫ້ອງຮຽນ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ໃຫ້ຄວາມຄິດເຫັນ ໃນລະດັບມີພຽງພໍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 36 ຄົນ, ຄິດເປັນເປີເຊັນເທົ່າ 51.4 %, ທັດລົງມາແມ່ນ ໃນລະດັບ ມີຫຼາຍ ຈຳນວນ 18 ຄົນ, ຄິດເປັນເປີເຊັນເທົ່າ 25.7 %, ສ່ວນ ໃນລະດັບປານກາງ ຈານວນ 10 ຄົນ, ຄິດເປັນເປີເຊັນເທົ່າ 14.3 % ແລະ ໃນລະດັບ ບໍ່ມີພຽງພໍ ຈຳນວນ 6 ຄົນ, ຄິດເປັນເປີເຊັນເທົ່າ 8.6 % ແລະ ນັກສຶກສາໃຫ້ຄວາມຄິດເຫັນຫຼາຍອາໝູ່ ມີຈຳນວນ 116 ຄົນ, ຄິດເປັນເປີເຊັນເທົ່າ 50.4 %, ທັດລົງມາແມ່ນ ໃນລະດັບ ປານກາງ ຈຳນວນ

60 ຄົນ, ຄິດເປັນເປີເຊັນເທົ່າ 26.1 %, ສ່ວນ ໃນລະດັບ ມີຫຼາຍ ຈໍານວນ 37 ຄົນ, ຄິດເປັນເປີເຊັນເທົ່າ 16.1 % ແລະ ໃນລະດັບ ບໍ່ມີພຽງພໍ ຈໍານວນ 17 ຄົນ, ຄິດເປັນເປີເຊັນເທົ່າ 7.4 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານຄວາມຄິດເຫັນຕໍ່ກັບການຮຽນ-ການສອນເນັ້ນປະຕິບັດຕົວຈິງ ແນວຄວາມຄິດຂອງຄູສອນ ແລະ ນັກສຶກສາແມ່ນແຕກຕ່າງກັນເລັກໜ້ອຍເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລົ່ນກັນເລັກໜ້ອຍຕາມລໍາດັບ ສໍາລັບແນວຄວາມຄິດຂອງຄູ ແລະ ນັກສຶກສາ ເນັ້ນຫຼາຍກວ່າແມ່ນລະດັບໃນລະດັບມີພຽງພໍ ເຊິ່ງຄູສອນ ຫຼາຍກວ່າ ນັກສຶກສາ 1%. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 12: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານການຕອບສະໜອງຫໍສະໝຸດ, ຫ້ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ.

| ດ້ານການຕອບສະໜອງຫໍສະໝຸດ, ຫ້ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ. | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ມີຫຼາຍ | 8 | 11.4 | 3 |
| ມີພຽງພໍ | 48 | 68.6 | 1 |
| ປານກາງ | 12 | 17.1 | 2 |
| ບໍ່ພຽງພໍ | 2 | 2.9 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ມີຫຼາຍ | 26 | 11.3 | 3 |
| ມີພຽງພໍ | 144 | 62.6 | 1 |
| ປານກາງ | 38 | 16.5 | 2 |
| ບໍ່ພຽງພໍ | 22 | 9.6 | 4 |

ຈາກຕາຕະລາງທີ 12: ແມ່ນສະແດງຜົນການວິເຄາະຂໍ້ມູນດ້ານການຕອບສະໜອງຫໍສະໝຸດ, ຫ້ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ໃຫ້ຄວາມຄິດເຫັນ ໃນລະດັບມີຫຼາຍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 25 ຄົນ, ຄິດເປັນເປີເຊັນເທົ່າ 35.7 %, ທັດລົງມາແມ່ນ ໃນລະດັບ ມີພຽງພໍ ຈຳນວນ 20 ຄົນ, ຄິດເປັນເປີເຊັນເທົ່າ 28.6 %, ສ່ວນ ໃນລະດັບປານກາງ ຈຳນວນ 18 ຄົນ, ຄິດເປັນເປີເຊັນເທົ່າ 25.7 % ແລະ ໃນລະດັບ ບໍ່ມີພຽງພໍ ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 % ແລະ ຄວາມຄິດຂອງນັກສຶກສາໃນລະດັບມີພຽງພໍກວມຈານວນຄົນຫຼາຍກ່ວາໝູ່ ມີຈານວນ 144 ຄົນ, ຄິດເປັນເປີເຊັນເທົ່າ 62.6 %, ທັດລົງມາແມ່ນ ໃນລະດັບ ປານກາງ ຈຳນວນ 38 ຄົນ, ຄິດເປັນເປີເຊັນເທົ່າ 16.5 %, ສ່ວນ ໃນລະດັບມີຫຼາຍ ຈຳນວນ 26 ຄົນ, ຄິດເປັນເປີເຊັນເທົ່າ 11.3 % ແລະ ໃນລະດັບ ບໍ່ມີພຽງພໍ ຈຳນວນ 22 ຄົນ, ຄິດເປັນເປີເຊັນເທົ່າ 9.6 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານມີຄວາມຄິດເຫັນຕໍ່ກັບດ້ານການຕອບສະໜອງຫໍສະໝຸດ, ຫ້ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ແນວຄວາມຄິດຂອງຄູສອນ ແລະ ນັກສຶກສາແມ່ນບໍ່ແຕກຕ່າງກັນປານໃດເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລົ່ນກັນເລັກໜ້ອຍ, ແລະ ການຈັດລຽງລຳດັບແມ່ນຄືກັນລະຫວ່າງແນວຄິດຄິດຂອງຄູສອນ ແລະ ນັກສຶກສາ, ໃນນັ້ນລະດັບມີພຽງພໍ ຂອງຄູສອນ ຫຼາຍກ່ວາ ນັກສຶກສາ 6%. ຈາກຂໍ້ມູນຂ້າງເທິງ ສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 13: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານມີການສົ່ງເສີມນັກສຶກສານຳໃຫ້ໃຊ້ຫໍສະໝຸດ ຫຼື ຫ້ອງທົດລອງຕິດພັນກັບການຮຽນ-ການສອນ ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:

| ມີການສົ່ງເສີມນັກສຶກສານຳໃຊ້ໃຊ້ຫໍສະໝຸດ ຫຼື ຫ້ອງທົດລອງຕິດພັນກັບການຮຽນ-ການສອນ | ຄວາມຖີ່ fregency | ເປີເຊັນ (%) percentage | ອັນດັບ |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ມີຫຼາຍ | 25 | 35.7 | 1 |
| ມີພຽງພໍ | 20 | 28.6 | 2 |
| ປານກາງ | 18 | 25.7 | 3 |
| ບໍ່ພຽງພໍ | 7 | 10.0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ມີຫຼາຍ | 43 | 18.7 | 2 |
| ມີພຽງພໍ | 155 | 67.4 | 1 |
| ປານກາງ | 29 | 12.6 | 3 |
| ບໍ່ພຽງພໍ | 3 | 1.3 | 4 |

ຕາຕະລາງທີ 13: ແມ່ນສະແດງຜົນການວິເຄາະຂໍ້ມູນມີການສົ່ງເສີມນັກສຶກສານຳໃຊ້ໃຊ້ຫໍສະໝຸດ ຫຼື ຫ້ອງທົດລອງຕິດພັນກັບການຮຽນ-ການສອນ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ໃຫ້ຄວາມຄິດເຫັນ ໃນລະດັບມີຫຼາຍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 25 ຄົນ, ຄິດເປັນເປີເຊັນເທົ່າ 35.7 %, ທັດລົງມາແມ່ນ ໃນລະດັບ ມີພຽງພໍ ຈຳນວນ 20 ຄົນ, ຄິດເປັນເປີເຊັນເທົ່າ 28.6 %, ສ່ວນ ໃນລະດັບປານກາງ ຈຳນວນ 18 ຄົນ, ຄິດເປັນເປີເຊັນເທົ່າ 25.7 % ແລະ ໃນລະດັບ ບໍ່ມີເລີຍ ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 % ແລະຄວາມຄິດຂອງນັກສຶກສາໃນລະດັບ ມີພຽງພໍ ກວມຈຳນວນຄົນຫຼາຍກ່ວາໝູ່ ມີຈຳນວນ 155 ຄົນ, ຄິດເປັນເປີເຊັນເທົ່າ 67.4%, ທັດລົງມາແມ່ນ ໃນລະດັບ ມີຫຼາຍຈານວນ 43 ຄົນ, ຄິດເປັນເປີເຊັນເທົ່າ 18.7 %, ສ່ວນ ໃນລະດັບປານກາງ ຈຳນວນ 29 ຄົນ, ຄິດເປັນເປີເຊັນເທົ່າ 12.6 % ແລະ ໃນລະດັບ ບໍ່ມີເລີຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 1.3 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານມີຄວາມຄິດເຫັນຕໍ່ກັບດ້ານການສົ່ງເສີມນັກສຶກສານຳໃຊ້ໃຊ້ຫໍສະໝຸດ ຫຼື ຫ້ອງທົດລອງຕິດພັນກັບການຮຽນ-ການສອນ ແນວຄວາມຄິດຂອງຄູສອນ ແລະ ນັກສຶກສາແມ່ນບໍ່ແຕກຕ່າງກັນປານໃດເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລົ່ນກັນເລັກໜ້ອຍ. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 14: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານມີການນໍາໃຊ້ ແລະ ສົ່ງເສີມໃຫ້ການຮຽນຮູ້ໂດຍການນໍາໃຊ້ເຕັກໂນໂລຊີເຂົ້າໃນກາຮຽນ-ການສອນ.

| ມີການນໍາໃຊ້ ແລະ ສົ່ງເສີມໃຫ້ການຮຽນຮູ້ໂດຍການນໍາໃຊ້ເຕັກໂນໂລຊີເຂົ້າໃນການຮຽນ-ການສອນ. | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ມີຫຼາຍ | 10 | 14.3 | 3 |
| ມີພຽງພໍ | 30 | 42.9 | 1 |
| ປານກາງ | 30 | 42.9 | 1 |
| ບໍ່ພຽງພໍ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ມີຫຼາຍ | 77 | 33.5 | 2 |
| ມີພຽງພໍ | 99 | 43.0 | 1 |
| ປານກາງ | 38 | 16.5 | 3 |
| ບໍ່ພຽງພໍ | 16 | 7.0 | 4 |

ຈາກຕາຕະລາງທີ 14: ແມ່ນສະແດງຜົນການວິເຄາະຂໍ້ມູນ ມີການນໍາໃຊ້ ແລະ ສົ່ງເສີມໃຫ້ການຮຽນຮູ້ໂດຍການນໍາໃຊ້ເຕັກໂນໂລຊີເຂົ້າໃນກາຮຽນ-ການສອນ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນໃຫ້ຄວາມຄິດເຫັນ ໃນລະດັບມີພຽງພໍ ແລະ ລະດັບປານກາງ ກວມຈໍານວນຄົນຫຼາຍກ່ວາໝູ່ ລະດັບລະ 30 ຄົນ, ຄິດເປັນເປີເຊັນເທົ່າ 42.9 %, ທັດລົງມາແມ່ນ ໃນລະດັບ ມີຫຼາຍ ຈໍານວນ 10 ຄົນ, ຄິດເປັນເປີເຊັນເທົ່າ 14.3 %, ໃນລະດັບ ບໍ່ພຽງພໍ ຈໍານວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 % ແລະ ຄວາມຄິດຂອງນັກສຶກສາໃນລະດັບ ມີພຽງພໍ ຈໍານວນ 99 ຄົນ, ຄິດເປັນເປີເຊັນເທົ່າ 43.0% ຖັດລົງມາແມ່ນ ລະດັບມີຫຼາຍ ຈໍານວນ 77 ຄົນ, ຄິດເປັນເປີເຊັນເທົ່າ

33.5 %, ລະດັບ ປານກາງ ຈຳນວນ 38 ຄົນ, ຄິດເປັນເປີເຊັນເທົ່າ 16.5 %, ໃນລະດັບ ບໍ່ພຽງພໍ ຈຳນວນ 16 ຄົນ, ຄິດເປັນເປີເຊັນເທົ່າ 7.0 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານມີຄວາມຄິດເຫັນຕໍ່ກັບດ້ານການນຳໃຊ້ ແລະ ສົ່ງເສີມໃຫ້ການຮຽນຮູ້ໂດຍການນຳໃຊ້ເຕັກໂນໂລຊີເຂົ້າໃນການຮຽນ-ການສອນ ແມ່ນມີຄວາມແຕກຕ່າງກັນ, ເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລົ່ນກັນ. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 15: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານການນຳໃຊ້ກິດຈະກຳ ແລະ ສື່ການຮຽນ-ການສອນ.

| **ການນຳໃຊ້ກິດຈະກຳ ແລະ ສື່ການຮຽນ-ການສອນ.** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ຫຼາກຫຼາຍ | 27 | 38.6 | 2 |
| ປານກາງ | 35 | 50.0 | 1 |
| ພໍໃຊ້ | 8 | 11.4 | 3 |
| ບໍ່ດີເລີຍ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ຫຼາກຫຼາຍ | 74 | 32.2 | 2 |
| ປານກາງ | 107 | 46.5 | 1 |
| ພໍໃຊ້ | 49 | 21.3 | 3 |
| ບໍ່ດີເລີຍ | 0 | 0 | 4 |

ຈາກຕາຕະລາງທີ 15: ແມ່ນສະແດງຜົນການວິເຄາະຂໍ້ມູນ ການນຳໃຊ້ກິດຈະກຳ ແລະ ສື່ການຮຽນ-ການສອນ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ກອມຫຼາຍກ່ວາໝູ່ ແມ່ນຢູ່ໃນລະດັບ ມີປານກາງ ຈຳນວນ 35 ຄົນ, ຄິດເປັນເປີເຊັນເທົ່າ 50.0 %, ທັດລົງມາແມ່ນ ໃນລະດັບ ຫຼາກຫຼາຍ ຈຳນວນ 27 ຄົນ, ຄິດເປັນເປີເຊັນເທົ່າ 38.6 %, ສ່ວນ ລະດັບພໍໃຊ້ ຈານວນ 8 ຄົນ, ຄິດເປັນເປີເຊັນເທົ່າ 11.4 % ແລະ ໃນລະດັບ ບໍ່ມີເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 % ແລະ ຄວາມຄິດຂອງນັກສຶກສາໃນລະດັບ ມີປານກາງ ຈານວນ 107 ຄົນ, ຄິດເປັນເປີເຊັນເທົ່າ 46.5 %, ທັດລົງມາແມ່ນ ໃນລະດັບ ຫຼາກຫຼາຍ ຈຳນວນ 74 ຄົນ, ຄິດເປັນເປີເຊັນເທົ່າ 32.2 %, ສ່ວນ ລະດັບພໍໃຊ້ ຈຳນວນ 49 ຄົນ, ຄິດເປັນເປີເຊັນເທົ່າ 21.3 % ແລະ ໃນລະດັບ ບໍ່ມີເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານມີຄວາມຄິດເຫັນຕໍ່ກັບດ້ານການນຳໃຊ້ກິດຈະກຳ ແລະ ສື່ການຮຽນ-ການສອນ ແນວຄວາມຄິດຂອງຄູສອນ ແລະ ນັກສຶກສາແມ່ນບໍ່ແຕກຕ່າງກັນປານໃດເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລົ່ນກັນເລັກໜ້ອຍ ແລະ ການຈັດລຽງລຳດັບແຕ່ລະລຳດັບແມ່ນແມ່ນຄືກັນລະຫວ່າງແນວຄິດຄິດຂອງຄູສອນ ແລະ ນັກສຶກສາ, ໃນນັ້ນລະດັບກອມເອົາເປີເຊັນຫຼາຍທີ່ສຸດແມ່ນລະດັບ ປານກາງ, ແນວຄວາມຄິດຄູສອນ ກອມເອົາຫຼາຍກວ່າຄວາມຄິດຂອງນັກສຶກສາ ຈຳນວນ 3.5%, ສະນັ້ນສະແດງໃຫ້ເຫັນເຖິງແນວຄວາມຄິດຂອງຄູ ແລະ ນັກສຶກສາແມ່ນຄ້າຍຄືກັນ. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 16: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານຄຸນນະພາບກິດຈະກຳ ແລະ ສື່ການຮຽນ-ການສອນ.

| **ຄຸນນະພາບກິດຈະກຳ ແລະ ສື່ການຮຽນ-ການສອນ.** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |

| | | | |
|---|---|---|---|
| ດີຫຼາຍ | 28 | 40.0 | 2 |
| ປານກາງ | 35 | 50.0 | 1 |
| ພໍໃຊ້ | 7 | 10.0 | 3 |
| ບໍ່ດີເລີຍ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ດີຫຼາຍ | 106 | 46.1 | 1 |
| ປານກາງ | 106 | 46.1 | 1 |
| ພໍໃຊ້ | 14 | 6.1 | 3 |
| ບໍ່ດີເລີຍ | 4 | 1.7 | 4 |

ຈາກຕາຕະລາງທີ 16: ແມ່ນສະແດງຜົນການວິເຄາະຂໍ້ມູນ ຄຸນນະພາບກິດຈະກຳ ແລະ ສື່ການຮຽນ-ການສອນ ຂອງຄູສອນ ແລະ ນັກສຶກສາ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ກວມຫຼາຍກ່ວາໝູ່ ແມ່ນຢູ່ໃນລະດັບ ປານກາງ ຈຳນວນ 35 ຄົນ, ຄິດເປັນເປີເຊັນເທົ່າ 50.0 %, ທັດລົງມາແມ່ນ ໃນລະດັບ ດີຫຼາຍ ຈຳນວນ 28 ຄົນ, ຄິດເປັນເປີເຊັນເທົ່າ 40.0 %, ສ່ວນ ລະດັບພໍໃຊ້ ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 % ແລະ ໃນລະດັບ ບໍ່ດີເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 %. ແລະ ຄວາມຄິດຂອງນັກສຶກສາ ກວມຫຼາຍກ່ວາໝູ່ ແມ່ນຢູ່ໃນລະດັບ ດີຫຼາຍ ແລະ ປານກາງ ລະດັບລະຈຳນວນ 106 ຄົນ, ຄິດເປັນເປີເຊັນເທົ່າ 46.1 %, ທັດລົງມາແມ່ນ ໃນລະດັບ ພໍໃຊ້ ຈຳນວນ 14 ຄົນ, ຄິດເປັນເປີເຊັນເທົ່າ 6.1 % ແລະ ໃນລະດັບ ບໍ່ດີເລີຍ ຈຳນວນ 4 ຄົນ, ຄິດເປັນເປີເຊັນເທົ່າ 1.7 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານມີຄວາມຄິດເຫັນຕໍ່ກັບດ້ານຄຸນນະພາບກິດຈະກຳ ແລະ ສື່ການຮຽນ-ການສອນ ແມ່ນມີຄວາມແຕກຕ່າງກັນ, ເຊິ່ງສະແດງໃຫ້ເຫັນຢູ່ໃນແຕ່ລະລະດັບແມ່ນມີຄວາມລຸດລົ່ນກັນ. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 17: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານການຈັດສັນ ແລະ ສ້າງສະພາບແວດລ້ອມສິ່ງເສີມການຮຽນ-ການສອນ.

| ການຈັດສັນ ແລະ ສ້າງສະພາບແວດລ້ອມສິ່ງເສີມການຮຽນ-ການສອນ. | ຄວາມຖີ່ fregency | ເປີເຊັນ (%) percentage | ອັນດັບ |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ເໝາະສົມຫຼາຍ | 17 | 24.3 | 2 |
| ເໝາະສົມປານກາງ | 46 | 65.7 | 1 |
| ພໍໃຊ້ | 7 | 10.0 | 3 |
| ບໍ່ດີເລີຍ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ເໝາະສົມຫຼາຍ | 83 | 36.1 | 2 |
| ເໝາະສົມປານກາງ | 96 | 41.7 | 1 |
| ພໍໃຊ້ | 48 | 20.9 | 3 |
| ບໍ່ດີເລີຍ | 3 | 1.3 | 4 |

ຈາກຕາຕະລາງທີ 17: ແມ່ນສະແດງຜົນການວິເຄາະຂໍ້ມູນ ການຈັດສັນ ແລະ ສ້າງສະພາບແວດລ້ອມສິ່ງເສີມການຮຽນ-ການສອນ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ກວມຫຼາຍກ່ວາໝູ່ ແມ່ນຢູ່ໃນລະດັບ ປານກາງ ຈຳນວນ 46 ຄົນ, ຄິດເປັນເປີເຊັນເທົ່າ 65.7 %, ທັດລົງມາແມ່ນ ໃນລະດັບ ເໝາະສົມຫຼາຍ ຈຳນວນ 17 ຄົນ, ຄິດເປັນເປີເຊັນເທົ່າ 24.3 %, ສ່ວນ ລະດັບພໍໃຊ້ ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 % ແລະ ໃນລະດັບ ບໍ່ດີເລີຍ ຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າ 0 % ແລະ ຄວາມຄິດຂອງນັກສຶກສາ ກວມຫຼາຍກ່ວາໝູ່ ແມ່ນຢູ່ໃນລະດັບ ເໝາະສົມ

ປານກາງ ຈຳນວນ 96 ຄົນ, ຄິດເປັນເປີເຊັນເທົ່າ 41.7 %, ທັດລົງມາແມ່ນ ໃນລະດັບ ເໝາະສົມຫຼາຍ ຈຳນວນ 83 ຄົນ, ຄິດເປັນເປີເຊັນເທົ່າ 36.1 %, ສ່ວນ ລະດັບພໍໃຊ້ ຈຳນວນ 48 ຄົນ, ຄິດເປັນເປີເຊັນເທົ່າ 20.9 % ແລະ ໃນລະດັບ ບໍ່ດີເລີຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 1.3 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານມີຄວາມຄິດເຫັນຕໍ່ກັບດ້ານການຈັດສັນ ແລະ ສ້າງສະພາບແວດລ້ອມສິ່ງເສີມການຮຽນ-ການສອນ ແມ່ນມີຄວາມຄ້າຍຄືກັນລະຫວ່າງຄວາມຄິດຂອງຄູສອນ ແລະ ນັກສຶກສາ, ການຈັດລຽງແຕ່ລະລະດັບແມ່ນຄືກັນ, ການຈັດສັນ ແລະ ສ້າງສະພາບແວດລ້ອມສິ່ງເສີມການຮຽນ-ການສອນ ລະດັບໝາະສົມປານກາງແມ່ນກວມເອົາເປີເຊັນຫຼາຍທີ່ສຸດ, ຄວາມຄິດຄູສອນກວມເອົາເປີເຊັນຫຼາຍກວ່ານັກສຶກສາ ຈຳນວນ 24 %. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 18: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານການມີສ່ວນຮ່ວມກັບຊຸມຊົນ ເພື່ອສົ່ງເສີມການປະຕິບັດຫຼັກສູດການຮຽນ-ການສອນ.

| **ການມີສ່ວນຮ່ວມກັບຊຸມຊົນ ເພື່ອສົ່ງເສີມການປະຕິບັດຫຼັກສູດການຮຽນ-ການສອນ.** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ມີຫຼາຍ | 7 | 10.0 | 2 |
| ມີປານກາງ | 56 | 80.0 | 1 |
| ມີໜ້ອຍ | 7 | 10.0 | 2 |
| ບໍ່ມີເລີຍ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |

| | | | |
|---|---|---|---|
| ມີຫຼາຍ | 52 | 22.6 | 2 |
| ມີປານກາງ | 154 | 67.0 | 1 |
| ມີໜ້ອຍ | 24 | 10.4 | 3 |
| ບໍ່ມີເລີຍ | 0 | 0 | 4 |

ຈາກຕາຕະລາງທີ 18: ແມ່ນສະແດງຜົນການວິເຄາະຂໍ້ມູນ ການມີສ່ວນຮ່ວມກັບຊຸມຊົນ ເພື່ອສົ່ງເສີມການປະຕິບັດຫຼັກສູດການຮຽນ-ການສອນ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ກວມຫຼາຍກ່າວໝູ່ ແມ່ນຢູ່ໃນລະດັບ ມີປານກາງ ຈຳນວນ 56 ຄົນ, ຄິດເປັນເປີເຊັນເທົ່າ 80.0 %, ທັດລົງມາແມ່ນ ໃນລະດັບ ມີຫຼາຍ ແລະ ມີໜ້ອຍ ເຊິ່ງລະດັບມີຫຼາຍຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 %, ສ່ວນ ລະດັບມີໜ້ອຍ ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 % ແລະ ໃນລະດັບ ບໍ່ດີເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 % ແລະ ຄວາມຄິດຂອງນັກສຶກສາ ກວມຫຼາຍກ່າວໝູ່ ແມ່ນຢູ່ໃນລະດັບ ມີປານກາງ ຈຳນວນ 154 ຄົນ, ຄິດເປັນເປີເຊັນເທົ່າ 67.0 %, ທັດລົງມາແມ່ນ ໃນລະດັບ ມີຫຼາຍ ຈຳນວນ 52 ຄົນ, ຄິດເປັນເປີເຊັນເທົ່າ 22.6 %, ລະດັບ ມີໜ້ອຍ ຈຳນວນ 24 ຄົນ, ຄິດເປັນເປີເຊັນເທົ່າ 10.4 % ແລະ ໃນລະດັບ ບໍ່ດີເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາ ມີຄວາມຄິດເຫັນຕໍ່ກັບດ້ານການມີສ່ວນຮ່ວມກັບຊຸມຊົນ ເພື່ອສົ່ງເສີມການປະຕິບັດຫຼັກສູດການຮຽນ-ການສອນ ແມ່ນແຕກຕ່າງກັນຫຼາຍ , ໃນນັ້ນລະດັບທີ່ກວມເອົາເປີເຊັນຫຼາຍທັງຄູສອນ ແລະ ນັກສຶກສາແມ່ນ ລະດັບ ມີປານກາງ, ຫຼາຍກວ່າ ຈານວນ 13 %. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:



### **4.2.2** ດ້ານສະພາບການຈັດການຮຽນ-ການສອນແບບອອນໄລນ໌ ຂອງຄູສອນ ແລະ ນັກສຶກສາ.

ຕາຕະລາງທີ 19: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບສະພາບການຮຽນ-ການສອນແບບແບບອອນໄລນ໌. ດ້ານໄດ້ມີການແນະນຳ ຫຼື ຝຶກອົບຮົມຂີດຄວາມສາມາດການນຳໃຊ້ເຕັກໂນໂລຊີ.

| ໄດ້ມີການແນະນຳ ຫຼື ຝຶກອົບຮົມຂີດຄວາມສາມາດການນຳໃຊ້ເຕັກໂນໂລຊີ. | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ປະຕິບັດຫຼາຍ | 15 | 21.4 | 2 |
| ປະຕິບັດປານກາງ | 49 | 70.0 | 1 |
| ປະຕິບັດໜ້ອຍ | 6 | 8.6 | 3 |
| ບໍ່ໄດ້ປະຕິບັດເລີຍ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ປະຕິບັດຫຼາຍ | 51 | 22.2 | 2 |
| ປະຕິບັດປານກາງ | 135 | 60.0 | 1 |
| ປະຕິບັດໜ້ອຍ | 38 | 16.5 | 3 |
| ບໍ່ໄດ້ປະຕິບັດເລີຍ | 3 | 1.3 | 4 |

ຈາກຕາຕະລາງທີ 19: ແມ່ນສະແດງຜົນການວິເຄາະຂໍ້ມູນ ໄດ້ມີການແນະນຳ ຫຼື ຝຶກອົບຮົມຂີດຄວາມສາມາດການນຳໃຊ້ເຕັກໂນໂລຊີ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ທີ່ໄດ້ປະຕິບັດ ຫຼາຍກ່ວາໝູ່ແມ່ນ ລະດັບປານກາງ ກວມຈຳນວນຄົນ ຈຳນວນ 49 ຄົນ, ຄິດເປັນເປີເຊັນເທົ່າ 70 %, ທັດລົງມາແມ່ນ ໃນລະດັບ ປະຕິບັດຫຼາຍ ຈຳນວນ 15 ຄົນ, ຄິດເປັນເປີເຊັນເທົ່າ 21.1 %, ສ່ວນຄູທີ່ໄດ້ປະຕິບັດໃນລະດັບໜ້ອຍ ຈຳນວນ 6 ຄົນ, ຄິດເປັນເປີເຊັນເທົ່າ 8.6 % ແລະ ຄູທີ່ໄດ້ປະຕິບັດ ໃນລະດັບ ບໍ່ໄດ້ປະຕິບັດເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 % ແລະ ຄວາມຄິດຂອງນັກສຶກສາ ກວມຫຼາຍກ່ວາໝູ່ແມ່ນ ລະດັບປານກາງ ກວມຈຳນວນຄົນ ຈຳນວນ 135 ຄົນ, ຄິດເປັນເປີເຊັນເທົ່າ 60.0 %, ທັດລົງມາແມ່ນ ໃນລະດັບ ປະຕິບັດຫຼາຍ ຈານວນ 51 ຄົນ, ຄິດເປັນເປີເຊັນເທົ່າ 22.2 %, ສ່ວນຄູທີ່ໄດ້ປະຕິບັດໃນລະດັບໜ້ອຍ ຈຳນວນ 38 ຄົນ, ຄິດເປັນເປີເຊັນເທົ່າ 16.5 % ແລະ ຄູທີ່ໄດ້ປະຕິບັດ ໃນລະດັບ ບໍ່ໄດ້ປະຕິບັດເລີຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 1.3 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາ ມີຄວາມຄິດເຫັນຕໍ່ກັບດ້ານໄດ້ມີການແນະນຳ ຫຼື ຝຶກອົບຮົມຂີດຄວາມສາມາດການນຳໃຊ້ເຕັກໂນໂລຊີ ແມ່ນຄ້າຍຄືກັນ, ໃນນັ້ນລະດັບທີ່ກວມເອົາເປີເຊັນຫຼາຍທັງຄູສອນ ແລະ ນັກສຶກສາແມ່ນ ລະດັບ ປະຕິບັດປານກາງ, ຄູສອນ ຫຼາຍກວ່າ ນັກສຶກສາ ຈຳນວນ 10 %. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 20: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບແບບອອນໄລນ໌. ດ້ານປະສົບການກ່ຽວກັບກົດລະບຽບໃນການຈັດການຮຽນ-ການສອນແບບອອນໄລນຂອງທ່ານ.

| **ປະສົບການກ່ຽວກັບກົດລະບຽບໃນການຈັດການຮຽນ-ການສອນແບບອອນໄລນ໌ຂອງທ່ານ.** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ຮູ້ຫຼາຍ | 19 | 27.1 | 2 |
| ຮູ້ປານກາງ | 42 | 60.0 | 1 |
| ຮູ້ໜ້ອຍໜຶ່ງ | 9 | 12.9 | 3 |
| ບໍ່ຮູ້ເລີຍ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ຮູ້ຫຼາຍ | 33 | 14.3 | 3 |
| ຮູ້ປານກາງ | 150 | 65.2 | 1 |
| ຮູ້ໜ້ອຍໜຶ່ງ | 44 | 19.1 | 2 |
| ບໍ່ຮູ້ເລີຍ | 3 | 1.3 | 4 |

ຈາກຕາຕະລາງທີ 20: ແມ່ນສະແດງຜົນການວິເຄາະຂໍ້ມູນ ປະສົບການກ່ຽວກັບກົດລະບຽບໃນການຈັດການຮຽນ-ການສອນແບບອອນໄລນ໌ຂອງທ່ານ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ທີ່ໄດ້ປະຕິບັດ ຫຼາຍກ່ວາໝູ່ແມ່ນລະດັບຮູ້ປານກາງ ກວມຈຳນວນຄົນ ມີຈຳນວນ 42 ຄົນ, ຄິດເປັນເປີເຊັນເທົ່າ 60.0 %, ທັດລົງມາແມ່ນຜູ້ ໃນລະດັບຮູ້ຫຼາຍ ຈຳນວນ 19 ຄົນ, ຄິດເປັນເປີເຊັນເທົ່າ 27.1 %, ສ່ວນຄູທີ່ໄດ້ປະຕິບັດໃນລະດັບຮູ້ໜ້ອຍໜຶ່ງ ຈານວນ 9 ຄົນ , ຄິດເປັນເປີເຊັນເທົ່າ 12.9 % ແລະ ຄູທີ່ມີ ໄດ້ປະຕິບັດ ໃນລະດັບ ບໍ່ຮູ້ເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0

% ແລະ ຄວາມຄິດຂອງນັກສຶກສາ ກວມຫຼາຍກ່ວາໝູ່ແມ່ນ ລະດັບຮູ້ປານກາງ ກວມຈານວນຄົນ ມີຈຳນວນ 150 ຄົນ, ຄິດເປັນເປີເຊັນເທົ່າ 65.2 %, ທັດລົງມາແມ່ນຜູ້ ໃນລະດັບ ຮູ້ໜ້ອຍໜຶ່ງ ຈຳນວນ 44 ຄົນ, ຄິດເປັນເປີເຊັນເທົ່າ 19.1 %, ສ່ວນຄູທີ່ໄດ້ປະຕິບັດໃນລະດັບຮູ້ຫຼາຍ ຈຳນວນ 33 ຄົນ, ຄິດເປັນເປີເຊັນເທົ່າ 14.3 % ແລະ ຄູທີ່ມີ ໄດ້ ປະຕິບັດ ໃນລະດັບ ບໍ່ຮູ້ເລີຍ ຈຳນວນ 3 ຄົນ, ຄິດເປັນເປີເຊັນເທົ່າ 1.3 %

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາແມ່ນ ມີຄວາມຄິດເຫັນຄ້າຍຄືກັນ, ໃນນັ້ນຄວາມຄິດເຫັນຂອງນັກສຶກສາ ລະດັບຮູ້ປານກາງ ກວມເອົາເປີເຊັນຫຼາຍກວ່າຄວາຄິດເຫັນຂອງຄູສອນ ຈຳນວນ 5.2%. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 21: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອບແບບແບບອອນໄລນ໌. ດ້ານຄວາມຖີ່ໃນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ຂອງທ່ານ.

| ຄວາມຖີ່ໃນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ຂອງທ່ານ. | ຄວາມຖີ່ fregency | ເປີເຊັນ (%) percentage | ອັນດັບ |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ສະເໝີ | 5 | 7.1 | 4 |
| ເລື້ອຍໆ | 21 | 30. | 2 |
| ບາງຄັ້ງ | 35 | 50.0 | 1 |
| ດົນໆເທື່ອ | 9 | 12.9 | 3 |
| ບໍ່ໄດ້ຈັດຕັ້ງເຄີຍ | 0 | 0 | 5 |
| **ຄວາມຄິດຂອງນັກສຶກສາ** | | | |
| ສະເໝີ | 7 | 3.0 | 4 |
| ເລື້ອຍໆ | 10 | 4.3 | 3 |

| | | | |
|---|---|---|---|
| ບາງຄັ້ງ | 135 | 58.7 | 1 |
| ດົນໆເທື່ອ | 78 | 33.9 | 2 |
| ບໍ່ໄດ້ຈັດຕັ້ງເຄີຍ | 0 | 0 | 5 |

ຈາກຕາຕະລາງທີ 21: ແມ່ນສະແດງຜົນການວິເຄາະຂໍ້ມູນ ຄວາມຖີ່ໃນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ຂອງທ່ານ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ທີ່ໄດ້ປະຕິບັດ ຫຼາຍກ່ວາໝູ່ແມ່ນ ລະດັບບາງຄັ້ງຄາວ ກວມຈຳນວນຄົນ ມີຈຳນວນ 35 ຄົນ, ຄິດເປັນເປີເຊັນເທົ່າ 50.0 %, ທັດລົງມາແມ່ນໃນລະດັບ ເລື້ອຍໆ ຈຳນວນ 21 ຄົນ , ຄິດເປັນເປີເຊັນເທົ່າ 30.0 %, ສ່ວນຄູທີ່ໄດ້ປະຕິບັດໃນລະດັບ ດົນໆເທື່ອ ຈຳນວນ ໙ ຄົນ, ຄິດເປັນເປີເຊັນເທົ່າ 12.9 % ແລະ ຄູທີ່ຢູ່ໃນລະດັບ ບໍ່ໄດ້ຈັດຕັ້ງເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 % ແລະ ຄວາມຄິດຂອງນັກສຶກສາ ກວມຫຼາຍກ່ວາໝູ່ແມ່ນຫຼາຍກ່ວາໝູ່ແມ່ນ ລະດັບບາງຄັ້ງຄາວ ກວມຈຳນວນຄົນ ມີຈຳນວນ 135 ຄົນ, ຄິດເປັນເປີເຊັນເທົ່າ 58.7 %, ທັດລົງມາແມ່ນໃນລະດັບ ດົນໆເທື່ອ ຈຳນວນ 78 ຄົນ, ຄິດເປັນເປີເຊັນເທົ່າ 33.9 %, ສ່ວນຄູທີ່ໄດ້ປະຕິບັດໃນລະດັບ ເລື້ອຍໆ ຈຳນວນ 10 ຄົນ, ຄິດເປັນເປີເຊັນເທົ່າ 4.3 % ແລະ ຄູທີ່ຢູ່ໃນລະດັບ ບໍ່ໄດ້ຈັດຕັ້ງເລີຍ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາແມ່ນ ມີຄວາມຄິດເຫັນຄ້າຍຄືກັນ, ໃນນັ້ນຄວາມຄິດເຫັນຂອງນັກສຶກສາ ລະດັບບາງຄັ້ງ ກວມເອົາເປີເຊັນຫຼາຍກວ່າຄວາຄິດເຫັນຂອງຄູສອນ ຈຳນວນ 8.7%.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 22: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອບແບບອອນໄລນ໌. ດ້ານການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ.

| ການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ. | ຄວາມຖີ່ fregency | ເປີເຊັນ (%) percentage | ອັນດັບ |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ຄອມພິວເຕີຕັ້ງໂຕະ | 16 | 22.9 | 2 |
| ຄອມພິວເຕີແບບພົກພາ | 50 | 71.4 | 1 |
| ໂທລະສັບ | 4 | 5.7 | 3 |
| ໃຊ້ອຸປະກອນຮ່ວມກັບຄົນອື່ນ | 0 | 0 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ຄອມພິວເຕີຕັ້ງໂຕະ | 23 | 10.0 | 4 |
| ຄອມພິວເຕີແບບພົກພາ | 66 | 28.7 | 2 |
| ໂທລະສັບ | 110 | 47.8 | 1 |
| ໃຊ້ອຸປະກອນຮ່ວມກັບຄົນອື່ນ | 31 | 13.5 | 3 |

ຈາກຕາຕະລາງທີ 22: ແມ່ນສະແດງຜົນການວິເຄາະຂໍ້ມູນ ການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການຮຽນ-ການສອນແແບບອອນໄລນ໌ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ທີ່ໄດ້ປະຕິບັດ ຫຼາຍກ່ວາໝູ່ແມ່ນ ຄອມພິວເຕີແບບພົກພາ ກວມຈຳນວນຄົນ ມີຈຳນວນ 50 ຄົນ, ຄິດເປັນເປີເຊັນເທົ່າ 71.1 %, ທັດລົງມາແມ່ນ ຄອມພິວເຕີຕັ້ງໂຕະ ຈຳນວນ 16 ຄົນ, ຄິດເປັນເປີເຊັນເທົ່າ 22.9 %, ສ່ວນຄູທີ່ໄດ້ໃຊ້ ໂທລະສັບ ຈານວນ 4 ຄົນ, ຄິດເປັນເປີເຊັນເທົ່າ 5.7 % ແລະ ຄູທີ່ໃຊ້ອຸປະກອນຮ່ວມກັບຄົນອື່ນ ຈຳນວນ 0 ຄົນ, ຄິດເປັນເປີເຊັນເທົ່າ 0 % ແລະ ຄວາມຄິດເຫັນຂອງນັກສຶກສາ ແມ່ນ ໂທລະສັບ ກວມຈຳນວນຄົນ ມີຈຳນວນ 110 ຄົນ, ຄິດເປັນເປີເຊັນເທົ່າ 47.8 %, ທັດລົງມາແມ່ນ ຄອມພິວເຕີແບບພົກພາ ຈຳນວນ 66 ຄົນ, ຄິດເປັນເປີເຊັນເທົ່າ 28.7 %, ສ່ວນນັກສຶກສາທີ່ໄດ້ໃຊ້ ໃຊ້ອຸປະກອນຮ່ວມກັບຄົນອື່ນ ຈຳນວນ 31 ຄົນ, ຄິດເປັນເປີເຊັນເທົ່າ 13.5 % ແລະ ຄອມພິວເຕີຕັ້ງໂຕະ ຈຳນວນ 23 ຄົນ, ຄິດເປັນເປີເຊັນເທົ່າ 10.0 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາແມ່ນການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການຮຽນ-ການສອນແແບບອອນໄລນ໌ທີ່ແຕກຕ່າງກັນ, ຄູສອນແມ່ນນຳໃຊ້ຄອມພິວເຕີແບບພົກພາ ກວມເອົາເປີເຊັນ ຫຼາຍທີ່ສຸດ, ສ່ວນນັກສຶກສາແມ່ນນຳໃຊ້ໂທລະສັບ ກວມເອົາເປີເຊັນຫຼາຍທີ່ສຸດ.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 23: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບອອນໄລນ໌. ດ້ານເຄື່ອງມືທີ່ນຳໃຊ້ ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ.

| **ເຄື່ອງມືທີ່ນຳໃຊ້ ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ.** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ຊູມ (Zoom) | 34 | 48.6 | 1 |
| ກູໂກມິດ (Google Meet) | 24 | 34.3 | 2 |
| what app | 11 | 15.7 | 3 |
| Messenger | 1 | 1.4 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ຊູມ (Zoom) | 84 | 36.5 | 1 |
| ກູໂກມິດ (Google Meet) | 81 | 35.2 | 2 |
| what app | 37 | 16.1 | 3 |
| Messenger | 28 | 12.2 | 4 |

ຈາກຕາຕະລາງທີ 23: ແມ່ນສະແດງຜົນການວິເຄາະຂໍ້ມູນ ເຄື່ອງມືທີ່ນຳໃຊ້ ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ກວມຈຳນວນຄົນຫຼາຍທີ່ສຸດ ແມ່ນ ຊູມ (Zoom) ຈຳນວນ 34 ຄົນ, ຄິດເປັນເປີເຊັນເທົ່າ 48.6 %, ທັດລົງມາແມ່ນກູໂກມິດ (Google Meet) ຈຳນວນ 24 ຄົນ, ຄິດເປັນເປີເຊັນເທົ່າ 34.3 %, ສ່ວນຄູທີ່ໄດ້ໃຊ້ what app ຈານວນ 11 ຄົນ, ຄິດເປັນເປີເຊັນເທົ່າ 15.7 %

ແລະ ຄູທີ່ໃຊ້ Messenger ຈຳນວນ 1 ຄົນ, ຄິດເປັນເປີເຊັນເທົ່າ 1.4 % ແລະ ຄວາມຄິດເຫັນຂອງນັກສຶກສາ ຫຼາຍທີ່ສຸດ ແມ່ນ ຊູມ (Zoom) ກວມຈຳນວນຄົນ ມີຈຳນວນ 84 ຄົນ, ຄິດເປັນເປີເຊັນເທົ່າ 36.5 %, ທັດລົງມາແມ່ນກູໂກມິດ (Google Meet) ຈຳນວນ 81 ຄົນ, ຄິດເປັນເປີເຊັນເທົ່າ 35.2 %, ສ່ວນຄູທີ່ໄດ້ໃຊ້ what app ຈານວນ 37 ຄົນ, ຄິດເປັນເປີເຊັນເທົ່າ 16.1 % ແລະ ຄູທີ່ໃຊ້ Messenger ຈຳນວນ 28 ຄົນ, ຄິດເປັນເປີເຊັນເທົ່າ 12.2 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາແມ່ນ ມີການນຳໃຊ້ເຄື່ອງມືເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດແມ່ນຊູມ (Zoom)ຄືກັນ, ໃນນັ້ນການນຳໃຊ້ຂອງຄູສອນຫຼາຍກວ່າ ການນຳໃຊ້ຂອງນັກສຶກສາຈຳນວນ 12.1 %.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 24: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບອອນໄລນ໌. ດ້ານປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ

| ປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ | ຄວາມຖີ່ fregency | ເປີເຊັນ (%) percentage | ອັນດັບ |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ຂໍ້ມູນມືຖື (Mobile Data) | 35 | 50.0 | 1 |
| ບອດແບນ (Broadband internet) | 7 | 10.0 | 3 |
| ວາຍຟາຍຂອງໂຮງຮຽນ (School-Wifi) | 22 | 31.4 | 2 |
| Home Wifi | 6 | 8.6 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ຂໍ້ມູນມືຖື (Mobile Data) | 194 | 84.3 | 1 |
| ບອດແບນ (Broadband internet) | 2 | 0.9 | 4 |

| | | | |
|---|---|---|---|
| ວາຍຟາຍຂອງໂຮງຮຽນ (School-Wifi) | 23 | 10.0 | 2 |
| Home Wifi | 11 | 4.8 | 3 |

ຈາກຕາຕະລາງທີ 24: ແມ່ນສະແດງຜົນການວິເຄາະຂໍ້ມູນ ປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ຂອງຄູສອນ ແລະ ນັກສຶກສາ ຫຼາຍທີ່ສຸດ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ຫຼາຍທີ່ສຸດແມ່ນ ຂໍ້ມູນມືຖື (Mobile Data) ກອມຈຳນວນຄົນ ມີຈຳນວນ 35 ຄົນ, ຄິດເປັນເປີເຊັນເທົ່າ 50.0 %, ທັດລົງມາແມ່ນ ວາຍຟາຍຂອງໂຮງຮຽນ (School-Wifi)ຈຳນວນ 22 ຄົນ, ຄິດເປັນເປີເຊັນເທົ່າ 31.4 %, ສ່ວນຄູທີ່ໄດ້ໃຊ້ ບອດແບນ (Broadband internet) ຈຳນວນ 7 ຄົນ, ຄິດເປັນເປີເຊັນເທົ່າ 10.0 % ແລະ ຄູທີ່ໃຊ້ Home Wifi ຈຳນວນ 6 ຄົນ, ຄິດເປັນເປີເຊັນເທົ່າ 58.6 % ແລະ ຄວາມຄິດເຫັນຂອງນັກສຶກສາຂໍ້ມູນມືຖື (Mobile Data) ກອມຈຳນວນຄົນ ມີຈຳນວນ 194 ຄົນ, ຄິດເປັນເປີເຊັນເທົ່າ 84.3%, ທັດລົງມາແມ່ນວາຍຟາຍຂອງໂຮງຮຽນ (School-Wifi) ຈຳນວນ 23 ຄົນ, ຄິດເປັນເປີເຊັນເທົ່າ 10.0 %, ສ່ວນຄູທີ່ໄດ້ໃຊ້ Home Wifi ຈຳນວນ 11 ຄົນ, ຄິດເປັນເປີເຊັນເທົ່າ 4.8% ແລະ ຄູທີ່ໃຊ້ ບອດແບນ (Broadband internet) ຈຳນວນ 2 ຄົນ, ຄິດເປັນເປີເຊັນເທົ່າ 0.9 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາຕໍ່ກັບດ້ານ ປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ ແມ່ນຄ້າຍຄືກັນ ແລະ ນຳໃຊ້ຫຼາຍທີ່ສຸດແມ່ນ ຂໍ້ມູນມືຖື (Mobile Data) ໃນນັ້ນເປີເຊັນຂອງນັກສຶກສາຫຼາຍກວ່າເປີເຊັນຂອງຄູສອນ ຈຳນວນ 34.3%, ເຊິ່ງ ມັນສະແດງໃຫ້ເຫັນເຖິງຄວາມບໍ່ສະຖຽນຂອງສັນຍານອິນເຕີເນັດ.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:



ຕາຕະລາງທີ 25: : ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບອອນໄລນ໌. ດ້ານບັນຫາຄ່າໃຊ້ຈ່າຍຄ່າອິນເຕີເນັດ ໃນການຈັດການຮຽນ-ການສອນ ແບບອອນໄລນ໌.

| ບັນຫາຄ່າໃຊ້ຈ່າຍຄ່າອິນເຕີເນັດ ໃນການຈັດການຮຽນ-ການສອນ ແບບອອນໄລນ໌. | ຄວາມຖີ່ fregency | ເປີເຊັນ (%) percentage | ອັນດັບ |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ແພງຫຼາຍ | 29 | 41.4 | 2 |
| ແພງ | 31 | 44.3 | 1 |
| ຂ້ອນຂ້າງແພງ | 9 | 12.9 | 3 |
| ບໍ່ແພງ | 1 | 1.4 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ແພງຫຼາຍ | 80 | 34.8 | 1 |
| ແພງ | 58 | 25.2 | 2 |
| ຂ້ອນຂ້າງແພງ | 57 | 24.8 | 3 |
| ບໍ່ແພງ | 35 | 15.2 | 4 |

ຈາກຕາຕະລາງທີ 25: ແມ່ນສະແດງຜົນການວິເຄາະຂໍ້ມູນ ບັນຫາຄ່າໃຊ້ຈ່າຍຄ່າອິນເຕີເນັດ ໃນການຈັດການຮຽນ-ການສອນ ແບບອອນໄລນ໌ ຂອງຄູສອນ ແລະ ນັກສຶກສາ ຫຼາຍທີ່ສຸດ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ທີ່ກວມເອົາຫຼາຍທີ່ສຸດແມ່ນ ລະດັບແພງ ຈຳນວນ 31 ຄົນ, ຄິດເປັນເປີເຊັນເທົ່າ 44.3 %, ທັດລົງມາແມ່ນລະດັບ ແພງຫຼາຍ ຈຳນວນ 29 ຄົນ, ຄິດເປັນເປີເຊັນເທົ່າ 41.1 %, ລະດັບ ຂ້ອນຂ້າງແພງ ຈຳນວນ 9 ຄົນ, ຄິດເປັນເປີເຊັນເທົ່າ 12.9 % ແລະ ໃນລະດັບ ບໍ່ແພງ ຈຳນວນ 1 ຄົນ, ຄິດເປັນເປີເຊັນເທົ່າ 1.4 % ແລະ ຄວາມຄິດເຫັນຂອງນັກສຶກສາຫຼາຍທີ່ສຸດແມ່ນ ລະດັບແພງຫຼາຍ ກວມຈຳນວນ 80 ຄົນ, ຄິດເປັນເປີເຊັນເທົ່າ 34.8 %, ທັດລົງມາແມ່ນລະດັບແພງ ຈຳນວນ 58 ຄົນ, ຄິດເປັນເປີເຊັນເທົ່າ 41.1 %, ລະດັບ ຂ້ອນຂ້າງແພງ ຈຳນວນ 57 ຄົນ, ຄິດເປັນເປີເຊັນເທົ່າ 24.8 % ແລະ ໃນລະດັບ ບໍ່ແພງ ຈຳນວນ 35 ຄົນ, ຄິດເປັນເປີເຊັນເທົ່າ 15.2 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາຕໍ່ກັບດ້ານບັນຫາຄ່າໃຊ້ຈ່າຍຄ່າອິນເຕີເນັດ ໃນການຈັດການຮຽນ-ການສອນ ແບບອອນໄລນ໌, ຄວາມຄິດຂອງຄູແມ່ນລະດັບແພງ ກວມເອົາເປີເຊັນຫຼາຍທີ່ສຸດ ສ່ວນ ນັກສຶກສາແມ່ນ ລະດັບແພງຫຼາຍ ກວມເອົາເປີເຊັນຫຼາຍທີ່ສຸດ, ເຊິ່ງມັນສະແດງໃຫ້ເຫັນເຖິງການໃຊ້ຈ່າຍເພີ່ມຂຶ້ນ. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 26: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອບແບບອອນໄລນ໌. ດ້ານທ່ານມີຄວາມຊໍານານໃນການຈັດການຮຽນ-ການສອນແບບແບບອອນໄລນ໌.

| **ທ່ານມີຄວາມຊໍານານໃນການຈັດການຮຽນ-ການສອນແບບແບບອອນໄລນ໌** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ດີຫຼາຍ | 14 | 20.0 | 3 |
| ດີ | 35 | 50.0 | 1 |
| ປານກາງ | 20 | 28.6 | 2 |
| ພໍໃຊ້ໄດ້ | 1 | 1.4 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ດີຫຼາຍ | 50 | 21.7 | 4 |
| ດີ | 73 | 31.7 | 1 |
| ປານກາງ | 54 | 23.5 | 2 |
| ພໍໃຊ້ໄດ້ | 53 | 23.0 | 3 |

ຈາກຕາຕະລາງທີ 26: ແມ່ນສະແດງຜົນການວິເຄາະຂໍ້ມູນ ທ່ານມີຄວາມຊໍານານໃນການຈັດການຮຽນ-ການສອນແບບແບບອອນໄລນ໌ ຂອງຄູສອນ ແລະ ນັກສຶກສາ ຫຼາຍທີ່ສຸດ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ກວມເອົາຫຼາຍທີ່ສຸດແມ່ນ ໃນລະດັບ ດີ ກວມຈໍານວນຄົນຈໍານວນ 35 ຄົນ, ຄິດເປັນເປີເຊັນເທົ່າ 50.0 %, ທັດລົງມາແມ່ນລະດັບ ປານກາງ ຈໍານວນ 20 ຄົນ, ຄິດເປັນເປີເຊັນເທົ່າ 28.6 %, ລະດັບ ດີຫຼາຍ ຈໍານວນ 14 ຄົນ, ຄິດເປັນເປີເຊັນເທົ່າ 20.0 % ແລະ ໃນລະດັບ ພໍໃຊ້ ຈໍານວນ 1 ຄົນ, ຄິດເປັນເປີເຊັນເທົ່າ 1.4 % ແລະ ຄວາມຄິດເຫັນຂອງ

ນັກສຶກສາ ຫຼາຍທີ່ສຸດແມ່ນ ດີ ຈຳນວນ 73 ຄົນ, ຄິດເປັນເປີເຊັນເທົ່າ 31.7 %, ທັດລົງມາແມ່ນລະດັບ ປານກາງ ຈຳນວນ 54 ຄົນ, ຄິດເປັນເປີເຊັນເທົ່າ 23.5 %, ລະດັບ ພໍໃຊ້ໄດ້ ຈຳນວນ 53 ຄົນ, ຄິດເປັນເປີເຊັນເທົ່າ 23.0 % ແລະ ໃນລະດັບ ດີຫຼາຍ ຈຳນວນ 50ຄົນ, ຄິດເປັນເປີເຊັນເທົ່າ 21.7%.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາຕໍ່ກັບດ້ານທ່ານມີຄວາມຊຳນານໃນການຈັດການຮຽນ-ການສອນແບບແບບອອນໄລນ໌ ແມ່ນແຕກຕ່າງກັນຫຼາຍໃນແຕ່ລະດ້ານ, ເຊິ່ງມັນສະແດງໃຫ້ເຫັນຄວາມຮູ້ທາງດ້ານເຕັກໂນໂລຊີ ແລະ ການນຳໃຊ້ເຄື່ອງມືເອເລັກໂຕນິກ.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 27: ຜົນການວິເຄາະຄວາມຄິດຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບ ສະພາບການຮຽນ-ການສອນແບບອອນໄລນ໌. ດ້ານບ່ອນທີ່ທ່ານອາໄສຢູ່ ສາມາດເຊື່ອມຕໍ່ອິນເຕີເນັດໄດ້ຢ່າງງ່າຍດາຍ.

| **ບ່ອນທີ່ທ່ານອາໄສຢູ່ ສາມາດເຊື່ອມຕໍ່ອິນເຕີເນັດໄດ້ຢ່າງງ່າຍດາຍ** | **ຄວາມຖີ່** fregency | **ເປີເຊັນ (%)** percentage | **ອັນດັບ** |
|---|---|---|---|
| **ຄວາມຄິດຂອງຄູສອນ** | | | |
| ດີຫຼາຍ | 14 | 20.0 | 3 |
| ດີ | 28 | 40.0 | 1 |
| ປານກາງ | 27 | 38.6 | 2 |
| ພໍໃຊ້ໄດ້ | 1 | 1.4 | 4 |
| **ຄວາມຄິດຂອງນັກສຶກສາ** | | | |
| ດີຫຼາຍ | 34 | 14.8 | 3 |
| ດີ | 93 | 40.4 | 1 |

| | | | |
|---|---|---|---|
| ປານກາງ | 71 | 30.9 | 2 |
| ພໍໃຊ້ໄດ້ | 32 | 13.9 | 4 |

ຈາກຕາຕະລາງທີ 27: ແມ່ນສະແດງຜົນການວິເຄາະຂໍ້ມູນ ບ່ອນທີ່ທ່ານອາໄສຢູ່ ສາມາດເຊື່ອມຕໍ່ອິນເຕີເນັດໄດ້ຢ່າງງ່າຍດາຍ ຂອງຄູສອນ ແລະ ນັກສຶກສາ ຫຼາຍທີ່ສຸດ ພົບວ່າ: ກຸ່ມຕົວຢ່າງທີ່ເປັນຄູສອນ ກວມເອົາຫຼາຍທີ່ສຸດແມ່ນລະດັບດີ ກວມຈຳນວນຄົນຈຳນວນ 28 ຄົນ, ຄິດເປັນເປີເຊັນເທົ່າ 40.0 %, ທັດລົງມາແມ່ນລະດັບ ປານກາງ ຈຳນວນ 27 ຄົນ, ຄິດເປັນເປີເຊັນເທົ່າ 38.6 %, ລະດັບ ດີຫຼາຍ ຈຳນວນ 14 ຄົນ, ຄິດເປັນເປີເຊັນເທົ່າ 20.0 % ແລະໃນລະດັບ ພໍໃຊ້ ຈຳນວນ 1 ຄົນ, ຄິດເປັນເປີເຊັນເທົ່າ 1.4 % ແລະ ຄວາມຄິດເຫັນຂອງນັກສຶກສາ ຫຼາຍທີ່ສຸດແມ່ນໃນລະດັບ ດີ ກວມຈຳນວນຄົນຈຳນວນ 93 ຄົນ, ຄິດເປັນເປີເຊັນເທົ່າ 40.4 %, ທັດລົງມາແມ່ນລະດັບ ປານກາງ ຈຳນວນ 71 ຄົນ, ຄິດເປັນເປີເຊັນເທົ່າ 30.9 %, ລະດັບ ດີຫຼາຍ ຈຳນວນ 34 ຄົນ, ຄິດເປັນເປີເຊັນເທົ່າ 14.8 % ແລະໃນລະດັບ ພໍໃຊ້ ຈຳນວນ 32 ຄົນ, ຄິດເປັນເປີເຊັນເທົ່າ 13.9 %.

ຈາກຜົນການວິເຄາະຂ້າງເທິງ ສາມາດສະຫຼຸບໄດ້ວ່າ: ພະນັກງານຄູອາຈານ ແລະ ນັກສຶກສາຕໍ່ກັບດ້ານບ່ອນທີ່ທ່ານອາໄສຢູ່ ສາມາດເຊື່ອມຕໍ່ອິນເຕີເນັດໄດ້ຢ່າງງ່າຍດາຍ ແມ່ນ ຄ້າຍຄືກັນ, ກວມເອົາເປີເຊັນຫຼາຍທີ່ສຸດແມ່ນ ລະດັບດີ ຂອງນັກສຶກສາ ຫຼາຍກວ່າ ສອນຄູ ຈຳນວນ 4 %.

ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:



**4.3 ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌.**

ຕາຕະລາງທີ 28: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ດ້ານຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ.

| ລ/ດ | ຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ. | $\bar{X}$ Mean | S.D Standard Deviation | ແປຜົນ |
|---|---|---|---|---|
| **ຄວາມເພິ່ງພໍໃຈ ຂອງຄູສອນ** | | | | |
| 1 | ຄູສອນ ສາມາດຮຽນຮູ້ ແລະ ເຂົ້າເຖິງແຫຼ່ງຂໍ້ມູນທາງອິນເຕີເນັດຫຼາຍຂື້ນ. | 2.77 | .516 | ພໍໃຈປານກາງ |
| 2 | ຄູສອນ ສາມາດສ້າງທັກສະທີ່ດີໃນການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ. | 3.30 | .598 | ພໍໃຈປານກາງ |
| 3 | ຄູສອນ ສາມາດສ້າງຄວາມຮູ້ດ້ານການໃຊ້ສື່ການຮຽນ-ການສອນອອນໄລນ໌. | 3.31 | .649 | ພໍໃຈປານກາງ |
| 4 | ຄູສອນ ສາມາດຮຽນຮູ້ເຕັກນິກໃນການຈັດການຮຽນ-ການສອນແບບອອນໄລນ໌. | 3.49 | .558 | ພໍໃຈປານກາງ |
| ສະເລ່ຍລວມ | | 3.21 | .282 | ພໍໃຈປານກາງ |
| **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | | |
| 1 | ນັກສຶກສາ ສາມາດຮຽນຮູ້ ແລະ ເຂົ້າເຖິງແຫຼ່ງຂໍ້ມູນທາງອິນເຕີເນັດຫຼາຍຂື້ນ. | 2.80 | .404 | ພໍໃຈປານກາງ |
| 2 | ນັກສຶກສາ ສາມາດສ້າງທັກສະທີ່ດີໃນການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ. | 3.13 | .346 | ພໍໃຈປານກາງ |
| 3 | ນັກສຶກສາ ສາມາດສ້າງຄວາມຮູ້ດ້ານການໃຊ້ສື່ການຮຽນ-ການສອນອອນໄລນ໌. | 2.96 | .456 | ພໍໃຈປານກາງ |
| 4 | ນັກສຶກສາ ສາມາດຮຽນຮູ້ເຕັກນິກໃນການຈັດການຮຽນ-ການສອນແບບອອນໄລນ໌. | 3.14 | .359 | ພໍໃຈປານກາງ |
| ຄ່າສະເລ່ຍລວມ | | 3.00 | .173 | ພໍໃຈປານກາງ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ28: ພົບວ່າຄ່າສະເລ່ຍລວມຂອງຄູສອນ ດ້ານຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ. ມີຄ່າສະເລ່ຍລວມ ( $\bar{X}$ ) ເທົ່າກັບ 3.21 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0. 282. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ( $\bar{X}$ ) ເທົ່າກັບ 3.00 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0.173. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 29: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ດ້ານ**ຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູສອນ ຕໍ່ກັບຮູບແບບອອນໄລນ.**

| ລ/ດ | ຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູສອນ ຕໍ່ກັບຮູບແບບອອນໄລນ. | $\bar{X}$ Mean | S.D Standard Deviation | ແປຜົນ |
|---|---|---|---|---|
| | **ຄວາມເພິ່ງພໍໃຈ ຂອງຄູສອນ** | | | |
| 1 | ມີຄວາມຮັກ ແລະ ສົນໃຈໃນຮູບແບບອອນໄລນ໌. | 3.19 | .519 | ພໍໃຈປານກາງ |
| 2 | ມີຄວາມຕື່ນເຕັ້ນ ແລະ ມ່ວນຊື່ນໃນຮູບແບບອອນໄລນ໌. | 3.39 | .546 | ພໍໃຈປານກາງ |
| 3 | ສາມາດພັດທະນາທັກສະການຮຽນຮູ້ດ້ວຍຕົນເອງຫຼາຍຂຶ້ນ. | 3.37 | .487 | ພໍໃຈປານກາງ |
| 4 | ສ້າງປະສົບການໃໝ່ໃນການຮຽນຮູ້ດ້ວຍການນຳໃຊ້ເຕັກໂນໂລຊີ. | 3.44 | .581 | ພໍໃຈປານກາງ |
| 5 | ມີຄວາມເຂົ້າໃຈບົດຮຽນໄດ້ດີ ໃນຮູບແບບອອນໄລນ. | 3.30 | .598 | ພໍໃຈປານກາງ |
| | ສະເລ່ຍລວມ | 3.33 | .384 | ພໍໃຈປານກາງ |
| | **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | |
| 1 | ມີຄວາມຮັກ ແລະ ສົນໃຈໃນຮູບແບບອອນໄລນ໌. | 3.03 | .520 | ພໍໃຈປານກາງ |
| 2 | ມີຄວາມຕື່ນເຕັ້ນ ແລະ ມ່ວນຊື່ນໃນຮູບແບບອອນໄລນ໌. | 3.13 | .333 | ພໍໃຈປານ |

| | | | | ກາງ |
|---|---|---|---|---|
| 3 | ສາມາດພັດທະນາທັກສະການຮຽນຮູ້ດ້ວຍຕົນເອງຫຼາຍຂຶ້ນ. | 3.15 | .356 | ພໍໃຈປານກາງ |
| 4 | ສ້າງປະສົບການໃໝ່ໃນການຮຽນຮູ້ດ້ວຍການນໍາໃຊ້ເຕັກໂນໂລຊີ. | 3.21 | .529 | ພໍໃຈປານກາງ |
| 5 | ມີຄວາມເຂົ້າໃຈບົດຮຽນໄດ້ດີ ໃນຮູບແບບອອນໄລນ. | 3.08 | .276 | ພໍໃຈປານກາງ |
| ສະເລ່ຍລວມ | | 3.11 | .308 | ພໍໃຈປານກາງ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ28: ພົບວ່າສະເລ່ຍລວມຂອງຄູສອນ ດ້ານຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູສອນ ຕໍ່ກັບຮູບແບບອອນໄລນ໌. ມີຄ່າສະເລ່ຍລວມ( $\bar{X}$ ) ເທົ່າກັບ 3.33 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0. 384. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ ( $\bar{X}$ ) ເທົ່າກັບ 3.11 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0.308. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 30: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ດ້ານ**ຄວາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບອອນໄລນ໌.**

| ລ/ດ | ຄວາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບອອນໄລນ໌. | $\bar{X}$ Mean | S.D Standard Deviation | ແປຜົນ |
|---|---|---|---|---|
| **ຄວາມເພິ່ງພໍໃຈ ຂອງຄູສອນ** | | | | |
| 1 | ຄູສອນ ມີທັກສະການສອນໃນຮູບແບບອອນໄລນ໌. | 3.04 | .523 | ພໍໃຈປານກາງ |

| | | | | |
|---|---|---|---|---|
| 2 | ຄູສອນ ມີຄວາມກະຕືລືລົ້ນໃນການສອນໃນຮູບແບບອອນໄລນ໌. | 3.17 | .416 | ພໍໃຈປານກາງ |
| 3 | ຄູສອນ ກະກຽມບົດສອນໄດ້ດີ ແລະ ເໝາະສົມ. | 3.16 | .367 | ພໍໃຈປານກາງ |
| 4 | ຄູສອນ ອະທິບາຍບົດຮຽນເຂົ້າໃຈງ່າຍໃນຮູບແບບອອນໄລນ໌. | 3.23 | .516 | ພໍໃຈປານກາງ |
| 5 | ຄູສອນ ນໍາໃຊ້ເຕັກໂນໂລຊີເໝາະສົມແບບອອນໄລນ໌. | 3.09 | .371 | ພໍໃຈປານກາງ |
| 6 | ຄູສອນ ນໍາໃຊ້ກິດຈະກໍາທີ່ຫຼາກຫຼາຍ ໃນການສົ່ງເສີມການຮຽນຮູ້. | 3.21 | .611 | ພໍໃຈປານກາງ |
| 7 | ຄູສອນ ອອກແບບກິດຈະກໍາສົ່ງເສີມໃຫ້ມີການພົວພັນຮ່ວມມືຢ່າງເໝາະສົມ. | 3.20 | .403 | ພໍໃຈປານກາງ |
| 8 | ຄູສອນ ອະທິບາຍວິທີການນໍາໃຊ້ເຕັກໂນໂລຊີລະອຽດແກ່ນັກສຶກສາ. | 3.20 | .499 | ພໍໃຈປານກາງ |
| 9 | ຄູສອນ ໃຫ້ຄໍາແນະນໍາຈະແຈ້ງ ແລະ ຊ່ວຍເຫຼືອຢ່າງເໝາະສົມ. | 3.19 | .427 | ພໍໃຈປານກາງ |
| 10 | ຄູສອນ ສາມາດພັດທະນາວິທີການສິດສອນທີ່ເປັນນະວັດຕະກໍາໃໝ່. | 3.47 | .675 | ພໍໃຈປານກາງ |
| 11 | ຄູສອນ ສາມາດກະຕຸ້ນນັກສຶກສາມີສ່ວນຮ່ວມໃນຮູບແບບອອນໄລນ໌. | 3.37 | .487 | ພໍໃຈປານກາງ |
| ສະເລ່ຍລວມ | | 3.21 | .244 | ພໍໃຈປານກາງ |
| **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | | |
| 1 | ຄູສອນ ມີທັກສະການສອນໃນຮູບແບບອອນໄລນ໌. | 3.02 | .516 | ພໍໃຈປານກາງ |
| 2 | ຄູສອນ ມີຄວາມກະຕືລືລົ້ນໃນການສອນໃນຮູບແບບອອນໄລນ໌. | 3.27 | .442 | ພໍໃຈປານກາງ |
| 3 | ຄູສອນ ກະກຽມບົດສອນໄດ້ດີ ແລະ ເໝາະສົມ. | 3.14 | .364 | ພໍໃຈປານກາງ |
| 4 | ຄູສອນ ອະທິບາຍບົດຮຽນເຂົ້າໃຈງ່າຍໃນຮູບແບບອອນໄລນ໌. | 3.32 | .468 | ພໍໃຈປານກາງ |
| 5 | ຄູສອນ ນໍາໃຊ້ເຕັກໂນໂລຊີເໝາະສົມແບບອອນໄລນ໌. | 3.01 | .503 | ພໍໃຈປານກາງ |
| 6 | ຄູສອນ ນໍາໃຊ້ກິດຈະກໍາທີ່ຫຼາກຫຼາຍ ໃນການສົ່ງເສີມການຮຽນຮູ້. | 2.91 | .499 | ພໍໃຈປານກາງ |
| 7 | ຄູສອນ ອອກແບບກິດຈະກໍາສົ່ງເສີມໃຫ້ມີການພົວພັນຮ່ວມມື | 3.14 | .351 | ພໍໃຈປານ |

| | | | | |
|---|---|---|---|---|
| | ຢ່າງເໝາະສົມ. | | | ກາງ |
| 8 | ຄູສອນ ອະທິບາຍວິທີການນຳໃຊ້ເຕັກໂນໂລຊີລະອຽດແກ່ນັກສຶກສາ. | 3.09 | .562 | ພໍໃຈປານກາງ |
| 9 | ຄູສອນ ໃຫ້ຄຳແນະນຳຈະແຈ້ງ ແລະ ຊ່ວຍເຫຼືອຢ່າງເໝາະສົມ. | 3.02 | .146 | ພໍໃຈປານກາງ |
| 10 | ຄູສອນ ສາມາດພັດທະນາວິທີການສິດສອນທີ່ເປັນນະວັດຕະກຳໃໝ່. | 3.31 | .463 | ພໍໃຈປານກາງ |
| 11 | ຄູສອນ ສາມາດກະຕຸ້ນນັກສຶກສາມີສ່ວນຮ່ວມໃນຮູບແບບອອນໄລນ໌. | 3.15 | .368 | ພໍໃຈປານກາງ |
| ສະເລ່ຍລວມ | | 3.12 | .259 | ພໍໃຈປານກາງ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ29: ພົບວ່າສະເລ່ຍລວມຂອງຄູສອນ ດ້ານ**ຄວາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບອອນໄລນ໌** ມີຄ່າສະເລ່ຍລວມ ( $\bar{X}$ ) ເທົ່າກັບ 3.02 ແລະ ຄ່າສ່ວນບ່ຽງເບນມາດຕະຖານ ($S.D$) ເທົ່າກັບ 0.516. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ ( $\bar{X}$ ) ເທົ່າກັບ 3.12 ແລະ ຄ່າສ່ວນບ່ຽງເບນມາດຕະຖານ ($S.D$) ເທົ່າກັບ 0.259. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 31: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນຮູບແບບອອນໄລນ໌ ດ້ານຄວາມເພິ່ງພໍໃຈຕໍ່ສິ່ງອຳນວຍຄວາມສະດວກ ໃນຮູບແບບອອນໄລນ໌.

| ລ/ດ | ຄວາມເພິ່ງພໍໃຈຕໍ່ສິ່ງອຳນວຍຄວາມສະດວກ ໃນຮູບແບບອອນໄລນ໌. | $\bar{X}$ Mean | S.D Standard Deviation | ແປຜົນ |
|---|---|---|---|---|
| **ຄວາມເພິ່ງພໍໃຈ ຂອງຄູສອນ** | | | | |
| 1 | ສາມາດຕອບສະໜອງການອຸປະກອນການຮຽນ-ການສອນເໝາະສົມ ແລະ ພຽງພໍ. | 3.26 | .502 | ພໍໃຈປານກາງ |
| 2 | ສົ່ງເສີມ ແລະ ຕອບສະໜອງການເຂົ້າເຖິງອິນເຕີເນັດ. | 3.19 | .708 | ພໍໃຈປານກາງ |
| 3 | ມີຂໍ້ແນະນຳໃນການຈັດຕັ້ງການຮຽນ-ການສອນທີ່ເໝາະສົມ. | 3.49 | .583 | ພໍໃຈປານກາງ |
| 4 | ມີການຊ່ວຍເຫຼືອນັກສຶກສາໃຫ້ເຂົ້າເຖິງຫ້ອງຮຽນໃນຮູບແບບອອນໄລນ໌. | 3.37 | .569 | ພໍໃຈປານກາງ |
| 5 | ສົ່ງເສີມໃຫ້ມີການອອກແບບກິດຈະກຳຢ່າງເໝາະສົມໃນຮູບແບບອອນໄລນ໌. | 3.61 | .490 | ພໍໃຈຫຼາຍ |
| ສະເລ່ຍລວມ | | 3.38 | .356 | ພໍໃຈປານກາງ |
| **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | | |
| 1 | ສາມາດຕອບສະໜອງການອຸປະກອນການຮຽນ-ການສອນເໝາະສົມ ແລະ ພຽງພໍ. | 3.25 | .558 | ພໍໃຈປານກາງ |
| 2 | ສົ່ງເສີມ ແລະ ຕອບສະໜອງການເຂົ້າເຖິງອິນເຕີເນັດ. | 3.25 | .659 | ພໍໃຈປານກາງ |
| 3 | ມີຂໍ້ແນະນຳໃນການຈັດຕັ້ງການຮຽນ-ການສອນທີ່ເໝາະສົມ. | 3.43 | .505 | ພໍໃຈປານກາງ |
| 4 | ມີການຊ່ວຍເຫຼືອນັກສຶກສາໃຫ້ເຂົ້າເຖິງຫ້ອງຮຽນໃນຮູບແບບອອນໄລນ໌. | 3.43 | .514 | ພໍໃຈປານກາງ |
| 5 | ສົ່ງເສີມໃຫ້ມີການອອກແບບກິດຈະກຳຢ່າງເໝາະສົມໃນຮູບແບບອອນໄລນ໌. | 3.67 | .488 | ພໍໃຈຫຼາຍ |
| ສະເລ່ຍລວມ | | 3.40 | .440 | ພໍໃຈປານກາງ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ30: ພົບວ່າສະເລ່ຍລວມຂອງຄູສອນ ດ້ານ**ຄວາມເພິ່ງພໍໃຈຕໍ່ສິ່ງອຳນວຍຄວາມສະດວກ ໃນຮູບແບບອອນໄລນ໌** ມີຄ່າສະເລ່ຍລວມ ( $\bar{X}$ ) ເທົ່າກັບ 3.38 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0.356. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ ( $\bar{X}$ ) ເທົ່າກັບ 3.40 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0.440. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




**4.4 ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນໃນຮູບແບບເຊິ່ງໜ້າ**

ຕາຕະລາງທີ 32: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນໃນຮູບແບບເຊິ່ງໜ້າ ດ້ານຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ໃນຮູບແບບເຊິ່ງໜ້າ.

| ລ/ດ | ຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ໃນຮູບແບບເຊິ່ງໜ້າ | $\bar{X}$ Mean | S.D Standard Deviation | ແປຜົນ |
|---|---|---|---|---|
| **ຄວາມເພິ່ງພໍໃຈ ຂອງຄູສອນ** | | | | |
| 1 | ສາມາດຮຽນຮູ້ ແລະ ເຂົ້າເຖິງແຫ່ງຂໍ້ມູນທາງອິນເຕີເນັດຫຼາຍຂຶ້ນ. | 4.21 | .635 | ພໍໃຈຫຼາຍ |
| 2 | ສາມາດສ້າງທັກສະທີ່ດີໃນການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ. | 4.17 | .636 | ພໍໃຈຫຼາຍ |
| 3 | ສາມາດສ້າງຄວາມຮູ້ດ້ານການໃຊ້ສື່ການຮຽນ-ການສອນແບບເຊິ່ງໜ້າ. | 4.16 | .555 | ພໍໃຈຫຼາຍ |
| 4 | ສາມາດຮຽນຮູ້ເຕັກນິກໃນການຈັດການຮຽນ-ການສອນແບບເຊິ່ງໜ້າ. | 3.96 | .600 | ພໍໃຈຫຼາຍ |
| ສະເລ່ຍລວມ | | 4.12 | .524 | ພໍໃຈຫຼາຍ |
| **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | | |
| 1 | ສາມາດຮຽນຮູ້ ແລະ ເຂົ້າເຖິງແຫ່ງຂໍ້ມູນທາງອິນເຕີເນັດຫຼາຍຂຶ້ນ. | 3.65 | .639 | ພໍໃຈຫຼາຍ |

| | | | | |
|---|---|---|---|---|
| 2 | ສາມາດສ້າງທັກສະທີ່ດີໃນການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ. | 3.83 | .634 | ພໍໃຈ ຫຼາຍ |
| 3 | ສາມາດສ້າງຄວາມຮູ້ດ້ານການໃຊ້ສື່ການຮຽນ-ການສອນແບບເຊິ່ງໜ້າ. | 3.70 | .626 | ພໍໃຈ ຫຼາຍ |
| 4 | ສາມາດຮຽນຮູ້ເຕັກນິກໃນການຈັດການຮຽນ-ການສອນແບບເຊິ່ງໜ້າ. | 3.77 | .597 | ພໍໃຈ ຫຼາຍ |
| ສະເລ່ຍລວມ | | 3.73 | .450 | ພໍໃຈ ຫຼາຍ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ31: ພົບວ່າສະເລ່ຍລວມຂອງຄູສອນ ດ້ານ**ຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ໃນຮູບແບບເຊິ່ງໜ້າ**_ມີຄ່າສະເລ່ຍ ( $\bar{X}$ ) ເທົ່າກັບ 4.12 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0.524. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ ( $\bar{X}$ ) ເທົ່າກັບ 3.73 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0.450.




ຕາຕະລາງທີ 33: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນໃນຮູບແບບເຊິ່ງໜ້າ ດ້ານ**ຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູ ຕໍ່ກັບຮູບແບບເຊິ່ງໜ້າ.**

| ລ/ດ | ຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູ ຕໍ່ກັບຮູບແບບເຊິ່ງໜ້າ. | $\bar{X}$ Mean | S.D Standard Deviation | ແປຜົນ |
|---|---|---|---|---|
| **ຄວາມເພິ່ງພໍໃຈ ຂອງຄູສອນ** | | | | |
| 1 | ຄູສອນ ມີຄວາມຮັກ ແລະ ສົນໃຈໃນຮູບແບບເຊິ່ງໜ້າ. | 4.34 | .508 | ພໍໃຈ ຫຼາຍ |

| | | | | |
|---|---|---|---|---|
| 2 | ຄູສອນ ມີຄວາມຕື່ນເຕັ້ນ ແລະ ມ່ວນຊື່ນໃນຮູບແບບເຊິ່ງໜ້າ. | 4.30 | .521 | ພໍໃຈ ຫຼາຍ |
| 3 | ຄູສອນ ສາມາດພັດທະນາທັກສະການຮຽນຮູ້ດ້ວຍຕົນເອງຫຼາຍຂຶ້ນ. | 4.33 | .503 | ພໍໃຈ ຫຼາຍ |
| 4 | ຄູສອນ ສາມາດສ້າງປະສົບການໃໝ່ໃນການຮຽນຮູ້ດ້ວຍການນຳໃຊ້ເຕັກໂນໂລຊີ. | 4.20 | .580 | ພໍໃຈ ຫຼາຍ |
| 5 | ຄູສອນ ມີຄວາມເຂົ້າໃຈບົດຮຽນໄດ້ດີ ໃນຮູບແບບເຊິ່ງໜ້າ. | 4.33 | .473 | ພໍໃຈ ຫຼາຍ |
| ສະເລ່ຍລວມ | | 4.30 | .403 | ພໍໃຈ ຫຼາຍ |
| **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | | |
| 1 | ຄູສອນ ມີຄວາມຮັກ ແລະ ສົນໃຈໃນຮູບແບບເຊິ່ງໜ້າ. | 3.76 | .781 | ພໍໃຈ ຫຼາຍ |
| 2 | ຄູສອນ ມີຄວາມຕື່ນເຕັ້ນ ແລະ ມ່ວນຊື່ນໃນຮູບແບບເຊິ່ງໜ້າ. | 4.11 | .849 | ພໍໃຈ ຫຼາຍ |
| 3 | ຄູສອນ ສາມາດພັດທະນາທັກສະການຮຽນຮູ້ດ້ວຍຕົນເອງຫຼາຍຂຶ້ນ. | 3.94 | .904 | ພໍໃຈ ຫຼາຍ |
| 4 | ຄູສອນ ສາມາດສ້າງປະສົບການໃໝ່ໃນການຮຽນຮູ້ດ້ວຍການນຳໃຊ້ເຕັກໂນໂລຊີ. | 3.93 | .815 | ພໍໃຈ ຫຼາຍ |
| 5 | ຄູສອນ ມີຄວາມເຂົ້າໃຈບົດຮຽນໄດ້ດີ ໃນຮູບແບບເຊິ່ງໜ້າ. | 4.07 | .871 | ພໍໃຈ ຫຼາຍ |
| ສະເລ່ຍລວມ | | 3.96 | .692 | ພໍໃຈ ຫຼາຍ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ33: ພົບວ່າຜົນລວມຂອງຄູສອນທີ່ ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນຮູບແບບເຊິ່ງໜ້າ ດ້ານ**ຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູ ຕໍ່ກັບຮູບແບບເຊິ່ງໜ້າ**_ຕໍ່ກັບຮູບແບບເຊິ່ງໜ້າ ມີຄ່າສະເລ່ຍ ( $\bar{X}$ ) ເທົ່າກັບ 4.30 ແລະ ຄ່າສ່ວນບ່ຽງເບນມາດຕະຖານ ($S.D$) ເທົ່າກັບ 0.403. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ ( $\bar{X}$ ) ເທົ່າກັບ 3.96 ແລະ ຄ່າສ່ວນບ່ຽງເບນມາດຕະຖານ ($S.D$) ເທົ່າກັບ 0. 692. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:




ຕາຕະລາງທີ 34: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນໃນຮູບແບບເຊິ່ງໜ້າ ດ້ານຄາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບເຊິ່ງໜ້າ.

| ລ/ດ | ຄາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບເຊິ່ງໜ້າ. | $\bar{X}$ Mean | S.D Standard Deviation | ແປຜົນ |
|---|---|---|---|---|
| | **ຄວາມເພິ່ງພໍໃຈ ຂອງຄູສອນ** | | | |
| 1 | ຄູສອນມີທັກສະການສອນທີ່ດີໃນຮູບແບບເຊິ່ງໜ້າ. | 4.30 | .548 | ພໍໃຈ ຫຼາຍ |
| 2 | ຄູສອນມີຄວາມກະຕືລືລົ້ນໃນການສອນໃນຮູບແບບເຊິ່ງໜ້າ. | 4.26 | .582 | ພໍໃຈ ຫຼາຍ |
| 3 | ຄູສອນກະກຽມບົດສອນໄດ້ດີ ແລະ ເໝາະສົມໃນຮູບແບບເຊິ່ງໜ້າ. | 4.29 | .542 | ພໍໃຈ ຫຼາຍ |
| 4 | ຄູສອນອະທິບາຍບົດຮຽນເຂົ້າໃຈງ່າຍໃນຮູບແບບເຊິ່ງໜ້າ. | 4.37 | .569 | ພໍໃຈ ຫຼາຍ |
| 5 | ຄູສອນນຳໃຊ້ເຕັກໂນໂລຊີເໝາະສົມໃນຮູບແບບເຊິ່ງໜ້າ. | 4.23 | .543 | ພໍໃຈ ຫຼາຍ |
| 6 | ຄູສອນນຳໃຊ້ກິດຈະກຳທີ່ຫຼາກຫຼາຍ ໃນການສົ່ງເສີມການຮຽນຮູ້. | 4.17 | .538 | ພໍໃຈ ຫຼາຍ |
| 7 | ຄູສອນອອກແບບກິດຈະກຳສົ່ງເສີມໃຫ້ມີການພົວພັນຮ່ວມມືຢ່າງເໝາະສົມ. | 4.21 | .562 | ພໍໃຈ ຫຼາຍ |
| 8 | ຄູສອນອະທິບາຍວິທີການນຳໃຊ້ເຕັກໂນໂລຊີລະອຽດແກ່ນັກສຶກສາຢ່າງ | 4.13 | .536 | ພໍໃຈ |

| | | | | |
|---|---|---|---|---|
| | ຕໍ່ເນື່ອງ. | | | ຫຼາຍ |
| 9 | ຄູສອນໃຫ້ຄຳແນະນຳຈະແຈ້ງ ແລະ ຊ່ວຍເຫຼືອຢ່າງເໝາະສົມ. | 4.21 | .587 | ພໍໃຈ ຫຼາຍ |
| 10 | ຄູສອນສາມາດພັດທະນາວິທີການສິດສອນທີ່ເປັນນະວັດຕະກຳໃໝ່. | 4.16 | .629 | ພໍໃຈ ຫຼາຍ |
| 11 | ຄູສອນສາມາດກະຕຸ້ນນັກສຶກສາມີສ່ວນຮ່ວມໃນຮູບແບບເຊິ່ງໜ້າ. | 3.83 | .742 | ພໍໃຈ ຫຼາຍ |
| ສະເລ່ຍລວມ | | 4.23 | .403 | ພໍໃຈ ຫຼາຍ |
| **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | | |
| 1 | ຄູສອນມີທັກສະການສອນທີ່ດີໃນຮູບແບບເຊິ່ງໜ້າ. | 4.13 | .795 | ພໍໃຈ ຫຼາຍ |
| 2 | ຄູສອນມີຄວາມກະຕືລືລົ້ນໃນການສອນໃນຮູບແບບເຊິ່ງໜ້າ. | 3.92 | .615 | ພໍໃຈ ຫຼາຍ |
| 3 | ຄູສອນກະກຽມບົດສອນໄດ້ດີ ແລະ ເໝາະສົມໃນຮູບແບບເຊິ່ງໜ້າ. | 4.08 | .829 | ພໍໃຈ ຫຼາຍ |
| 4 | ຄູສອນອະທິບາຍບົດຮຽນເຂົ້າໃຈງ່າຍໃນຮູບແບບເຊິ່ງໜ້າ. | 3.95 | .589 | ພໍໃຈ ຫຼາຍ |
| 5 | ຄູສອນນຳໃຊ້ເຕັກໂນໂລຊີເໝາະສົມໃນຮູບແບບເຊິ່ງໜ້າ. | 4.06 | .859 | ພໍໃຈ ຫຼາຍ |
| 6 | ຄູສອນນຳໃຊ້ກິດຈະກຳທີ່ຫຼາກຫຼາຍ ໃນການສົ່ງເສີມການຮຽນຮູ້. | 3.77 | .716 | ພໍໃຈ ຫຼາຍ |
| 7 | ຄູສອນອອກແບບກິດຈະກຳສົ່ງເສີມໃຫ້ມີການພົວພັນຮ່ວມມືຢ່າງເໝາະສົມ. | 4.04 | .829 | ພໍໃຈ ຫຼາຍ |
| 8 | ຄູສອນອະທິບາຍວິທີການນຳໃຊ້ເຕັກໂນໂລຊີລະອຽດແກ່ນັກສຶກສາຢ່າງຕໍ່ເນື່ອງ. | 3.93 | .856 | ພໍໃຈ ຫຼາຍ |
| 9 | ຄູສອນໃຫ້ຄຳແນະນຳຈະແຈ້ງ ແລະ ຊ່ວຍເຫຼືອຢ່າງເໝາະສົມ. | 3.78 | .796 | ພໍໃຈ ຫຼາຍ |
| 10 | ຄູສອນສາມາດພັດທະນາວິທີການສິດສອນທີ່ເປັນນະວັດຕະກຳໃໝ່. | 3.88 | .832 | ພໍໃຈ ຫຼາຍ |
| 11 | ຄູສອນສາມາດກະຕຸ້ນນັກສຶກສາມີສ່ວນຮ່ວມໃນຮູບແບບເຊິ່ງໜ້າ. | 3.63 | .818 | ພໍໃຈ ຫຼາຍ |
| ສະເລ່ຍລວມ | | 3.92 | .590 | ພໍໃຈ ຫຼາຍ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ34: ພົບວ່າສະເລ່ຍລວມຂອງຄູສອນ ດ້ານ**ຄາມເພິ່ງພໍໃຈຕໍ່ກັບຄວາມສາມາດ ຂອງຄູສອນໃນຮູບແບບເຊິ່ງໜ້າ** ມີຄ່າສະເລ່ຍລວມ( $\bar{X}$ ) ເທົ່າກັບ 4.23 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0.403. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ ( $\bar{X}$ ) ເທົ່າກັບ 3.92 ແລະ ຄ່າສ່ວນບ່ຽງເບນມາດຕະຖານ (*S.D*) ເທົ່າກັບ 0. 590.




ຕາຕະລາງທີ 35: ຜົນການວິເຄາະລະດັບຄວາມເພິ່ງພໍໃຈ ຂອງຄູສອນ ແລະ ນັກສຶກສາ ທີ່ວິທະຍາໄລຄູສາລະວັນ ຕໍ່ກັບການຈັດການຮຽນ-ການສອນໃນຮູບແບບເຊິ່ງໜ້າ ດ້ານຄວາມເພິ່ງພໍໃຈຕໍ່ສິ່ງອຳນວຍຄວາມສະດວກ ໃນຮູບແບບເຊິ່ງໜ້າ.

| ລ/ດ | **ຄວາມເພິ່ງພໍໃຈຕໍ່ສິ່ງອຳນວຍຄວາມສະດວກ ໃນຮູບແບບເຊິ່ງໜ້າ.** | $\bar{X}$ Mean | **S.D** Standard Deviation | **ແປຜົນ** |
|---|---|---|---|---|
| | **ຄວາມເພິ່ງພໍໃຈ ຂອງຄູສອນ** | | | |
| 1 | ສາມາດຕອບສະໜອງການອຸປະກອນການຮຽນ-ການສອນເໝາະສົມ ແລະ ພຽງພໍ. | 3.97 | .90 | ພໍໃຈ ຫຼາຍ |
| 2 | ສິ່ງເສີມ ແລະ ຕອບສະໜອງການເຂົ້າເຖິງອິນເຕີເນັດໃນການຮຽນ-ການສອນ. | 3.94 | .53 | ພໍໃຈ ຫຼາຍ |
| 3 | ມີຂໍ້ແນະນຳໃນການຈັດຕັ້ງການຮຽນ-ການສອນທີ່ເໝາະສົມ. | 4.06 | .53 | ພໍໃຈ ຫຼາຍ |
| 4 | ມີການຊ່ວຍເຫຼືອນັກສຶກສາໃຫ້ເຂົ້າມີສ່ວນໃນກິດຈະກຳ ແລະ ມາຮຽນເປັນປົກກະຕິ. | 3.94 | .50 | ພໍໃຈ ຫຼາຍ |
| 5 | ສິ່ງເສີມໃຫ້ມີການອອກແບບກິດຈະກຳທີ່ຫຼາກຫຼາຍ ແລະ ເໝາະສົມ. | 3.84 | .50 | ພໍໃຈ ຫຼາຍ |
| | ສະເລ່ຍລວມ | 3.95 | .43 | ພໍໃຈ |

| | | | | |
|---|---|---|---|---|
| | | | | ຫຼາຍ |
| **ຄວາມເພິ່ງພໍໃຈ ຂອງນັກສຶກສາ** | | | | |
| 1 | ສາມາດຕອບສະໜອງການອຸປະກອນການຮຽນ-ການສອນເໝາະສົມ ແລະ ພຽງພໍ. | 3.76 | .83 | ພໍໃຈ ຫຼາຍ |
| 2 | ສົ່ງເສີມ ແລະ ຕອບສະໜອງການເຂົ້າເຖິງອິນເຕີເນັດໃນການຮຽນ-ການສອນ. | 3.94 | .92 | ພໍໃຈ ຫຼາຍ |
| 3 | ມີຂໍ້ແນະນຳໃນການຈັດຕັ້ງການຮຽນ-ການສອນທີ່ເໝາະສົມ. | 3.81 | .69 | ພໍໃຈ ຫຼາຍ |
| 4 | ມີການຊ່ວຍເຫຼືອນັກສຶກສາໃຫ້ເຂົ້າມີສ່ວນໃນກິດຈະກຳ ແລະ ມາຮຽນເປັນປົກກະຕິ. | 3.84 | .94 | ພໍໃຈ ຫຼາຍ |
| 5 | ສົ່ງເສີມໃຫ້ມີການອອກແບບກິດຈະກຳທີ່ຫຼາກຫຼາຍ ແລະ ເໝາະສົມ. | 3.80 | .90 | ພໍໃຈ ຫຼາຍ |
| ສະເລ່ຍລວມ | | 3.82 | .68 | ພໍໃຈ ຫຼາຍ |

ຜົນການວິເຄາະຂໍ້ມູນຈາກຕາຕະລາງທີ35: ພົບວ່າສະເລ່ຍລວມຂອງຄູສອນ ດ້ານ**ຄວາມເພິ່ງພໍໃຈຕໍ່ສິ່ງອໍານວຍຄວາມສະດວກ ໃນຮູບແບບເຊິ່ງໜ້າ** ຕໍ່ກັບຮູບແບບເຊິ່ງໜ້າ ມີຄ່າສະເລ່ຍ ( $\bar{X}$ ) ເທົ່າກັບ 3.95 ແລະ ຄ່າສ່ວນບ່ຽງເບນມາດຕະຖານ ($S.D$) ເທົ່າກັບ 0.43. ສ່ວນຄ່າສະເລ່ຍລວມຂອງນັກສຶກສາ ( $\bar{X}$ ) ເທົ່າກັບ 3.82 ແລະ ຄ່າສ່ວນບ່ຽງເບນມາດຕະຖານ ($S.D$) ເທົ່າກັບ 0. 68. ຈາກຂໍ້ມູນຂ້າງເທິງສາມາດສະແດງລົງແຜນວາດລຸ່ມນີ້:



# ບົດທີ 5

## ສະຫຼຸບ, ຂໍ້ຈຳກັດໃນການສຶກສາ ແລະ ຂໍ້ແນະນຳ

ການວິໄຈ ໃນຫົວຂໍ້ **ສຶກສາສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ ທີ່ ວິທະຍາໄລຄູສາລະວັນ**, ເປັນການວິໄຈແບບສຳຫຼວດ (Survey research) ເຊິ່ງມີຈຸດປະສົງ: 1) ເພື່ອສຶກສາ ສະພາບການຈັດຕັ້ງການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ວິທະຍາໄລຄູສາລະວັນ, 2). ເພື່ອສຶກສາຄວາມເພິ່ງພໍໃຈຂອງຄູສອນ ແລະ ນັກສຶກສາ ຕໍ່ປະສິດທິຜົນການຮຽນ-ການສອນ ແບບເຊິ່ງໜ້າ ແລະ ແບບອອນໄລນ໌ ຢູ່ທີ່ ວິທະຍາໄລຄູສາລະວັນ, ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ທັງໝົດຈຳນວນ 300 ຄົນ ໃນນັ້ນມີຄູສອນ ຈຳນວນ 70 ຄົນທີ່ມີໜ້າສອນຕົວຈິງ(ເລືອກແບບເຈາະຈົງ Purposive sampling) ແລະ ນັກສຶກສາ ຈຳນວນ 230 ຄົນ ໂດຍການໃຊ້ສູດ TARO YAMANE ໃນການເລືອກກຸ່ມຕົວຢ່າງ ແລະ ການແບ່ງກຸ່ມຕົວຢ່າງສຳລັບນັກສຶກສາແມ່ນແບບແບ່ງຊັດສ່ວນ (Quota random sampling technique), ເຄື່ອງມືສຳລັບການວິໄຈແມ່ນ ແບບສອບຖາມ(Questionnaire ) ເຊິ່ງປະກອບມີ 3 ພາກ: ພາກທີ1: ຂໍ້ມູນສ່ວນຕົວ ປະກອບມີ: ເພດ, ວຸດທິການສຶກສາ , ປະສົບການ. ພາກທີ2: ສຶກສາສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນລາຍ ມີຈຳນວນ 22 ຂໍ້, ເປັນແບບສອບຖາມແບບເລືອກຕອບ ທີ່ມີ3-4 ຕົວເລືອກ, ພາກທີ3: ສຶກສາສະພາບຄວາມເພິ່ງພໍໃຈຂອງຄູ ແລະ ນັກສຶກສາ ຈຳນວນ 86 ຂໍ້, ເປັນແບບສອບຖາມປະເມີນຄ່າ 5 ລະດັບ ( Likert scales). ຜູ້ວິໄຈໄດ້ດຳເນີນການຄົ້ນຄ້ວາ ໃຊ້ເວລາ 1 ພາກຮຽນ ເລີ່ມແຕ່ເດືອນທີ 1/2021 ຫາ ເດືອນທີ 9/2021, ຊຶ່ງລາຍລະອຽດສາມາດສະຫຼຸບໄດ້ດັ່ງນີ້:

**5.1 ສະຫຼຸບຜົນການຄົ້ນຄ້ວາ**

1. ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ມີຄື:

**ສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ** 1) ພະນັກງານຄູ ອາຈານທັງໝົດທີ່ສະແດງຄວາມຄິດເຫັນຕໍ່ດ້ານການປະຕິບັດຫຼັກສູດແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາເປັນສ່ວນຫຼາຍ ກວມເອົາ 100 % , ສ່ວນນັກສຶກສາ ກວມເອົາ 82,6 %. 2) ພະນັກງານຄູສອນສະແດງຄວາມຄິດເຫັນຕໍ່ກັບຊົ່ວໂມງຮຽນໃນການຈັດການຮຽນ-ການສອນ ທັງຄູສອນ ແລະ ນັກສຶກສາ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນໃນລະດັບ ປານກາງກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 45,7 % ແລະ ນັກສຶກສາກວມເອົາ 52,2 %. 3) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ວິທະຍາໄລຄູສາລະວັນຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານທາງໂຮງຮຽນໄດ້ຈັດຊົ່ວໂມງສອນບຳລຸງພິເສດ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກສຶກສາ ເຫັນວ່າມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນບໍ່ໄດ້ປະຕິບັດເລີຍ ກວມຈຳນວນຄົນຫຼາຍທີ່ສຸດ 54.3 % ແຕ່ນັກສຶກສາ ພັດສະແດງຄວາມຄິດເຫັນ ໃນການປະຕິບັດໄດ້ເລັກໜ້ອຍ ກວມຈຳນວນຄົນຫຼາຍທີ່ສຸດ 40.4 % . 4) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ດ້ານການຮຽນ-ການສອນເນັ້ນປະຕິບັດຕົວຈິງ ເຫັນວ່າມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື: ຄູສອນໃຫ້ຄວາມຄິດເຫັນ ເນັ້ນຫຼາຍກວມຈຳນວນຄົນຫຼາຍທີ່ສຸດ 54.3 %, ແຕ່ນັກສຶກສາພັດ ເນັ້ນປານກາງ ກວມຈຳນວນຄົນຫຼາຍທີ່ສຸດ 40.9 %. 5) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບດ້ານການຮຽນ-ການສອນໄດ້ມີການເຄື່ອນໄຫວກິດຈະກຳນອກຫຼັກສູດ

ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ຄູກວມເອົາ 60 % ແລະ ນັກສຶກສາ ກວມເອົາ 40.9 %. 6) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາກັບດ້ານການຕອບສະໜອງຫໍພັກ, ຕຶກອາຄານ ແລະ ຫ້ອງຮຽນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບໃນນັ້ນລະດັບ ມີພຽງພໍ ກວມຈຳນວນຄົນຫຼາຍທີ່ສຸດ 51.4 % ແລະ ນັກສຶກສາ ກວມຈານວນຄົນຫຼາຍທີ່ສຸດ 50.4 %. 7) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບດ້ານການຕອບສະໜອງຫໍສະໝຸດ, ຫ້ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີພຽງພໍ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ 68.6 % ແລະ ນັກສຶກສາ ກວມເອົາ 62.6 %. 8) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບດ້ານການສົ່ງເສີມນັກສຶກສານຳໃຫ້ໃຊ້ຫໍສະໝຸດ ຫຼື ຫ້ອງທົດລອງຕິດພັນກັບການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນມີຫຼາຍ ກວມຈຳນວນຄົນຫຼາຍທີ່ສຸດ 35.7 %, ແຕ່ນັກສຶກສາພັດ ໃນລະດັບ ມີພໍພຽງ ກວມຈຳນວນຄົນຫຼາຍທີ່ສຸດ 67.4 %. 9) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການນຳໃຊ້ ແລະ ສົ່ງເສີມໃຫ້ການຮຽນຮູ້ໂດຍການນຳໃຊ້ເຕັກໂນໂລຊີເຂົ້າໃນການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນ ມີພຽງພໍ ແລະ ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ລະດັບລະ 42.9 % ແຕ່ ນັກສຶກສາພັດສະແດງຄວາມຄິດເຫັນ ມີພຽງພໍ ກວມຈຳນວນຄົນຫຼາຍທີ່ສຸດ 43 %. 10) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການນຳໃຊ້ກິດຈະກຳ ແລະ ສື່ການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ປານກາງ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ 50 % ແລະ ນັກສຶກສາ ກວມເອົາ 46.5 %. 11) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານຄຸນນະພາບກິດຈະກຳ ແລະ ສື່ການຮຽນ-ການສອນ ແມ່ນມີຄວາມແຕກຕ່າງກັນໃນຫຼາຍລະດັບຄື ຄູສອນໃຫ້ຄວາມຄິດເຫັນ ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ 50 %, ແຕ່ ນັກສຶກສາ ພັດສະແດງຄວາມຄິດເຫັນ ດີຫຼາຍ ແລະ ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ລະດັບລະ 46.1 %. 12) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການຈັດສັນ ແລະ ສ້າງສະພາບແວດລ້ອມສົ່ງເສີມການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ເໝາະສົມປານກາງກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 65.7 % ແລະ ນັກສຶກສາ ກວມເອົາ 41.7 %. 13) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການມີສ່ວນຮ່ວມກັບຊຸມຊົນເພື່ອສ້າງການມີສ່ວນຮ່ວມການປະຕິບັດຫຼັກສູດການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີປານກາງ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ 80 % ແລະ ນັກສຶກສາ ກວມເອົາ 67 %.

**ສະພາບການຈັດການຮຽນ-ການສອນແບບອອນໄລນ໌ມີຄື:** 1) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານ ໄດ້ມີການແນະນຳຫຼືຝຶກອົບຮົມຂີດຄວາມສາມາດນຳໃຊ້ເຕັກໂນໂລຊີ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ປະຕິບັດປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 70 % ແລະ ນັກສຶກສາ ກວມເອົາ 60 %. 2) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານ ປະສົບການກ່ຽວກັບລະບຽບໃນການຈັດການຮຽນ-ການສອນແບບອອນໄລນ໌ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ຮູ້ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 60 % ແລະ ນັກສຶກສາ ກວມເອົາ 65.2 %. 3) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານ ຄວາມຖີ່ໃນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ບາງຄັ້ງ ກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 50 % ແລະ ນັກສຶກສາ ກວມເອົາ 58.7 %. 4) ຄວາມຄິດເຫັນຂອງຄູສອນ ແລະ

ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ ດ້ານ ການນໍາໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການຮຽນ-ການສອນແແບບອອນໄລນ໌ຫຼາຍທີ່ສຸດ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນ ໃຊ້ຄອມພິວເຕີແບບພົກພາ ກວມຈໍານວນຄົນຫຼາຍທີ່ສຸດ 71.4 % ແຕ່ນັກສຶກສາພັດ ໃຊ້ໂທລະສັບ ກວມຈໍານວນຄົນຫຼາຍທີ່ສຸດ 47.8 %. 5) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານ ການນໍາໃຊ້ເຄື່ອງມືເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ ສ່ວນຫຼາຍແຕກຕ່າງກັນໃນຫຼາຍລະດັບຄື ທັງຄູສອນ ແລະ ນັກສຶກສາ ແມ່ນນໍາໃຊ້ຊູມ (Zoom) ກວມຈໍານວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 48.6 % ແລະ ນັກສຶກສາກວມເອົາ 36.5 %. 6) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ ດ້ານປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມຄິດເຫັນ ແຕກຕ່າງກັນໃນຫຼາຍລະດັບຄື ທັງຄູສອນ ແລະ ນັກສຶກສາໃຊ້ຂໍ້ມູນມືຖື (Mobile Data) ກວມເອົາຈໍານວນຄົນຫຼາຍທີ່ສຸດ, ຄູສອນກວມເອົາ 50 % ແລະ ນັກສຶກສາກວມເອົາ 84.3 %. 7) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ແພງ ຄູສອນກວມຈໍານວນຄົນຫຼາຍທີ່ສຸດ 44.3 %, ແຕ່ນັກສຶກສາພັດ ແພງຫຼາຍກວມຈໍານວນຄົນຫຼາຍທີ່ສຸດ 34.8 %. 8) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານທ່ານມີຄວາມຊໍານານໃນການຈັດການຮຽນ-ການສອນແບບແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ດີ ກວມຈໍານວນຄົນຫຼາຍທີ່ສຸດ, ຄູສອນກວມເອົາ 50 %, ແລະ ນັກສຶກສາ ກວມເອົາ 31.7 %. 9) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ ດ້ານບ່ອນທີ່ທ່ານອາໄສຢູ່ ສາມາດເຊື່ອມຕໍ່ອິນເຕີເນັດໄດ້ຢ່າງງ່າຍດາຍ ສ່ວນຫຼາຍມີຄວາມຄິດເຫັນແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ດີ ກວມເອົາຈໍານວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 40 % ແລະ ນັກສຶກສາກວມເອົາ 40.4 %.

**2. ຄູສອນ ແລະ ນັກສຶກສາ ມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ມີຄື:**

**ຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນ ແບບອອນໄລນ໌**: 1) ຄູສອນ ແລະ ນັກສຶກສາ ດ້ານຄວາມເພິ່ງພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ໃນນັ້ນຄູສອນມີຄ່າສະເລ່ຍລວມ 3.21 ແລະ ນັກສຶກສາ 3. 2) ດ້ານຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູສອນ ຕໍ່ກັບຮູບແບບອອນໄລນ໌ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ຄູສອນມີຄ່າສະເລ່ຍລວມ 3.33 ແລະ ນັກສຶກສາ 3.11. 3) ດ້ານຄວາມພໍໃຈຕໍ່ກັບຄວາມສາມາດຂອງຄູສອນໃນຮູບແບບອອນໄລນ໌ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ຄູສອນມີຄ່າສະເລ່ຍລວມ 3.21 ແລະ ນັກສຶກສາ 3.12. 4) ດ້ານຄວາມພໍໃຈຕໍ່ສິ່ງອານວຍຄວາມສະດວກໃນຮູບແບບອອນໄລນ໌ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ຄູສອນມີຄ່າສະເລ່ຍລວມ 3.38 ແລະ ນັກສຶກສາ 3.40.

**ຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນ**ແບບເຊິ່ງໜ້າ 1) ດ້ານຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບຫຼາຍ ຄູສອນມີຄ່າສະເລ່ຍລວມ 4.12 ແລະ ນັກສຶກສາ 3.99. 2) ຄູສອນ ແລະ ນັກສຶກສາ ດ້ານຄວາມພໍໃຈໃນເຫດຜົນສ່ວນຕົວຂອງຄູສອນໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບຫຼາຍ ຄູສອນມີຄ່າສະເລ່ຍລວມ 4.30 ແລະ ນັກສຶກ

ສາ 3.96. 3) ດ້ານຄວາມພໍໃຈຕໍ່ກັບຄວາມສາມາດຂອງຄູສອນໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບ ຫຼາຍ ຄູສອນມີຄ່າສະເລ່ຍລວມ 4.23 ແລະ ນັກສຶກສາກວມເອົາ 3.92. 4) ດ້ານຄວາມພໍໃຈຕໍ່ສິ່ງອຳນວຍຄວາມສະດວກໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບ ພໍໃຈຫຼາຍ ຄູສອນມີຄ່າສະເລ່ຍລວມ 3.95 ແລະ ນັກສຶກສາກວມເອົາ 3.82.

## 5.2 ຂໍ້ຈຳກັດໃນການຄົ້ນຄ້ວາ

1. ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ມີຄື:

**ສະພາບການຈັດການຮຽນ-ການສອນແບບເຊິ່ງໜ້າ** 1) ພະນັກງານຄູ ອາຈານທັງໝົດທີ່ສະແດງຄວາມຄິດເຫັນຕໍ່ດ້ານການປະຕິບັດຫຼັກສູດແມ່ນເນັ້ນໃສ່ 5 ຫຼັກມູນການສຶກສາເປັນສ່ວນຫຼາຍ ກວມເອົາ 100 % , ສ່ວນນັກສຶກສາ ກວມເອົາ 82,6 %. 2) ພະນັກງານຄູສອນສະແດງຄວາມຄິດເຫັນຕໍ່ກັບຊົ່ວໂມງຮຽນໃນການຈັດການຮຽນ-ການສອນ ທັງຄູສອນ ແລະ ນັກສຶກສາ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນໃນລະດັບ ປານກາງກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 45,7 % ແລະ ນັກສຶກສາກວມເອົາ 52,2 %. 3) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ວິທະຍາໄລຄູສາລະວັນຕໍ່ກັບ ສະພາບການຮຽນ-ການສອນແບບເຊິ່ງໜ້າ ດ້ານທາງໂຮງຮຽນໄດ້ຈັດຊົ່ວໂມງສອນບຳລຸງພິເສດ ເພື່ອສົ່ງເສີມຄວາມຮູ້ໃຫ້ແກ່ນັກສຶກສາ ເຫັນວ່າມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນບໍ່ໄດ້ປະຕິບັດເລີຍ ກວມຈຳນວນຄົນຫຼາຍທີ່ສຸດ 54.3 % ແຕ່ນັກສຶກສາ ພັດສະແດງຄວາມຄິດເຫັນ ໃນການປະຕິບັດໄດ້ເລັກໜ້ອຍ ກວມຈຳນວນຄົນຫຼາຍທີ່ສຸດ 40.4 % . 4) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ດ້ານການຮຽນ-ການສອນເນັ້ນປະຕິບັດຕົວຈິງ ເຫັນວ່າມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື: ຄູສອນໃຫ້ຄວາມຄິດເຫັນ ເນັ້ນຫຼາຍ ກວມຈຳນວນຄົນຫຼາຍທີ່ສຸດ 54.3 %, ແຕ່ນັກສຶກສາພັດ ເນັ້ນປານກາງ ກວມຈຳນວນຄົນຫຼາຍທີ່ສຸດ 40.9 %. 5) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບດ້ານການຮຽນ-ການສອນໄດ້ມີການເຄື່ອນໄຫວກິດຈະກຳນອກຫຼັກສູດສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ຄູກວມເອົາ 60 % ແລະ ນັກສຶກສາ ກວມເອົາ 40.9 %. 6) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາກັບດ້ານການຕອບສະໜອງຫໍພັກ, ຕຶກອາຄານ ແລະ ຫ້ອງຮຽນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບໃນນັ້ນລະດັບ ມີພຽງພໍ ກວມຈຳນວນຄົນຫຼາຍທີ່ສຸດ 51.4 % ແລະ ນັກສຶກສາ ກວມຈານວນຄົນຫຼາຍທີ່ສຸດ 50.4 %. 7) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບດ້ານການຕອບສະໜອງຫໍສະໝຸດ, ຫ້ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີພຽງພໍ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ 68.6 % ແລະ ນັກສຶກສາ ກວມເອົາ 62.6 %. 8) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາຕໍ່ກັບດ້ານການສົ່ງເສີມນັກສຶກສານຳໃຊ້ໃຊ້ຫໍສະໝຸດ ຫຼື ຫ້ອງທົດລອງຕິດພັນກັບການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນມີຫຼາຍ ກວມຈຳນວນຄົນຫຼາຍທີ່ສຸດ 35.7 %, ແຕ່ນັກສຶກສາພັດ ໃນລະດັບ ມີພໍພຽງ ກວມຈຳນວນຄົນຫຼາຍທີ່ສຸດ 67.4 %. 9) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການນຳໃຊ້ ແລະ ສົ່ງເສີມໃຫ້ການຮຽນຮູ້ໂດຍການນຳໃຊ້ເຕັກໂນໂລຊີເຂົ້າໃນການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນ ມີພຽງພໍ ແລະ ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ລະດັບລະ 42.9 % ແຕ່ ນັກສຶກສາພັດສະແດງຄວາມຄິດເຫັນ ມີພຽງພໍ ກວມຈຳນວນຄົນຫຼາຍທີ່ສຸດ 43 %. 10) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການນຳໃຊ້ກິດຈະກຳ ແລະ ສື່ການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນ

ລະດັບ ປານກາງ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ 50 % ແລະ ນັກສຶກສາ ກວມເອົາ 46.5 %. 11) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານຄຸນນະພາບກິດຈະກຳ ແລະ ສື່ການຮຽນ-ການສອນ ແມ່ນມີຄວາມແຕກຕ່າງກັນໃນຫຼາຍລະດັບຄື ຄູສອນໃຫ້ຄວາມຄິດເຫັນ ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ 50 %, ແຕ່ ນັກສຶກສາ ພັດສະແດງຄວາມຄິດເຫັນ ດີຫຼາຍ ແລະ ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ລະດັບລະ 46.1 %. 12) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການຈັດສັນ ແລະ ສ້າງສະພາບແວດລ້ອມສິ່ງເສີມການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ເໝາະສົມປານກາງກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 65.7 % ແລະ ນັກສຶກສາ ກວມເອົາ 41.7 %. 13) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານການມີສ່ວນຮ່ວມກັບຊຸມຊົນເພື່ອສ້າງການມີສ່ວນຮ່ວມການປະຕິບັດຫຼັກສູດການຮຽນ-ການສອນ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ມີປານກາງ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ 80 % ແລະ ນັກສຶກສາ ກວມເອົາ 67 %. ຈາກຜົນການຄົ້ນຄ້ວາຂ້າງເທິງນັ້ນເຫັນວ່າວິທະຍາໄລຄູ ສາລະວັນ ດຳເນີນການຮຽນ-ການສອນແບບເຊິ່ງໜ້າ ໃນໄລຍະພາກຮຽນທີ1 ໂດຍປະຕິບັດຕາມຫຼັກສູດການຮຽນ-ການສອນຕາມທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ, ໂດຍເນັ້ນໃສ່ 5 ຫຼັກມູນການສຶກສາ ແລະ ຮັບປະກັນ 3 ຫຼັກສະນະ, ເພື່ອໃຫ້ຮັບປະກັນຄຸນນະພາບໃນການຈັດຫານຮຽນ-ການສອນ, ຍັງໄດ້ມີການຈັດແບ່ງ ແລະ ຊັບຊ້ອນ ພະນັກງານຄູສອນ ຕາມລາຍວິຊາສະເພາະທີ່ຮຽນຈົບ ແລະ ແບ່ງປັນຊົ່ວໂມງສອນທີ່ເໝາະສົມ. ເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງທາງດ້ານສັງຄົມ ຄູ-ອາຈານທີ່ສອນໃນສະຖາບັນໄດ້ຈັດການຮຽນ-ການສອນທີ່ເນັ້ນໃຫ້ຜູ້ຮຽນໄດ້ປະຕິບັດຕົວຈິງຫຼາຍຂຶ້ນ, ຄຽງຄູ່ກັນນັ້ນວິທະຍາໄລຄູສາລະວັນ ຍັງສາມາດຕອບສະໜອງແຫ່ງການຮຽນຮູ້ເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ ແລະ ອຸປະກອນອື່ນໆໄດ້ຈຳນວນໜຶ່ງ. ພ້ອມກັນນັ້ນຍັງມີການຊຸກຍູ້ໃຫ້ມີການນຳໃຊ້ເຕັກໂນໂລຊີ ທີ່ທັນສະໃໝເຂົ້າໃນການຈັດການຮຽນ-ການສອນ ແລະ ມີການນຳໃຊ້ສື່ການຮຽນ-ການສອນທີ່ຫຼາກຫຼາຍ ໃນລາຍວິຊາຕ່າງໆ, ເຊິ່ງຂໍ້ມູນດັ່ງກ່າວນີ້ສອດຄ່ອງກັບ**ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານດ້ານວິຊາການ** (2021-2022) ທີ່ກ່າວວ່າ ວິທະຍາໄລຄູສາລະວັນເປັນສະຖານການສຶກສາໜຶ່ງ ທີ່ເຮັດໜ້າທີ່ໃນການສ້າງຄູຫຼາຍສາຂາວິຊາໃນເຂດບໍລິການ ສອງແຂວງ: ສາລະວັນ, ເຊກອງ ແລະ ບັນດາແຂວງພາກກາງ-ໃຕ້ຈຳນວນໜຶ່ງ ໃນການດຳເນີນການຮຽນ-ການສອນແມ່ນປະຕິບັດຕາມຫຼັກສູດສ່ວນກາງທີ່ເນັ້ນ 3 ລັກສະນະ, 5 ຫຼັກມູນຂອງການສຶກສາແຫ່ງຊາດ ມີການຈັດແບ່ງ ຊົ່ວໂມງສອນຢ່າງເໝາະສົມ ແລະ ຊັບຊ້ອນຄູສອນຕາມລາຍວິຊາສະເພາະຂອງໃຜລາວ ສາມາດຕອບສະໜອງ ແຫຼ່ງກຫານຮຽນຮູ້ເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງຟັງສຽງ, ຫ້ອງສື່, ຫ້ອງຝຶກສອນ ໄດ້ໃນລະດັບພື້ນຖານ, ມີການນຳໃຊ້ສື່, ວັດຖຸ-ອຸປະກອນ ແລະ ເຕັກໂນໂລຊີທີ່ທັນສະໃໝ ເຂົ້າໃນການຮຽນ-ການສອນ ເພື່ອດຶງດູດ ແລະ ສ້າງແຮງຈູງໃຈໃຫ້ແກ່ຜູ້ຮຽນ...,

**ສະພາບການຈັດການຮຽນ-ການສອນແບບອອນໄລນ໌ມີຄື:** 1) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານ ໄດ້ມີການແນະນຳຫຼືຝຶກອົບຮົມຂີດຄວາມສາມາດນຳໃຊ້ເຕັກໂນໂລຊີ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ປະຕິບັດປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 70 % ແລະ ນັກສຶກສາ ກວມເອົາ 60 %. 2) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານ ປະສົບການກ່ຽວກັບລະບຽບໃນການຈັດການຮຽນ-ການສອນແບບອອນໄລນ໌ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ຮູ້ປານກາງ ກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 60 % ແລະ ນັກສຶກສາກວມເອົາ 65.2 %. 3) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບດ້ານ ຄວາມຖີ່ໃນການຈັດຕັ້ງການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ບາງຄັ້ງ ກວມຈຳນວນຄົນ

ຫຼາຍທີ່ສຸດ ຄູສອນກວມເອົາ 50 % ແລະ ນັກສຶກສາ ກວມເອົາ 58.7 %. 4) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ ດ້ານ ການນຳໃຊ້ອຸປະກອນໄອຊີທີ (ICT) ເຂົ້າໃນການຮຽນ-ການສອນແແບບອອນໄລນ໌ຫຼາຍທີ່ສຸດ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ຄື ຄູສອນໃຫ້ຄວາມຄິດເຫັນ ໃຊ້ຄອມພິວເຕີແບບພົກພາ ກວມຈຳນວນຄົນຫຼາຍທີ່ສຸດ 71.4 % ແຕ່ນັກສຶກສາພັດ ໃຊ້ໂທລະສັບ ກວມຈຳນວນຄົນຫຼາຍທີ່ສຸດ 47.8 %. 5) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານ ການນຳໃຊ້ເຄື່ອງມືເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ຫຼາຍທີ່ສຸດ ສ່ວນຫຼາຍແຕກຕ່າງກັນໃນຫຼາຍລະດັບຄື ທັງຄູສອນ ແລະ ນັກສຶກສາ ແມ່ນນຳໃຊ້ຊູມ (Zoom) ກວມຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 48.6 % ແລະ ນັກສຶກສາກວມເອົາ 36.5 %. 6) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ ດ້ານປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມຄິດເຫັນ ແຕກຕ່າງກັນໃນຫຼາຍລະດັບຄື ທັງຄູສອນ ແລະ ນັກສຶກສາໃຊ້ຂໍ້ມູນມືຖື (Mobile Data) ກວມເອົາຈຳນວນຄົນຫຼາຍທີ່ສຸດ, ຄູສອນກວມເອົາ 50 % ແລະ ນັກສຶກສາກວມເອົາ 84.3 %. 7) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານປະເພດຂອງອິນເຕີເນັດທີ່ໃຊ້ເຂົ້າໃນການຈັດການຮຽນ-ການສອນແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ແພງ ຄູສອນກວມຈຳນວນຄົນຫຼາຍທີ່ສຸດ 44.3 %, ແຕ່ນັກສຶກສາພັດ ແພງຫຼາຍກວມຈຳນວນຄົນຫຼາຍທີ່ສຸດ 34.8 %. 8) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ດ້ານທ່ານມີຄວາມຊຳນານໃນການຈັດການຮຽນ-ການສອນແບບແບບອອນໄລນ໌ ສ່ວນຫຼາຍມີຄວາມແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ດີ ກວມຈຳນວນຄົນຫຼາຍທີ່ສຸດ, ຄູສອນກວມເອົາ 50 %, ແລະ ນັກສຶກສາ ກວມເອົາ 31.7 %. 9) ຄວາມຄິດເຫັນຂອງຄູສອນ ແລະ ນັກສຶກສາ ຕໍ່ກັບສະພາບການຮຽນ-ການສອນແບບອອນໄລນ໌ ດ້ານບ່ອນທີ່ທ່ານອາໄສຢູ່ ສາມາດເຊື່ອມຕໍ່ອິນເຕີເນັດໄດ້ຢ່າງງ່າຍດາຍ ສ່ວນຫຼາຍມີຄວາມຄິດເຫັນແຕກຕ່າງກັນໃນຫຼາຍລະດັບ ໃນນັ້ນລະດັບ ດີ ກວມເອົາຈຳນວນຄົນຫຼາຍທີ່ສຸດ ຄູສອນກວມເອົາ 40 % ແລະ ນັກສຶກສາກວມເອົາ 40.4 %. ໝາຍຄວາມວ່າ ວິທະຍາໄລຄູສາລະວັນດຳເນີນການຝຶກອົບຮົມໃນການສ້າງຂີດຄວາມສາມາດໃນການນຳໃຊ້ເຕັກໂນໂລຊີ ຍັງມີລັກສະນະຈຳກັດ, ປະສົບການໃນການຈັດການຮຽນ-ການສອນ ແບບອອນໄລນ໌ ຍັງບໍ່ຫຼາຍ, ຄູ-ອາຈານບາງທ່ານ ດຳເນີນການສອນບໍ່ປົກກະຕິ, ການນຳໃຊ້ເຄື່ອງມືເຕັກໂນໂລຊີ ຍັງບໍ່ທັນຊຳນິຊຳນານ, ເຄື່ອງມືເອເລັກໂທນິ ທີ່ໃຊ້ເຂົ້າສອນ ຍັງຈຳກັດ ບໍ່ຫຼາກຫຼາຍ ສ່ວນຫຼາຍ ຄູສອນນຳໃຊ້ເຄື່ອງໄອຊີທີ ເຊັ່ນ: ໂທລະສັບ, ຄອມພິວເຕີ ແລະ ວາຍຟາຍອິນເຕີເນັດ ສ່ວນຕົວ, ສ່ວນນັກສຶກສາ ແມ່ນໃຊ້ພຽງແຕ່ ໂທລະສັບ ເປັນສ່ວນໃຫຍ່, ການນຳໃຊ້ອິນເຕີເນັດຂອງຄູສອນ ແລະ ນັກສຶກສາ ສ່ວນຫຼາຍແມ່ນນຳໃຊ້ ຂໍ້ມູນມືຖື(Mobile Data) ເຊິ່ງນຳໃຊ້ງົບປະມານຂ້ອນຂ້າງສູງ, ນັກສຶກສາບາງຄົນ ຢູ່ເຂດຫ່າງໄກສອກຫຼີກ ສັນຍານອິນເຕີເນັດ ເຂົ້າບໍ່ເຖິງ ຈຶ່ງເປັນບັນຫາໃນການຈັດການຮຽນກຽນ-ການສອນແບບອອນໄລນ໌ ໝາຍຄວາມວ່າ ນັກສຶກສາບໍ່ສາມາດເຂົ້າຮຽນໄດ້, ເຊິ່ງຂໍ້ມູນດັ່ງກ່າວນີ້ສອດກັບບົດສະຫຼຸບການຈັດຕັ້ງປະຕິບັດວຽກງານດ້ານວິຊາການ ປະຈຳພາກຮຽນທີ່2 (2021-2022) ຂອງວິທະຍາໄລຄູສາລະວັນ ທີ່ກ່າວວ່າ: ການດຳເນີນການຮຽນ-ການສອນແບບເຊິ່ງໜ້າ ໃນພາກຮຽນທີ່2 ບໍ່ສາມາດດຳເນີນການຮຽນ-ການສອນແບບເຊິ່ງໜ້າໄດ້, ເພາະເປັນຊ່ວງການແຜ່ລະບາດຂອງພະຍາດ ໂຄວິດ-19, ວິທະຍາໄລຄູສາລະວັນໄດ້ກາຍເປັນສູນກັກຕົວ ແລະ ປິ່ນປົວພະຍາດ ໂຄວິດ 19 ເຮັດໃຫ້ວິທະຍາໄລຄູສາລະວັນ ທັນທີດຈາກການດຳເນີນການຮຽນ-ການສອນແບບເຊິ່ງໜ້າ ເປັນການສອນແບບອອນໄລນ໌ ເຊິ່ງເປັນຮູບແບບການສອນແບບທາງໄກ ທີ່ຜູ້ຮຽນ ແລະ ຜູ້ສອນ ຢູ່ສະຖານທີ່ ທີ່ແຕກຕ່າງກັນ ໂດຍມີການນຳໃຊ້ສື່ ເຕັກໂນໂລຊີ ເຊັ່ນ: ຄອມພິວເຕີ, ໂທລະສັບ

ສະມາດໂຟນ, ເຄືອຄ່າຍອິນເຕີເນັດ ເຂົ້າມາຊ່ວຍ ແລະ ເປັນສື່ກາງໃນການສອນລະຫວ່າງຄູສອນ ແລະ ນັກສຶກສາ ເຊິ່ງຂໍ້ຈຳກັດໃນການດຳເນີນການຮຽນ-ການສອນແບບອອນໄລນ໌ ກໍ່ຄື: ຄູສອນ ແລະ ນັກສຶກສາ ບາງຈຳນວນຍັງຂາດປະສົບການໃນການຮຽນ-ການສອນແບບອອນໄລນ໌ ຄວາມຮູ້ທາງດ້ານການນຳໃຊ້ເຕັກໂນໂລຊີ ຍັງຈຳກັດ, ນັກສຶກສາທີ່ຢູ່ເຂດຫ່າງໄກສອກຫຼີກ ຍັງບໍສາມາດເຂົ້າເຖິງການຮຽນ-ການສອນແບບອອນໄລນ໌ໄດ້ ເນື່ອງຈາກວ່າ ສັນຍານອິນເຕີເນັດບໍສາມາດເຂົ້າເຖິງ, ຄູສອນ ແລະ ນັກສຶກສາບາງຄົນ ຍັງຂາດອຸປະກອນ ໃນການດຳເນີນການຮຽນ-ການອນສອນແບບອອນໄລນ໌, ການຕິດຕາມຊ່ວຍເຫຼືອນັກສຶກສາຂອງຄູ ຍັງບໍ່ທົ່ວເຖິງ, ມີການນຳໃຊ້ງົບປະມານຂ້ອນຂ້າງສູງ ເຊິ່ງເປັນງົບປະມານສ່ວນຕົວຂອງຄູ ແລະ ນັກສຶກສາ.

**2. ຄູສອນ ແລະ ນັກສຶກສາ ມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນແບບເຊິ່ງໜ້າ ແລະ ແບບອອນໄລນ໌ມີຄື:**

ຄູ**ສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນ ແບບອອນໄລນ໌**: 1) ຄູສອນ ແລະ ນັກສຶກສາ ດ້ານຄວາມເພິ່ງພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ໃນນັ້ນຄູສອນມີຄ່າສະເລ່ຍລວມ 3.21 ແລະ ນັກສຶກສາ 3.00. 2) ດ້ານຄວາມເພິ່ງພໍໃຈໃນເຫດຜົນສ່ວນຕົວຂອງຄູສອນ ຕໍ່ກັບຮູບແບບອອນໄລນ໌ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ຄູສອນມີຄ່າສະເລ່ຍລວມ 3.33 ແລະ ນັກສຶກສາ 3.11. 3) ດ້ານຄວາມພໍໃຈຕໍ່ກັບຄວາມສາມາດຂອງຄູສອນໃນຮູບແບບອອນໄລນ໌ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ຄູສອນມີຄ່າສະເລ່ຍລວມ 3.21 ແລະ ນັກສຶກສາ 3.12. 4) ດ້ານຄວາມພໍໃຈຕໍ່ສິ່ງອຳນວຍຄວາມສະດວກໃນຮູບແບບອອນໄລນ໌ ໂດຍສະເລ່ຍລວມຢູ່ໃນລະດັບປານກາງ ຄູສອນມີຄ່າສະເລ່ຍລວມ 3.38 ແລະ ນັກສຶກສາ 3.40. ສະຫຼຸບໄດ້ວ່າ ທັງຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ**ຕໍ່ກັບການຈັດການຮຽນ-ການສອນ ແບບອອນໄລນ໌**ໃນລະດັບປານກາງ ເພາະວ່າສະພາບຂອງການການຈັດການຮຽນການສອນແບບອອນໄລນແມ່ນເປັນໄລຍະທີ່ສືບຕໍ່ຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງການກະກຽມຄວາມພ້ອມດ້ານຕ່າງໆໃຫ້ແກ່ການ**ການຈັດການຮຽນ-ການສອນ ແບບອອນໄລນ໌** ສາລັບຄູສອນ ແລະ ນັກສຶກສາພາຍໃນວິທະຍາໄລຄູສາລະວັນຍັງບໍ່ທັນເຂັ້ມແຂງເທື່ອໂດຍສະເພາະ ດ້ານວັດຖຸອຸປະກອນເຊັ່ນ: ລະບົບອິນເຕີເນັດຍັງບໍ່ທົ່ວເຖິງ, ສັນຍານອິນເຕີເນັດທັງຢູ່ໂຮງຮຽນ ແລະ ຢູ່ທ້ອງຖິ່ນບໍ່ສະຖຽນ ເຮັດໃຫ້ການສອນທີ່ນຳໃຊ້ແບບໄລນສົດບໍ່ຕໍ່ເນື່ອງ. ໃນຂະນະດຽວກັນ, ຄວາມຮູ້ ແລະ ທັກສະນໃນການສ້າງສື່ ຫຼື ບົດຮຽນສຳລັບການສອນອອນໄລນຂອງຄູກໍຍັງບໍ່ທັນມີຄວາມຊຳນິຊຳນານ ເຮັດໃຫ້ການຈັດກິດຈະກຳການຮຽນ ຫຼື ການສອນແບບອອນໄລນບໍ່ມີຄວາມລາບລື້ນ ບັນດາບັນຫາ ຫຼື ຂໍ້ຈຳກັດເຫຼົ່ານີ້ອາດເປັນສາເຫດຫຼັກທີ່ເຮັດໃຫ້ທັງຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ**ຕໍ່ກັບການຈັດການຮຽນ-ການສອນ ແບບອອນໄລນ໌**:ໃນລະດັບປານກາງ. ສະນັ້ນ, ເມື່ອນາມາສົມທຽບກັບການປະຕິບັດຕົວຈິງຈຶ່ງເຫັນວ່າ: ຖ້າຄູສອນຍັງຂາດທັກສະທາງງດ້ານການນຳໃຊ້ໄອຊີທີເຂົ້າໃນການຮຽນການສອນກໍຈະເຮັດໃຫ້ຜົນສຳເລັດທາງການຮຽນບໍ່ມີຜົນສຳເລັດສູງ ພ້ອມດຽວກັນນັ້ນ, ນັກຮຽນກໍບໍ່ສາມາດເຂົ້າເຖິງ ແລະ ບໍ່ມີຄວາມສະດວກໃນການນຳໃຊ້ອຸປະກອນ ຫຼື ສິ່ງອຳນວຍຄວາມສະດວກຕໍ່ການຮຽນ ກໍຈະເຮັດໃຫ້ຜູ້ຮຽນບໍ່ມີຄວາມສົນໃຈ ແລະ ບໍ່ໃຫ້ຄວາມສຳຄັນຕໍ່ສິ່ງນັ້ນ, ຂໍ້ຈຳກັດນີ້ແມ່ນສອດຄ່ອງກັບທັດສະນະຂອງທ່ານຈິກເກີລິນ ແລະ ທ່ານ ເກມສັນ (Chickering, A. W., & Gamson, Z. F) ທີ່ໄດ້ກຳນົດຂໍ້ຈຳກັດຂອງການຈັດການຮຽນ-ການສອນແບບອອນໄລນ໌ ( 1999). ໂດຍລວມແລ້ວ, ການຈັດການຮຽນການສອນແບບອອນໄລນ໌ໃຫ້ມີປະສິດທິພາບ ຫຼື ຄຸນນະພາບດີນັ້ນ ອີງກອນ, ໂຮງຮຽນ, ພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ສ້າງຄວາມພ້ອມທຸກຢ່າງໆບໍ່ວ່າຈະເປັນດ້ານພື້ນຖານໂຄງລ່າງ, ຄວາມຮູ້, ຄວາມສາມາດ ຫຼື ທັກສະຂອງຄູສອນ ແລະ ນັກສຶກສາໂດຍສະເພາະໂຮງຮຽນ ແລະ ຄູສອນຕ້ອງໄດ້ເປັນຜູ້ຂັບເຄື່ອນ ແລະ ພັດທະນາອີງ

ຄວາມຮູ້, ຄວາມສາມາດ ແລະ ທັກສະເຂົ້າໃນການຈັດຕັ້ງການຮຽນ-ການສອນ, ການພັດທະນາກິດຈຳກຳ ແລະ ເຄື່ອງມືການສອນ ທີ່ຮັບປະກັນປະສິດທະພາບ ແລະ ປະສິດທິຜົນສູງ. ທ່ານ (Richey, Fields, & Foxon, 2001:26); ທ່ານ (Williams, 2003) **ອ້າງອີງໃນ** ທ່ານ Martin, F., et al., (2019).

**ຄູສອນ ແລະ ນັກສຶກສາມີຄວາມເພິ່ງພໍໃຈ ຕໍ່ກັບການຈັດການຮຽນ-ການສອນ**ແບບເຊິ່ງໜ້າ 1) ດ້ານຄວາມພໍໃຈຕໍ່ກັບການພັດທະນາຄວາມຮູ້ດ້ານເຕັກໂນໂລຊີໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບຫຼາຍ ຄູສອນມີຄ່າສະເລ່ຍລວມ 4.12 ແລະ ນັກສຶກສາ 3.99. 2) ຄູສອນ ແລະ ນັກສຶກສາ ດ້ານຄວາມພໍໃຈໃນເຫດຜົນສ່ວນຕົວຂອງຄູສອນໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບຫຼາຍ ຄູສອນມີຄ່າສະເລ່ຍລວມ 4.30 ແລະ ນັກສຶກສາ 3.96. 3) ດ້ານຄວາມພໍໃຈຕໍ່ກັບຄວາມສາມາດຂອງຄູສອນໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບຫຼາຍ ຄູສອນມີຄ່າສະເລ່ຍລວມ 4.23 ແລະ ນັກສຶກສາກວມເອົາ 3.92. 4) ດ້ານຄວາມພໍໃຈຕໍ່ສິ່ງອຳນວຍຄວາມສະດວກໃນຮູບແບບເຊິ່ງໜ້າ ໂດຍສະເລ່ຍລວມຢູ່ໃນລະດັບ ພໍໃຈຫຼາຍ ຄູສອນມີຄ່າສະເລ່ຍລວມ 3.95 ແລະ ນັກສຶກສາກວມເອົາ 3.82. ສັງລວມໄດ້ວ່າ: ທັງຄູຜູ້ສອນ ແລະ ນັກສຶກສາຕ່າງກໍມີຄວາມເພິ່ງພໍໃຈ**ຕໍ່ກັບການຈັດການຮຽນ-ການສອນ**ແບບເຊິ່ງໜ້າໃນລະດັບຫຼາຍ ໝາຍຄວາມວ່າ ຮູບແບບ**ການຈັດການຮຽນ-ການສອນ**ແບບເຊິ່ງໜ້າເປັນຮູບບແບບທີ່ໄດ້ສືບຕໍ່ປະຕິບັດກັນມາຫຼາຍປີມາແລ້ວ ແຕ່ຜົນການຈັດການຮຽນ-ການສອນແບບດັ່ງກ່າວກໍຍັງມີຄວາມສຳຄັນ ແລະ ມີຜົນສຳເລັດສູງຕະຫຼອດມາ. ເພາະວ່າ**ການຈັດການຮຽນ-ການສອນ**ແບບເຊິ່ງໜ້າໄດ້ເຮັດໃຫ້ຜູ້ສອນ ແລະ ຜູ້ຮຽນມີປະຕິສຳພັນໂຕ້ຕອບເຊິ່ງກັນ ແລະ ກັນໃນທັນທີທັນໃດໂລດ. ຄູຜູ້ສອນສາມາດນຳໃຊ້ບຸກຄະລິກ, ທ່າທາງ ຫຼື ພອນສະຫວັນ ດ້ານຕ່າງໆໃນການກະຕຸ້ນ ຫຼື ຂັບເຄື່ອນຂະບວນການຮຽນຮູ້ໃນຫ້ອງຮຽນໃຫ້ມີບັນຍາກາດ ແລະ ມີຄວາມສຳຄັນຫຼາຍທີ່ສຸດໃນຫ້ອງຮຽນ. ທ່ານ ເພີຍ ແລະ ທ່ານ ຫວູ (Pei, L., & Wu, H., 2019) ໄດ້ໃຫ້ທັດສະນະວ່າ ການຈັດການຮຽນ-ການສອນແບບເຊິ່ງໜ້າເປັນວິທີການສິດສອນທີ່ໄດ້ຮັບຄວາມນິຍົມສູງ ເພາະວ່າການສອນແບບເຊິ່ງໜ້າ ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ຮຽນໄດ້ດີສຳລັບນັກຮຽນທີ່ມີຄວາມຕ້ອງການຢາກເຂົ້າຮ່ວມຫ້ອງຮຽນແບບເຊິ່ງໜ້າ ແລະ ການເຮັດກິດຈະກຳຮ່ວມກັນໃນຫ້ອງຮຽນ. ສະນັ້ນ, ສາມາດເວົ້າໄດ້ວ່າຮູບແບບຂອງການຈັດການຮຽນ-ການສອນແບບເຊິ່ງໜ້າຍັງເປັນຮູບແບບໜຶ່ງທີ່ບັນດາສະຖານການສຶກສາທັງພາຍໃນ ແລະ ຕ່າງປະເທດຍັງສືບຕໍ່ນຳໃຊ້ ເພື່ອເຮັດໃຫ້ຮູບແບບການຈັດການຮຽນ-ການສອນດັ່ງກ່າວມີປະສິດທິພາບ ແລະ ຜົນສຳເລັດທາງການຮຽນຂອງຜູ້ຮຽນມີຄຸນນະພາບດີຍິ່ງຂຶ້ນ ຫຼາຍສະຖານການສຶກສາກໍໄດ້ຄົ້ນຄິດວິທີການຮຽນ, ວິທີການສອນທີ່ນຳໃຊ້ຮູບແບບການສອນແບບເຊິ່ງໜ້າເປັນພື້ນ ແລ້ວແຊກຊ້ອນຂະບວນການຕ່າງໆເຂົ້າມາຊ່ອຍບໍ່ວ່າເປັນວິທີການສອນແບບແກ້ບັນຫາ, ວິທີສອນແບບສືບຮູ້, ວິທີສອນແບບທົດລອງ, ວິທີສອນແບບປະສົມປະສານລະຫວ່າງເຊິ່ງໜ້າ ແລະ ອອນໄລນ ແລະ ວິທີອື່ນໆອີກ. ສະນັ້ນ, ສາມາດຕີລາຄາໄດ້ວ່າ ທັງຄູສອນ ແລະ ນັກສຶກສາແມ່ນມີຄວາມເພິ່ງພໍໃຈຕໍ່ຫານຈັດການຮຽນ-ການສອນແບບເຊິ່ງໜ້າໃນລະດັບຫຼາຍ ເຊິ່ງເປັນຜົນຄົ້ນຄວ້າທີ່ມີຄວາມໃກ້ຄຽງກັບທັດສະນະຂອງນັກການສຶກສາ ແລະ ຜົນຄົ້ນຄວ້າຂອງນັກວິໄຈທ່ານອື່ນໆ.

## 5.3 ຂໍ້ແນະນຳ

### ຂໍ້ແນະນຳສຳລັບຜົນການຄົ້ນຄວ້າ

ສຳລັບຜົນການຄົ້ນຄວ້າໃນຄັ້ງນີ້ເປັນການປຽບທຽບລະຫວ່າງການຈັດການສອນແບບເຊິ່ງໜ້າ ກັບການຈັດການສອນແບບອອນໄລນສຳລັບຄູສອນ ແລະ ນັກສຶກສາພາຍໃນວິທະຍາໄລຄູສາລະວັນ ປະຈຳສົກຮຽນ 2021-2022

ເຊິ່ງຜົນການຄົ້ນຄວ້າໄດ້ຊີ້ໃຫ້ເຫັນວ່າ ມີຂໍ້ດີ ແລະ ຂໍ້ຈຳກັດທີ່ແຕກຕ່າງກັນ. ແຕ່ລະຮູບແບບມີຜົນສຳເລັດຫຼາຍໜ້ອຍຕ່າງກັນ. ສະນັ້ນ, ທີມງານຜູ້ວິໄຈຈິ່ງມີຂໍ້ແນະນຳສຳລັບຜົນການຄົ້ນຄວ້າດັ່ງນີ້:

ສືບຕໍ່ນຳໃຊ້ຮູບແບບການຈັດການຮຽນ-ການສອນແບບເຊິ່ງໜ້າ ໂດຍໝູນໃຊ້ ຫຼື ນຳໃຊ້ເຕັກນິກວິທີການທີ່ສາມາດນຳເອົາເຕັກໂນໂລຊີຂໍ້ມູນ-ຂ່າວສານເຂົ້າມາຊ່ວຍເພື່ອເພີ່ມປະສິດທິພາບຂອງການຮຽນ-ການສອນໃຫ້ສູງຂຶ້ນ.

ສືບຕໍ່ນຳໃຊ້ຮູບແບບການຈັດການຮຽນ-ການສອນແບບອອນໄລນ໌ ຫຼື ແບບທາງໄກໃນບາງຫົວຂໍ້, ບາງເນື້ອໃນທີ່ຄູຜູ້ສອນບໍ່ສາມາດຈັດກິດຈະກຳດ້ວຍຕົນເອງໄດ້ ເຊິ່ງຈະຊ່ວຍໃຫ້ຜູ້ຮຽນໄດ້ຮັບປະສົບການໃໝ່ຈາກຜູ້ຊ່ຽວຊານ ແລະ ໃນຂະນະດຽວກັນທາງສະຖານການສຶກສາກໍສາມາດປະຫຍັດງົບປະມານນຳອີກ.

ອີງໃສ່ຜົນການຄົ້ນຄວ້າ ພວກເຮົາບໍ່ສາມາດຕັດແຍກວິທີການຮຽນ-ການສອນແບບໃດແບບໜຶ່ງອອກໄດ້, ຂໍແນະນຳໃຫ້ຄູສອນນຳໃຊ້ຮູບແບບປະສົມປະສານທັງແບບເຊິ່ງໜ້າ ແລະ ແບບອອນໄລນ໌.

**ຂໍ້ແນະນຳສຳລັບການຄົ້ນຄວ້າໃນຄັ້ງຕໍ່ໄປ**

ປັດຈຸບັນການຈັດການຮຽນ-ການສອນແບບປະສົມປະສານໄດ້ຮັບຄວາມນິຍົມ ແລະ ກຳລັງລິເລີ່ມຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເຮົາ ຈິ່ງຂໍແນະນຳສືບຕໍ່ເຮັດການຄົ້ນຄວ້າກ່ຽວກັບການຈັດການຮຽນ-ການສອນແບບປະສົມປະສານທີ່ລົງເລິກໃນແຕ່ລະລາຍວິຊາໃນລະດັບທ້ອງຖິ່ນ ຫຼືລະດັບສະຖານການສຶກສາໃດໜຶ່ງ.

# ເອກະສານອ້າງອີງ

# ເອກະສານອ້າງອີງ


ກະຊວງສຶກສາ ແລະ ກິລາ. (2016). *ປະຫັວດຄວາມເປັນມາຂອງສູນເທັກໂນໂລຢີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ.* ວັນທີ 18 ເດືອນ 2017 http//www.moe.gov.la.

ກະຊວງສຶກສາທິການ ແລະ ກິລາ. ( 2013). *ຄູປ່ຽນແປງໜ້າທີ່ໃໝ່ໃຫ້ທັນກັບເທັກໂນໂລຢີ.* ເອົາມາ http://www.moe.go.th/moe/th/news/detail.php?NewsID=34113&Key=hotnews.

ກະຊວງສຶກສາທິການ ແລະ ກິລາ. ( 2021). *ຄໍາສັ່ງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ.* ສະບັບເລກທີ 421/ສສກ, ລົງວັນທີ 21 ເມສາ.

ກະຊວງສຶກສາທິການ ແລະ ກິລາ. (2015). *ວິໄສທັດຮອດປີ 2030ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງວັນທີ VIII (2016-2025).* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2016). *ແຜນພັດທະນາໄອຊີທີສໍາລັບການສຶກສາ ແລະ ກິລາ 2016-2020.* http://www.moe.gola/ict/plan5.pdf.

ກະຊວງສຶກສາທິການ ແລະ ກິລາ. (2021). *ຂໍ້ຕົກລົງ ວ່າດ້ວຍການອະນຸມັດນໍາໃຊ້ເອກະສານທິດທາງການຈັດຕັ້ງການຮຽນ-ການສອນສໍາລັບສາມັນສຶກສາໃນສະພາບທີ່ມີການລະບາດຂອງພະຍາດCOVID-19 ເລກທີ 3868/ສສກ, ວັນທີ 6/9/2021.* ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (ຕຸລາ 2020:147). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025 ).*

ກະຊວງແຜນການ ແລະ ການລົງທຶນ. (2016: i). *ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ ( 2016-2025).* ນະຄອນຫຼວງວຽງຈັນ: ກະຊວງແຜນການ ແລະ ການລົງທຶນ.

ກັນຈະນາ ບຸນພັກດີ. (2020:2). *ການຈັດການຮຽນ-ການສອນໃນຍຸກ New normal.* ວາລະສານອຸດສາຫະກາ.

ຂ່າວສໍານັກງານລັດຖະມຸນຕີ. (2013). *ເປີດການສົນທະນາ ICT ເພື່ອປະຕິບັດການຮຽນ-ການສອນ.* ເອົາມາ http://www.moe.go.th/websm/2013/aug/275.html.

ຈາລຸຊາ ເມຄະສຸວັນ. (2012: 60). *ຜົນການໃຊແບບຝຶກທັກສະການອ່ານວິຊາພາສາອັງກິດໂດຍໃຊການຮຽນແບບຮ່ວມມືກັນຮຽນເທັກນິກ STAD ສໍາລັບນັກຮຽນຊັ້ນມັດທິມສຶກສາປີທີ່ 5. ວິທະຍານິພົນ ຄະລຸສາດມະຫາບັນດິດ ສາຂາວິຊາຫຼັກສູດແລະການສອນ ມະຫາວິທະຍາໄລຣາດຊະພັດບຸຣີລໍາ.*

ສຸທິພົນ ຈິດມິດຕະພາບ. (2010). *ການປ່ຽນແປງໂລກຂອງການຮຽນຮູ້ໃນສັດຕະວັດທີ 21 ແລະ ການພັດທະນາສູ່ຄູມືອາຊີບໃນ ສຸດາພອນ ລັດສະໝີ ນາວິນ( ບັນນາທິການ ) 2010 ການຮຽນຮູ້ສູ່ການປ່ຽນແປງ ສະມາຄົມເຄືອຄ່າຍການພັດທະນາວິຊາຊີບອາຈານ ແລະ ໂຄງການອຸດົມສຶກສາ.* ບາງກອກ: ສານັກງານ ແລະ ກຳມະການອຸດົມສຶກສາ.

ສູນການສຶກສາຮຽນຮ່ວມ. (2015). *ອຸປະສກັ ກິດຂອງການເຂົ້າຮຽນ ແລະ ແຜນຍຸດທະວິທີທີ່ເປັນໄປໄດ້ໃນການເພີ່ມ ແລະ ການຮັກສາການເຂົ້າເຂົ້າຮຽນ ຂອງນັກຮຽນຊັ້ນມັດທະຍົມ: ໂຄງການພັດທະນາການສຶກສາຂັ້ນພື້ນຖານ. 35.*

ສູນສະເພາະກິດແນວທາງການນຈັດການຮຽນ-ການສອນທາງໄກຂອງໂຮງຮຽນສັງກັດສຳນັກງານຄະນະກຳມະການການສຶກສາຂັ້ນພື້ນຖານໃນສະຖານະການແຜ່ລະບາດຂອງພະຍາດໂຄວິດ 19. (2021, 6 22). *2.* ເອົາມາ https://covid19.obec.go.th/.

ຊະຫວິຫວັນ ປຣະນາມະສາ. (2004: 69). *ການພັດທະນາການຈັດກິດຈະກຳການຮຽນຮູ້ພາສາໄທເລື່ອງ ການອ່ານຈັບໃຈຄວາມຊັ້ນປະຖົມສຶກສາປີທີ່ 6 ໂດຍໃຊ້ເທັກນິກ 9 ຄຳຖາມ. ວິທະຍານິພົນການສຶກສາມະຫາບັນດິດ ສາຂາວິຊາຫຼັກສູດແລະການສອນ ມະຫາວິທະຍາໄລມະຫາສານຄາມ.*

*ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025.* (2016: 1). ນະຄອນຫຼວງວຽງຈັນ, ເມສາ 2016.

ບຸນຊຸມ ສີສະອາດ ພ້ອມຄະນະ. (2015). *ພື້ນຖານການວິໄຈການສຶກສາ.* ຄະນະສຶກສາສາດ, ມະຫາວິທະຍາໄລສາລະຄາມ: ຕັກສີລາການພິມ 205/4 ຈັງຫວັດມະຫາສາລະຄາມ.

ບຸນຊຸມ ສີສະອາດ ພ້ອມຄະນະ. (2015:113). *ພື້ນຖານການວິໄຈການສຶກສາ.* ຄະນະສຶກສາສາດ, ມະຫາວິທະຍາໄລສາລະຄາມ: ຕັກສີລາການພິມ 205/4 ຈັງຫວັດມະຫາສາລະຄາມ.

ບຸນທິບ ສິດທິລັງສີ. (2020:1-17). ການຈັດການຮຽນ ການສອນອອນໄລສູ້ກອບມາດຕະຖານວິຊາຊີບ. *Journal of Chulabhom Royal Academic,* 1-17.

*ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານດ້ານວິຊາການ .* (2021-2022). ວິທະຍາໄລຄູສາລະວັນ.

*ບົດສະຫຼຸບການຈັດຕັ້ງວຽກງານວິຊາການ ພາກຮຽນທີ່ 1.* (2021-2022). ວິທະຍາໄລຄູສາລະວັນ.

ພອນນີ ລິກິດລັດຕະນະ. (2013). *ການວິໄຈທາງການສຶກສາ.* ສະຖາບັນເທັກໂນໂລຢີພະຈອມເກົ້າຄຸນທະຫານລາດກະບັງ: ພີມຄັ້ງທີ 8.

ວິທະຍາໄລຄູສາລະວັນ. (2021: 10). *ບົດສະຫຼຸບ ແລະ ແຜນພັດທະນາວິທະຍາໄລຄູສາລະວັນ.*

ອະວິທຸດ ເທມມານຸຣັກ. (2017: 1-3). *ພາລະບົດບາດ ແລະຄວາມຮັບຜິດຊອບຂອງຄູສອນອອນໄລນ໌ ແລະໃນຫ້ອງຮຽນ.* ວິທິພີເດຍ ສາທານຸກົມ.

ອັກຄະລະສາດ ສາດສູງເນີນ. (2007: 45). *ການສຶກສາຜົນສຳເລັດແລະຄວາມເພິ່ງພໍໃຈໃນການຮຽນດ້ວຍບົດຮຽນອອນໄລທີ່ອອກແບບຕາມແນວຄິດການສ້າງຄວາມຮູ້ດ້ວຍຕົນເອງ ວິຊາວິທະຍາສາດ ຊັ້ນມັດທະຍົມສຶກສາປີທີ່ 2 ໂຮງຮຽນປະຕິສາມັນນະຄອນລາດຊະສີມາ. ວິທະຍານິພົນ ຄະລຸສາດ ມະຫາບັນດິດ ມະຫາວິທະຍາໄລລາດຊະພັດ ນະຄອນ.* ລະຄອນລາດຊະສີມາ.

ແຈ້ງການ. (2021). *ເລື່ອງ: ການຈັດຕັ້ງກິດຈະກຳການຮຽນການສອນຊ່ວງການລະບາດຂອງພະຍາດໂຄໂຣນາໄວຣັສ 2019 (COVID-19).*

ແຈ້ງການຂອງທ່ານເຈົ້າແຂວງໆ ສາລະວັນ. (ໄລຍະວັນທີ 23 ພຶດສະພາ 2021 ຫາ 5 ມິຖຸນາ 2021). *ວ່າດ້ວຍການປະຕິບັດມາດຕະການປ້ອງກັນ, ສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ 19 ຢູ່ແຂວງ ສາລະວັນ.*

ແຜນພັດທະນາ 5 ປີ ຂອງວິທະຍາໄລຄູສາລະວັນ. (2020-2024: 11). *ຍຸດທະສາດການສຶກສາ.* ວິທະຍາໄລຄູສາລະວັນ.

ແຜນພັດທະນາຂະແໜງການສຶກສາ. (2020: 148). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2020-2025).*

Ali Alghazo,. ( 2020). Comparing Effectiveness of Online and Traditional Teaching Using Students' Final Grades. Department of Workforce Education & Development Southern Illinois University Carbondale. Address: 407 E. Walnut St. apt D Carbondale, IL 62901.

Allen, I. E., & Seaman, J. (2014). *( Opening the Curriculum: Open Educational Resources in US Higher Education, 2014. Babson Survey Research Group.* 2014).

Berge, Z. L. . (1995). Facilitating computer conferencing: Recommendations from the field. Educational Technology, 15(1), 22–30.

Berge, Z. L. . . (1995). Facilitating computer conferencing: Recommendations from the field. Educational Technology, 15(1), 22–30.

California Community Colleges,. ( 2021). *Principles for Quality Online Teaching. Online Network of Educators.org.*

California Community Colleges,. ( 2021). Principles for Quality Online Teaching. Online Network of Educators.org.

Chickering, A. W., & Gamson, Z. F. ( 1999). Seven principles for good practice in undergraduate education. AAHE Bulletin, 39(7), 3-6. Retrieved from. *https://aahea.org/articles/sevenprinciples1987.*

Chickering, A. W., & Gamson, Z. F. (1999: 3). *Seven principles for good practice in undergraduate education. AAHE Bulletin, 39(7), 3-6. Retrieved from https://aahea.org/articles/sevenprinciples1987.*

Debasish Biswas & Chanchal De, . (2020). Offline vs. Online Education: Opportunities and Challenges in Indian context. Vidyasagar University: https://www. Research gate. Net Challenges in Indian context. Vidyasagar University: https://www. Research gate. Net /publication/350845225.

Debasish Biswas & Chanchal De,. (2020). Offline vs. Online Education: Opportunities and Challenges in Indian context. Vidyasagar University:. *https://www. Research gate. Net/publication/350845225.*

Debasish Biswas & Chanchal De,. ( 2020). Offline vs. Online Education: Opportunities and Challenges in Indian context. Vidyasagar University:. https://www. Research gate. Net/publication/350845225.

